ພຣະອຠິຘັມມັຕຖສັງຄຫະ

ປຣິຈເຉທີ່ ໔ (ເຈຕສິກປຣມັຕຖ)

ຣວບຣວມຣຽບຣຽງໂດຍ... ...ອາຈາຣຍ໌ໄພຑູຣຍ໌ ອິນທວົງສ໌

คู่มือการศึกษาพระอภิธัมม์

เจตสิกปรมัตถ

พระอภิธัมมัตถสังคหะ

ปริจเฉทที่ ๔

รจนาโดย....

พระอนุรุทธาจารย์

รวบรวมเรียบเรียงโดย...

...อาจารย์ไพฑูรย์ อินทวงศ์

Fresno...... California November 30 2557

ມູລນິທິ: ສຶກษາ-ປຏິບັຕິລັມມ໌ ເພື່ອເຜີຍແຜ່ພຣະພຸທລສາສນາ
ໂດຍ: ອາຈາຣຍ໌ ໄພฑູຣຍ໌ ອິນທວົງສ໌ ...ເຟຣສະໂນ ແຄລິຟໍເນັງ, ສຫຣັຖອເມຣິກາ
Telephone: (໕໕໙) ໙໐໕-໑໔໑໐
E-Mail: Pinthavong@hotmail.com
Website: https://sites.google.com/site/laothaidhamma

ຄຳນຳ

ປຶ້ມ *"ຄູ່ມືການສຶກษาພຣະອຟິລັມມັຕຖສັງຄຫະ ປຣິຈເฉທທີ່ ໔ (ເຈຕສິກປຣມັຕຖ)"* ຫົວນີ້ ໄດ້ຮວບຮວມຮຽບຮຽງຂຶ້ນ ໃຊ້ເປັນຄູ່ມື **ສຶກษาພຣະອຟິລັມມ໌** ໃຫ້ກັບເພື່ອນກັລຍານມິຕຣ໌ທຸກໆ ທ່ານ ແລະເພື່ອຊ່ວຍເຜີຍແຜ່ສຳຫລັບທ່ານທີ່ສົນໃຈ ທີ່ຢາກມີໄວ້ສຶກษาທາງອອນໄລນ໌ ເພາະເຫັນວ່າຈະຊ່ວຍເຜີຍແຜ່ການສຶກษาພຣະອຟິລັມມ໌ໃຫ້ກວ້າງຂວາງຂຶ້ນ ເພື່ອພວກເຮົາຊາວພຸທລຈະໄດ້ຊ່ວຍກັນສືບທອດວິຊາ "**ວິຊຊ**" ນີ້ໄວ້ໃຫ້ອນຸຊົນຮຸ່ນຫລັງ...ຯລຯ

ຜູ້ຂຽນຖວາຍປຶ້ມເຫລັ້ມນີ້ໄວ້ໃນພຸທລສາສນາ ຫາກວ່າທ່ານທີ່ຕ້ອງການຈັດພິມພ໌ເພື່ອເຜີຍແຜ່ເປັນລັມມະທານ ກໍຂໍຮ່ວມອນຸໂມທນາມາ ນະ ໂອກາສນີ້ດ້ວຍໂດຍບໍ່ຕ້ອງຂໍອນຸຍາຕຈາກຜູ້ຂຽນ ແຕ່ຜູ້ຂຽນບໍ່ອນຸຍາຕຫາກວ່າຈະພິມພ໌ເປັນການຄ້າອັນຫວັງຜົລກຳໄຣ ຜູ້ຂຽນຫວັງຢ່າງຍິ່ງວ່າປຶ້ມເຫລັ້ມນີ້ຈະໃຫ້ຄວາມຮູ້ທາງການສຶກษาພຣະລັມມ໌ໄດ້ເປັນຢ່າງດີ ຂໍໃຫ້ທ່ານຜູ້ອ່ານຈົງຈະເຣີນໃນພຣະລັມມ໌ຂອງພຣະສາສດາອຣຫັນຕ໌ສັມມາສັມພຸທລເຈົ້າທຸກ ໆ ທ່ານດ້ວຍເທີ້ນຯ

ສາຣບັຌ

ເຈຕສິກປຣມັຕຖ

ພຣະອភិທັມມັຕຖສັງຄຫະ ປຣິຈເຉທທີ່ ໒

****

ນໂມ ຕສ຺ສ ກຄວໂຕ ອຣຫໂຕ ສມ຺ມາສມ຺ພຸທ຺ສ຺ສ

ຄວາມເບື້ອງຕົ້ນ ໑
ເຈຕສິກຄືຫຍັງ? ໑
ເຈຕສິກທັ້ງ ໕໒ ແບ່ງເປັນ ໓ ປຣະເພທ ໒
ເຈຕສິກ ໕໒ ດວງ ໓
ອັຌຌສມານາເຈຕສິກ ໔
ສັພພຈິຕຕສາທາຣຓເຈຕສິກ ໔
ຜັສສເຈຕສິກ ໔
ເວທນາເຈຕສິກ ໕
ສັຌຌາເຈຕສິກ ໖
ເຈຕນາເຈຕສິກ ໖
ເອກັຄຄຕາເຈຕສິກ ໖
ຊີວິຕິນທຣິຍເຈຕສິກ ໗
ມນສິກາຣເຈຕສິກ ໗
ປກິຓຓກເຈຕສິກ ໘
ວິຕັກເຈຕສິກ້ ໘
ວິຈາຣເຈຕສິກ ໙
ອທິໂມກຂເຈຕສິກ ໙



ວິຣິຍເຈຕສິກ ໙
ປີຕິເຈຕສິກ ໑໐
ຉັນທເຈຕສິກ ໑໐
ອກຸສົລເຈຕສິກ ໑໔ .... ໑໑
ໂມຫເຈຕສິກ ໑໑
ອຫິຣິກເຈຕສິກ ໑໒
ອໂນຕຕັປປເຈຕສິກ ໑໓
ອຸທັຈຈເຈຕສິກ ໑໓
ໂລກເຈຕສິກ ໑໓
ທິຖິເຈຕສິກ ໑໔
ມານເຈຕສິກ ໑໕
ໂທສເຈຕສິກ ໑໖
ອິສສາເຈຕສິກ ໑໗
ມັຈຉຣິຍເຈຕສິກ ໑໗
ກຸກກຸຈຈເຈຕສິກ ໑໘
ຖີນເຈຕສິກ ໑໘
ມິທທເຈຕສິກ ໑໘
ວິຈິກິຈຉາເຈຕສິກ ໑໙
ໂສພນເຈຕສິກ ໒໕ .... ໒໐
ສັທທາເຈຕສິກ ໒໐
ສຕິເຈຕສິກ ໒໑
ຫິຣິເຈຕສິກ ໒໒
ໂອຕຕັປປເຈຕສິກ ໒໓
ອໂລກເຈຕສິກ ໒໔
ອໂທສເຈຕສິກ ໒໔
ຕັຕຣມັຊຊັຕຕຕາເຈຕສິກ ໒໕
ກາຍປັສສັທທິເຈຕສິກ ແລະ ຈິຕຕປັສສັທທິເຈຕສິກ ໒໕



ກາຍລຫຸຕາເຈຕສິກ ແລະ ຈິຕຕລຫຸຕາເຈຕສິກ ໔໕
ກາຍມຸທຸຕາເຈຕສິກ ແລະ ຈິຕຕມຸທຸຕາເຈຕສິກ ໔໖
ກາຍກັມມັញຍຕາເຈຕສິກ ແລະ ຈິຕຕກັມມັញຍຕາເຈຕສິກ ໔໖
ກາຍປາគຸញຍຕາເຈຕສິກ ແລະ ຈິຕຕປາគຸញຍຕາເຈຕສິກ ໔໗
ກາຢຸຊຸກຕາເຈຕສິກ ແລະ ຈິຕຕຸຊຸກຕາເຈຕສິກ ໔໗
ວິຣຕິເຈຕສິກ ໔໘
ສັມມາວາຈາເຈຕສິກ ໔໘
ສັມມາກັມມັນຕເຈຕສິກ ໔໘
ສັມມາອາຊີວເຈຕສິກ ໔໙
ອັປປມັញຍາເຈຕສິກ ໔໙
ກຣຸណາເຈຕສິກ ໔໙
ມຸທິຕາເຈຕສິກ ໕໐
ປັញຍາເຈຕສິກ ໕໐
ສັມປໂຢຄນັຍ ໕໑
ວິតក្កເຈຕສິກ ໕໓
ວິຈາຣເຈຕສິກ ໕໓
ອធិໂມກຂເຈຕສິກ ໕໔
ວີຣິຢເຈຕສິກ ໕໔
ປີຕິເຈຕສິກ ໕໔
ឆັນທເຈຕສິກ ໕໕
ສັມປໂຢຄນັຍແຫ່ງອກຸສົລເຈຕສິກ ໕໕
ສັມປໂຢຄນັຍແຫ່ງໂສភຓເຈຕສິກ ໕໖
ອນິຢຕໂຢຄີເຈຕສິກ ໕໗
ສັງគហນັຍ ໕໙
ອນຸຕຕຣສັງគហນັຍ ໖໐
ມຫັគគតສັງគហນັຍ ໖໐
ກາມາວຈໂສភຓສັງគហນັຍ ໖໑

ໂສກາຕເຈຕສິກທີ່ບໍ່ໄດ້ສັງຄຫນັຍ ໔໒
ລັມມ໌ບາງປຣະກາຣທີ່ທຳໃຫ້ຈິຕຕ່າງກັນ ໔໓
ອກຸສົລສັງຄຫນັຍ ໔໕
ສັພພາກຸສົລໂຢຄິເຈຕສິກ ໔໖
ອເຫຕຸກສັງຄຫນັຍ ໔໗
ອເຫຕຸກຈິຕ ໑໘ ດວງ ມີສັງຄຫະ ໔ ນັຍ ຄື ໔໗
ສັມປໂຢຄນັຍ ມີ ໑໖ ນັຍ ຄື ໔໘
ສັງຄຫນັຍ ມີ ໓໓ ນັຍ ຄື ໔໙
ອວສານຄາຖາ ປຣິຈເຈທທີ່ ໒ .... ໔໘

ຄູ່ມືການສຶກສາ

ເຈຕສິກປຣມັຕຖ໌

ພຣະອະພິທັມມັຕຖສັງຄຫະ ປຣິຈເຊທທີ່ ໔

ນໂມ ຕສ຺ສ ກຄວໂຕ ອຣຫໂຕ ສມ຺ມາສມ຺ພຸທສ຺ສ

ຄວາມເບື້ອງຕົ້ນ

ເຈຕສິກປຣມັຕຖ໌ນີ້ ຕາມພຣະອະພິທັມມັຕຖສັງຄຫະ ຊຶ່ງພຣະອນຸຣຸທສາຈາຣຍ໌ໄດ້ຣຈນາໄວ້ນັ້ນ ທ່ານຈັດເປັນ ປຣິຈເຊທທີ່ ໔ ໃຫ້ຊື່ວ່າ ເຈຕສິກສັງຄຫວິກາຄ ອັນແປລວ່າສ່ວນທີ່ຣວບຣວມເຣື່ອງເຈຕສິກ

ເຈຕສິກສັງຄຫວິກາຄນີ້ ທ່ານປຣະພັນສ໌ໄວ້ເປັນຄາຖາສັງຄຫະຣວມ ໑໕ ຄາຖາ ດັ່ງຈະສແດງຕາມລຳດັບຕໍ່ໄປຈົນຄົບ ທັ້ງ ໑໕ ຄາຖາ

ເຈຕສິກຄືຫຍັງ?

ເຈຕສິກຄືທັມມຊາຕິສິ່ງນຶ່ງ ຊຶ່ງປຣະກອບກັບຈິຕ ແລະປຸງແຕ່ງຈິຕໃຫ້ປຣະພຣຶຕິເປັນໄປຕາມນັ້ນ ອາການທີ່ປຣະກອບກັບຈິຕນັ້ນ ເອີ້ນວ່າ **ເຈໂຕຢຸຕ຺ຕລກ຺ຂນ່** ຄືມີສກາພທີ່ປຣະກອບກັບຈິຕ ບໍຣິບູຣຕ໌ດ້ວຍລັກສຓະ ໔ ປຣະການຄື

ເອກຸປ຺ປາທ ເກີດພ້ອມກັບຈິຕ

ເອກນິໂຣຣ ດັບພ້ອມກັບຈິຕ

ເອກາລມ຺ພຓ ມີອາຣົມຓ໌ດຽວກັບຈິຕ

ເອກວຕ຺ຖຸກ ອາສັຍວັຕຖຸດຽວກັບຈິຕ

ດັ່ງມີຄາຖາສັງຄຫະທີ່ ໑ ສແດງວ່າ

໑. ເອກຸປ຺ປາທນິໂຣຣາ ຈ ເອກາລມ຺ພຓ ວຕ຺ຖຸກາ
ເຈໂຕຢຸຕ຺ຕາ ທ຺ວິປຍ຺ຍາສ ຣມ຺ມາ ເຈຕສິກາ ມຕາ

ແປລຄວາມວ່າ ສກາວທັມມ໌ທີ່ເກີດພ້ອມກັບຈິຕ ດັບພ້ອມກັບຈິຕ ມີອາຣົມຓ໌ດຽວກັບຈິຕ ແລະມີວັຕຖຸທີ່ອາສັຍເກີດກໍເປັນອັນດຽວກັບຈິຕ ທັມມຊາຕິນັ້ນເອີ້ນວ່າ **ເຈຕສິກ** ມີຈຳນວນ ໕໒ ດວງ

ເຈຕະສິກມີ **ລັກສະນະ** (ຄື ຄຸນະພາບ ຫຼື ເຄື່ອງສແດງ), **ຣສະ** (ກິຈການງານ ຫຼື ໜ້າທີ່), **ປັຈຈຸປັຜຖານ** (ອາການປະກົດ ຫຼື ຜົລ), **ປທັຜຖານ** (ເຫດໃກ້ລໃຫ້ເກີດ) ເປັນ ໔ ປະການ ຊຶ່ງຮວມເອີ້ນ **ລັກຂະນາທິຈະຕຸກະ** ນັ້ນ ດັ່ງນີ້

ຈິຕ຺ຕນິສ຺ສິຕລກ຺ຂນ໌	ອາສັຍຈິຕເກີດຂຶ້ນ ເປັນລັກສະນະ
ອວິໂຢຄຸປ຺ປາທນຣສໍ	ເກີດຮ່ວມກັບຈິຕ ເປັນກິຈ
ເອກາລມ຺ພນປຈ຺ຈຸປຏ຺ຖານໍ	ຮັບອາຣົມຕ໌ຢ່າງດຽວກັບຈິຕ ເປັນຜົລ
ຈິຕ຺ຕຸປ຺ປາທປທຏ຺ຖານໍ	ມີການເກີດຂຶ້ນແຫ່ງຈິຕ ເປັນເຫດໃກ້ລ

ອນຶ່ງເຈຕະສິກນີ້ແມ້ວ່າຈະເປັນສິ່ງທີ່ປຸງແຕ່ງຈິຕ ໃຫ້ຈິຕປະພຶຕິເປັນໄປຕາມລັກສະນະຂອງເຈຕະສິກກໍຕາມ ແຕ່ກໍຕ້ອງຖືວ່າຈິຕເປັນໃຫຍ່ ເປັນປະທານ ເພາະເຈຕະສິກເປັນສິ່ງທີ່ຕ້ອງອາສັຍຈິຕເກີດ

ເຈຕະສິກທັ້ງ ໕໒ ແບ່ງເປັນ ໓ ປະເພດ

ເຈຕະສິກທັ້ງຫມົດ ມີຈຳນວນ ໕໒ ດວງ ຊຶ່ງແຕ່ລະດວງກໍມີລັກສະນະຈຳເພາະຕ່າງກັນ ບໍ່ຄືກັນເລີຍ ເຖິງຈັ່ງໃດກໍຍັງແບ່ງເຈຕະສິກ ໕໒ ດວງນີ້ ໄດ້ເປັນ ໓ ປະເພດ ດັ່ງມີຄາຖາສັງຄະຫະ ສແດງວ່າ

ຄາຖາສັງຄະຫະທີ່ ໒ ສແດງວ່າ

໒. ເຕຣສຏ຺ຏສມານາ ຈ ຈຸທ຺ທສາກຸສລາ ຕຖາ
ໂສກຕາ ປຏ຺ຈວີສາຕິ ທ຺ວິປຏ຺ຏາສ ປວຸຈ຺ຈເຣ ໆ

ແປລຄວາມວ່າ ເຈຕະສິກ ໕໒ ດວງ ຈັດເປັນ ໓ ປະເພດ ຄື

ອັຌຌສມານາເຈຕະສິກ	໑໓ ດວງ
ອກຸສົລເຈຕະສິກ	໑໔ ດວງ
ໂສກຕາເຈຕະສິກ	໒໕ ດວງ

ເຈຕສິກ ໕໒ ດວງ

ອັຌຌສມນາເຈຕສິກ ໑໓	**ອກຸສລເຈຕສິກ ໑໔**	**ໂສຠຓເຈຕສິກ ໒໕**
ສັພພຈິຕຕສາທາຣຓເຈຕສິກ ໗	**ໂມຈຕຸກເຈຕສິກ ໔**	**ໂສຠຓສາທາຣຓເຈຕສິກ ໑໙**
໑. ຜັສສະ	໑. ໂມຫະ	໑. ສັທຘາ
໒. ເວທນາ	໒. ອຫິຣິກະ	໒. ສຕິ
໓. ສັຌຌາ	໓. ອໂນຕັປປະ	໓. ຫິຣິ
໔. ເຈຕນາ	໔. ອຸທັຈຈະ	໔. ໂອຕັປປະ
໕. ເອກັຄຄຕາ	**ໂລຕິກເຈຕສິກ ໓**	໕. ອໂລຠະ
໖. ຊີວິຕິນທຣິຍ໌	໑. ໂລຠະ	໖. ອໂທສະ
໗. ມນສິກາຣ	໒. ທິຏຐິ	໗. ຕັຕຣມັຊຊັຕຕຕາ
ປກິຓຓກເຈຕສິກ ໖	໓. ມານະ	໘. ກາຍປັສສັທຘິ, ໙. ຈິຕຕປັສສັທຘິ
໑. ວິຕັກ	**ໂທຈຕຸກເຈຕສິກ ໔**	໑໐. ກາຍລຫຸຕາ, ໑໑. ຈິຕຕລຫຸຕາ
໒. ວິຈາຣ	໑. ໂທສະ	໑໒. ກາຍມຸທຸຕາ, ໑໓. ຈິຕຕມຸທຸຕາ
໓. ອຘິໂມກຂ໌	໒. ອິສສາ	໑໔. ກາຍກັມມັຌຌຕາ, ໑໕. ຈິຕຕກັມມັຌຌຕາ
໔. ວິຣິຍະ	໓. ມັຈຈຣິຍະ	໑໖. ກາຍປາຄຸຌຌຕາ, ໑໗. ຈິຕຕປາຄຸຌຌຕາ
໕. ປີຕິ	໔. ກຸກກຸຈຈະ	໑໘. ກາຍຸຊຸກຕາ, ໑໙. ຈິຕຕຸຊຸກຕາ
໖. ຈັນທະ	**ຖີທຸກເຈຕສິກ ໒**	**ວິຕີເຈຕສິກ ໓**
	໑. ຖີນະ	໑. ສັມມາວາຈາ
	໒. ມິທຘະ	໒. ສັມມາກັມມັນຕະ
	ວິຈິກິຈຈາເຈຕສິກ ໑	໓. ສັມມາອາຊີວະ
	໑. ວິຈິກິຈຈາ	**ອັປປມັຌຌາເຈຕສິກ ໒**
		໑. ກຣຸຓາ
		໒. ມຸທິຕາ
		ປັຌຌາເຈຕສິກ ໑
		໑. ປັຌຌິນທຣິຍ໌

ອັນຍະສະມານາເຈຕະສິກ

ອັນຍະສະມານາເຈຕະສິກ ເປັນເຈຕະສິກທີ່ສະເໝີເໝືອນກັບສະພາບອື່ນໄດ້ ໝາຍຄວາມວ່າເປັນເຈຕະສິກທີ່ປະກອບກັບທັມມ໌ທີ່ເປັນອະກຸສົລ ຫຼື ເປັນກຸສົລ ຫຼື ເປັນອະພະຍາກະຕະໄດ້ທຸກຊະນິດ ເມື່ອປະກອບກັບທັມມ໌ຊະນິດໃດ ກໍມີສະພາບເປັນຊະນິດນັ້ນໄປດ້ວຍ ກ່າວຄືຖ້າເກີດຮ່ວມກັບ ອະກຸສົລກໍນັບເປັນອະກຸສົລໄປດ້ວຍ ຖ້າເກີດຮ່ວມກັບກຸສົລ ກໍຈັດເປັນກຸສົລໄປດ້ວຍ ເມື່ອເກີດຮ່ວມກັບ ອະພະຍາກະຕະ ກໍເອີ້ນວ່າເປັນອະພະຍາກະຕະໄປດ້ວຍ

ອັນຍະສະມານາເຈຕະສິກ ມີຈຳນວນ ໑໓ ດວງ ຊື່ຫຍັງແດ່ ມີແຈ້ງຢູ່ທີ່ໜ້າຕົ້ນນັ້ນແລ້ວ ໃນຈຳນວນ ໑໓ ດວງນີ້ ຍັງຈັດອອກໄດ້ເປັນ ໒ ພວກ ຄື

ສັພພະຈິຕຕະສາທາຣະນະເຈຕະສິກ ມີຈຳນວນ ໗ ດວງ

ປະກິນນະກະເຈຕະສິກ ມີຈຳນວນ ໖ ດວງ

ສັພພະຈິຕຕະສາທາຣະນະເຈຕະສິກ

ສັພພະຈິຕສາທາຣະນະເຈຕະສິກ ເປັນເຈຕະສິກທີ່ສາທາຣະນະແກ່ຈິຕທັງໝົດໝາຍຄວາມວ່າ ຈິຕທັງໝົດຊຶ່ງມີຈຳນວນນັບຢ່າງຫຍໍ້ ໘໙ ດວງ ຫຼື ນັບຢ່າງພິສດານກໍມີ ໑໒໑ ດວງນັ້ນ ເມື່ອຈິຕດວງໃດເກີດຂຶ້ນ ເຈຕະສິກທັງ ໗ ດວງນີ້ຍ່ອມເກີດປະກອບກັບຈິຕນັ້ນພ້ອມກັນທັງ ໗ ດວງສະເໝີໄປບໍ່ມີເວັ້ນເລີຍ ດັ່ງນັ້ນຈຶ່ງວ່າເປັນເຈຕະສິກທີ່ສາທາຣະນະແກ່ຈິຕທັງໝົດ ສົມກັບຊື່ທີ່ວ່າ **ສັພພະຈິຕຕະສາທາຣະນະເຈຕະສິກ**

ສັພພະຈິຕສາທາຣະນະເຈຕະສິກ ໗ ດວງ ມີດັ່ງນີ້

ຜັສສະເຈຕະສິກ

໑. **ຜັສສະເຈຕະສິກ** ຄື ການກະທົບອາຣົມ໌ ມີລັກຂະນາທິຈະຕຸກະ ດັ່ງນີ້

ຜຸສນລກ຺ຂໂນ	ມີການກະທົບອາຣົມ໌ ເປັນລັກສະນະ
ສງ຺ຄຜຏ຺ຏນຣໂສ	ມີການປະສານອາຣົມ໌ ວັຕຖຸ ວິນຍານ ເປັນກິຈ
ສນ຺ນິປາຕປຈ຺ຈຸປຏ຺ຐາໂນ	ມີການປະຊຸມພ້ອມກັນ ເປັນຜົລ
ອາປາຖຄຕວິສຍປທຏ຺ຐາໂນ	ມີອາຣົມ໌ປະກົດ ເປັນເຫຕຸໃກ້ລ

ຄວາມໝາຍຂອງຜັສສະເຈຕະສິກນີ້ ບໍ່ໄດ້ໝາຍພຽງແຕ່ວ່າ ຂອງສອງສິ່ງກະທົບກັນເທົ່ານັ້ນ ແຕ່ໝາຍເຖິງວ່າຕ້ອງມີທັມມ໌ ໓ ປະການມາປະຊຸມຮ່ວມພ້ອມກັນ ຈຶ່ງຈະເອີ້ນວ່າຜັສສະເຈຕະສິກ ທັມມ໌ ໓ ປະການນັ້ນ ຄື ອາຣົມ໌ ໑ ວັຕຖຸ ໑ ທັມມ໌ ໒ ປະການນີ້ກະທົບກັນ ແລະທຳໃຫ້ເກີດວິນຍານອີກ ໑ ດ້ວຍ ບໍ່ແມ່ນແຕ່ພຽງວ່າກະທົບກັນລ້າໆ

ເວທນາເຈຕສິກ

໑. **ເວທນາເຈຕສິກ** ຄືການສເວີຍອາຣົມຕ໌ ກ່າວຢ່າງສັມມະດາສາມັນກໍຄື ຄວາມຮູ້ສຶກ ຮູ້ສຶກວ່າສບາຍ ຫຼື ບໍ່ສບາຍ ແຍກຕາມປຣະເພທແຫ່ງຄວາມເປັນໃຫຍ່ໃນການຮູ້ສຶກ ເປັນ ໕ ຢ່າງ ໄດ້ແກ່

ກ. ສຸຂເວທນາເຈຕສິກ ຄືຄວາມສຸຂສບາຍທາງກາຍ ມີລັກຂຕາທິຈຕຸກະດັ່ງນີ້

ອິຎ຺ຐໂຜຎ຺ຐພ຺ພານຸພວນລກ຺ຂຓາ	ມີການສັມຜັສຖືກຕ້ອງກັບອາຣົມຕ໌ທີ່ດີເປັນລັກສຕະ
ສມ຺ປຍຸຕ຺ຕານໍ ພຍູຫນຣສາ	ມີການທຳໃຫ້ສັມປຍຸຕຕທັມມ໌ຈເຣີຍ ເປັນກິຈ
ກາຍິກອສ຺ສາທປຈ຺ຈຸປຎ຺ຐານາ	ມີຄວາມຊື່ນຊົມຍິນດີທາງກາຍ ເປັນຜົລ
ກາຍິນ຺ທ຺ຣິຍປທຎ຺ຐານາ	ມີກາຍປຣະສາທ ເປັນເຫຕຸໃກ້ລ

ຂ. ທຸກຂເວທນາເຈຕສິກ ຄືຄວາມທຸກຂ໌ຍາກລຳບາກກາຍ ມີລັກຂຕາທິຈຕຸກະ ດັ່ງນີ້

ອນິຕ຺ຐໂຜຎ຺ຐພ຺ພານຸພວນລກ຺ຂຓາ	ມີການສັມຜັສຖືກຕ້ອງກັບອາຣົມຕ໌ທີ່ບໍ່ດີ ເປັນລັກສຕະ
ສມ຺ປຍຸຕ຺ຕານໍ ມິລາປນຣສາ	ມີການທຳໃຫ້ສັມປຍຸຕຕທັມມ໌ເສົ້າຫມອງ ເປັນກິຈ
ກາຍິກາພາຣປຈ຺ຈຸປຎ຺ຐານາ	ມີຄວາມອາພາຣທາງກາຍ ເປັນຜົລ
ກາຍິນ຺ທ຺ຣິຍປທຎ຺ຐານາ	ມີກາຍປຣະສາທ ເປັນເຫຕຸໃກ້ລ

ຄ. ໂສມນັສເວທນາເຈຕສິກ ຄືຄວາມສຸຂຄວາມສບາຍໃຈ ມີລັກຂຕາທິຈຕຸກະດັ່ງນີ້

ອິຎ຺ຐາຕມ຺ມຕານຸພວນລກ຺ຂຓາ	ມີການສເວີຍອາຣົມຕ໌ທີ່ດີ ເປັນລັກສຕະ
ອິຎ຺ຐາການສມ຺ໂພຄຣສາ	ມີການທຳຈິຕໃຫ້ຢູ່ຮ່ວມກັບອາຣົມຕ໌ທີ່ດີ ເປັນກິຈ
ເຈຕສິກອສ຺ສາທປຕ຺ຈຸປຈ຺ຐານາ	ມີຄວາມຊື່ນຊົມຍິນດີທາງໃຈ ເປັນຜົລ
ປສ຺ສທ຺ທິປທຎ຺ຐານາ	ມີຄວາມສງົບກາຍສງົບໃຈ ເປັນເຫຕຸໃກ້ລ

ງ. ໂທມນັສເວທນາເຈຕສິກ ຄືຄວາມທຸກຂ໌ໃຈ ມີລັກຂຕາທິຈຕຸກະດັ່ງນີ້

ອນິຕ຺ຐາຕມ຺ມຕານຸພວນລກ຺ຂຓາ	ມີການສເວີຍອາຣົມຕ໌ທີ່ບໍ່ດີ ເປັນລັກສຕະ
ອນິຕ຺ຐາການສມ຺ໂພຄຣສາ	ມີການສເວີຍອາຣົມຕ໌ທີ່ບໍ່ດີ ເປັນກິຈ
ເຈຕສິກາພາຣປຈ຺ຈຸປ.ຐານາ	ມີຄວາມອາພາຣທາງໃຈ ເປັນຜົລ
ຫທຍວຕ຺ຖຸປທຎ຺ຐານາ	ມີຫທັຍວັຕຖຸ ເປັນເຫຕຸໃກ້ລ

ຈ. ອຸເບກຂາເຈຕສິກ ຄືຄວາມຮູ້ສຶກເສີຍໆ ບໍ່ທຸກຂ໌ບໍ່ສຸຂ ມີລັກຂຕາທິຈຕຸກະ ດັ່ງນີ້

ມຊຊຕຸຕເວທຢິຕລກຸຂຕາ	ມີການສເວີຍອາຣົມຕ໌ປານກາງ ເປັນລັກສຕະ
ສມ ປຢຸຕຸຕານ ນາຕິອຸປພຢູຫນນິລາປນຣສາ	ມີການຮັກສາສັມປຢຸຕຕລັມມ໌ ບໍ່ໃຫ້ຈເຣີນ ບໍ່ໃຫ້ເສົ້າຫມອງເປັນກິຈ
ສນ ຕກາວປຈຸຈຸປຊ ຊານາ	ມີຄວາມເລີຍໆ ເປັນຜົລ
ນິປຸປີຕິໃຈິຕຸຕປທຊ ຊານາ	ມີຈິຕທີ່ບໍ່ຍິນດີເປັນເຫຕຸໃກ້ລ

ສັຍຍາເຈຕສິກ

໓. **ສັຍຍາເຈຕສິກ** ຄື ຄວາມຈຳຫມາຍອາຣົມຕ໌ ມີລັກຂຕາທິຈຕຸກະ ດັ່ງນີ້

ສຍ ຊານນ ລກຸຂຕາ	ມີຄວາມຈຳ ເປັນລັກສຕະ
ປຸນສຍ ຊານນ ປຈຸຈຢນິມິຕຸຕກຣຕ ຣສາ	ມີການຫມາຍໄວ້ແລະຈຳໄດ້ ເປັນກິຈ
ຢຖາຄຫິຕ ນິມິຕຸຕວເສນ ອກິນິເວສກຣຕ ປຈຸຈຸປຊ ຊານາ	ມີຄວາມຈຳໄດ້ໃນສິ່ງທີ່ຫມາຍໄວ້ ເປັນຜົລ
ຢຖາອຸປຕຸຖິຕວິສຢປທຊ ຊານາ	ມີອາຣົມຕ໌ທີ່ປຣາກົຍ ເປັນເຫຕຸໃກ້ລ

ເຈຕນາເຈຕສິກ

໔. **ເຈຕນາເຈຕສິກ** ຄືການສແວງຫາ ຫຼື ຂວນຂວາຍທີ່ຈະໃຫ້ເປັນໄປໃນອາຣົມຕ໌ ຫຼື ຄວາມຕັ້ງໃຈ ຫຼື ຄວາມສຳເຣັຈ ມີລັກຂຕາທິຈຕຸກະ ດັ່ງນີ້

ເຈຕນາກາວລກຸຂຕາ	ມີການຊັກຊວນ ເປັນລັກສຕະ
ອາຢູຫນຣສາ	ມີການຂວນຂວາຍ ເປັນກິຈ
ສໍວິລານ ປຈຸຈຸປຊ ຊານາ	ມີການຈັດແຈງ ເປັນຜົລ
ເສສຂນ ລຕຸຕຢປທຸ ຊານາ	ມີນາມຂັນລ໌ທັ້ງ ໓ ທີ່ເຫລືອຄື (ເວທນາຂັນລ໌ ສັຍຍາ ຂັນລ໌ວິຍຍານຂັນລ໌) ເປັນເຫຕຸໃກ້ລ

ເອກັຄຄຕາເຈຕສິກ

໕. **ເອກັຄຄຕາເຈຕສິກ** ຄືກາຕັ້ງມັ່ນຢູ່ໃນອາຣົມຕ໌ດຽວ ມີລັກຂຕາທິຈຕຸກະ ດັ່ງນີ້

ອວິກຸເຂປລກຸຂຕາ	ມີການບໍ່ຟຸ້ງຊ່ານ ເປັນລັກສຕະ
ສຫຊາຕານ ສມ ປິຕຸຫນຣສາ	ມີການຣວບຣວມສຫຊາຕລັມມ໌ ເປັນກິຈ
ອຸປສມປຈຸຈຸປຊ ຊານາ	ມີຄວາມສງົບ ເປັນຜົລ
ສຸຂປທຊ ຊານາ	ມີສຸຂເວທນາ ເປັນເຫຕຸໃກ້ລ

ຊີວິຕິນທຣິຍເຈຕສິກ

໕. **ຊີວິຕິນທຣິຍເຈຕສິກ** ຄືການຮັກສາທັມມ໌ທີ່ເກີດຮ່ວມດ້ວຍຕົນໃຫ້ຕັ້ງຢູ່ຕາມອາຍຸຂອງຕົນ ມີລັກຂະນາທີຈະຕຸກະດັ່ງນີ້

ສຫຊາຕານໍ ອນຸປາລນລກ຺ຂນໍ	ມີການລ້ຽງຮັກສາສຫຊາຕທັມມ໌ ເປັນລັກສະນະ
ເຕສໍ ປວຕ຺ຕນຣສໍ	ມີຄວາມຕັ້ງຢູ່ແລະເປັນໄປໄດ້ ເປັນກິຈ
ເຕສຄ຺ເຍວຖປນປຈ຺ຈຸປຏ຺ຐານໍ	ມີການຊົງຢູ່ໄດ້ຊຶ່ງສຫຊາຕທັມມ໌ ເປັນຜົລ
ເສສຂນ຺ທຕ຺ຕຍປທຏ຺ຐານໍ	ມີນາມຂັນທ໌ທັງ ໓ ທີ່ເຫລືອ (ເວທນາຂັນທ໌ ສັນຍາຂັນທ໌ວິນຍານຂັນທ໌) ເປັນເຫຕຸໃກ້ລ

ມນສິກາຣເຈຕສິກ

໗. **ມນສິກາຣເຈຕສິກ** ຄືການກະທຳອາຣົມຕ໌ໃຫ້ແກ່ຈິຕ ຫຼື ຄວາມໃສ່ໃຈໃນອາຣົມຕ໌ ມີລັກຂະນາທີຈະຕຸກະດັ່ງນີ້

ສາຣຓລກ຺ຂໂຓ	ມີການທຳໃຫ້ສັມປຢຸຕຕທັມມ໌ໃສ່ໃຈໃນອາຣົມຕ໌ ເປັນ ລັກສະນະ
ສມ຺ປຢຸຕ຺ຕານໍ ອາຣມ຺ມເຓ ສໍໂຢຊນຣໂສ	ມີການທຳໃຫ້ສັມປຢຸຕຕທັມມ໌ປະກອບໃນ ອາຣົມຕ໌ ເປັນກິຈ
ອາຣມ຺ມຕາພິມຸຂີກາວປຈ຺ຈຸປຏ຺ຐາໂນ	ມີການທຳໃຫ້ສັມປຢຸຕຕທັມມ໌ໃຫ້ມີຫນ້າທີ່ຈະເພາະ ອາຣົມຕ໌ ເປັນຜົລ
ອາຣມ຺ມຕປທຏ຺ຐາໂນ	ມີອາຣົມຕ໌ ເປັນເຫຕຸໃກ້ລ

ມນສິກາຣເຈຕສິກ ຄື ຄວາມໃສ່ໃຈໃນອາຣົມຕ໌ນີ້ ຖ້າມີຄວາມໃສ່ໃຈເປັນອັນດີຕໍ່ອາຣົມຕ໌ ຫຼື ໃສ່ໃຈໃນອາຣົມຕ໌ດ້ວຍອຸບາຍອັນ ແຢບຄາຍ ຄືໃສ່ໃຈໃຫ້ຖືກຕ້ອງຕຣົງຕາມສພາວະແຫ່ງຄວາມເປັນຈິງແລ້ວ ຍ່ອມກໍ່ໃຫ້ເກີດຈິຕທີ່ດີງາມ ຄວາມໃສ່ໃຈເປັນອັນດີເອີ້ນວ່າ **ໂຍນິໂສມນສິກາຣ**

ຖ້າບໍ່ມີຄວາມໃສ່ໃຈເປັນອັນດີຕໍ່ອາຣົມຕ໌ ຫຼື ໃສ່ໃຈໃນອາຣົມຕ໌ດ້ວຍອຸບາຍອັນບໍ່ແຢບຄາຍແລ້ວ ຍ່ອມກໍ່ໃຫ້ເກີດຈິຕທີ່ບໍ່ດີ ຈິຕທີ່ຊົ່ວທີ່ບາປ ຄວາມບໍ່ໃສ່ໃຈເປັນອັນດີນີ້ ເອີ້ນວ່າ **ອໂຍນິໂສມນສິກາຣ**

ສາເຫຕຸທີ່ຈະໃຫ້ເກີດ **ໂຍນິໂສມນສິກາຣ** ຄື

໑. ປຸພ຺ເພ ຈ ກຕປຸຄ຺ຄຕາ	ເຄີຍທຳບຸຄໄວ້ແຕ່ປາງກ່ອນ
໒. ປຕິຣູປເທສວາສ	ຢູ່ໃນປະເທສທີ່ສົມຄວຣ ຄືປະເທສທີ່ມີສັປບຸຣຸສ
໓. ສປ຺ປຸຣິສູປນິສ຺ສຍ	ຄົບຫາສມາຄົມກັບສັປບຸຣຸສ
໔. ສທ຺ທມ຺ມສ຺ສວນ	ຟັງທັມມ໌ຂອງສັປບຸຣຸສ
໕. ອຕ຺ຕສມ຺ມາປຕິທິ	ຕັ້ງຕົນໄວ້ຊອບ

ສ່ວນສາເຫຕຸທີ່ຈະໃຫ້ເກີດ **ອໂຍນິໂສມນສິກາຣ** ກໍ່ຕຣົງກັນຂ້າມ ຄື

໑. ປຸພ຺ເພ ອກຕປຸລ຺ລຕາ ບໍ່ໄດ້ສ້າງສົມ ບຸນໄວ້ແຕ່ປາງກ່ອນ

໒. ອປ຺ປຕິຣູປເທສວາສ ຢູ່ໃນປຣະເທສທີ່ບໍ່ສົມຄວຣ (ຄືບໍ່ມີສັປບຸຣຸສ)

໓. ອສປ຺ປຸຣິສູປນິສ຺ສຍ ບໍ່ໄດ້ຄົບຫາສມາຄົມກັບສັປບຸຣຸສ

໔. ອສທ຺ທມ຺ມສ຺ສວນ ບໍ່ໄດ້ຟັງທັມມ໌ຂອງສັປບຸຣຸສ

໕. ອຕ຺ຕມິຈ຺ຈາປຕິທິ ຕັ້ງຕົນໄວ້ຜິດ

ປກິນນກເຈຕສິກ

ປກິນນກເຈຕສິກ ເປັນເຈຕສິກເບັດຕເລັດ ບໍ່ປຣະກອບກັບຈິຕທົ່ວໄປແຕ່ປຣະກອບໄດ້ເປັນບາງດວງ ປກິນນກເຈຕສິກມີ ໖ ດວງ ດັ່ງຕໍ່ໄປນີ້

ວິຕົກເຈຕສິກ

໑. ວິຕົກເຈຕສິກ ຄືການຍົກຈິຕຂຶ້ນສູ່ອາຣົມຕ໌ ກ່າວຢ່າງທັມມດາສາມັນ ກໍຄືການຄິດ ການນຶກເຖິງອາຣົມຕ໌ ມີລັກຂນາທິຈຕຸກະ ດັ່ງນີ້

ອາຣມ຺មເນ ຈິຕ຺ຕສ຺ສ ອភិນិរោបនលក្ខណោ	ມີການຍົກຈິຕຂຶ້ນສູ່ອາຣົມຕ໌ ເປັນລັກສຕະ
ອາຫນປຣິຢາຫນຣໂສ	ມີການກຣະທຳໃຫ້ຈິຕກຣະທົບອາຣົມຕ໌ເລື້ອຍໆ ເປັນກິຈ
ອາຣມ຺មເນ ຈິຕ຺ຕສ຺ສ ອານຢນປຈ຺ຈຸປຏ຺ຐາໂນ	ມີຈິຕທີ່ຊຶ່ງຢູ່ໃນອາຣົມຕ໌ ເປັນຜົລ
ເສສສຂນ຺ធຕ຺ຕຢປທຏ຺ຐາໂນ	ມີນາມຂັນທ໌ທັ້ງ ໓ ທີ່ເຫລືອ (ເວທນາຂັນທ໌ ສັນຍາຂັນທ໌ ວິນຍາຕຂັນທ໌) ເປັນເຫຕຸໃກ້ລ

ວິຕົກເຈຕສິກ ຄືການຍົກຈິຕຂຶ້ນສູ່ອາຣົມຕ໌ນີ້ ມີຄວາມຫມາຍໃກ້ຄຽງກັບເຈຕນາເຈຕສິກ ຄວາມຕັ້ງໃຈໃນອາຣົມຕ໌ ແລະ ມນສິການ ເຈຕສິກ ຄວາມໃສ່ໃຈໃນອາຣົມຕ໌ ເພື່ອໃຫ້ເກີດຄວາມແຕກຕ່າງກັນ ຈຶ່ງມີອຸປມາດ້ວຍເຮືອແຂ່ງວ່າ

ເຈຕນາເຈຕສິກ ອຸປມາດັ່ງຄົນພາຍຫົວ ຕ້ອງຄວ້າທຸງໃຫ້ໄດ້ ອັນຫມາຍເຖິງຄວາມສຳເຣັຈ ຄືຊັຍຊນະ

ມນສິການເຈຕສິກ ອຸປມາດັ່ງຄົນຖືທ້າຍ ຕ້ອງຄັດວາດເຮືອໃຫ້ຕຣົງໄປຍັງທຸງອັນເປັນຫລັກຊັຍ

ວິຕົກເຈຕສິກ ອຸປມາດັ່ງຄົນພາຍກາງລຳ ມຸ່ງຫນ້າຈ້ຳພາຍໄປແຕ່ຢ່າງດຽວ

ວິຈາຣເຈຕສິກ

໔. **ວິຈາຣເຈຕສິກ** ຄື ການປະຄອງຈິດໃຫ້ຢູ່ໃນອາຣົມ ກ່າວຢ່າງທັມມະດາສາມັນກໍວ່າ ຄິດເລື້ອຍໆ ນັ້ນເອງ ມີລັກຂະນາທິຈະຕຸກະ ດັ່ງນີ້

ອາຣມ຺ມານຸມຊ຺ຊນລກ຺ຂໂຕ	ມີການພິຈາຣນາອາຣົມເລື້ອຍໆ ເປັນລັກສະນະ
ຕຕ຺ຖ ສຫຊາຕານຸໂຢຊນຣໂສ	ມີການທຳໃຫ້ສະຫະຊາດທັມມ໌ປະກອບໃນອາຣົມ ເປັນກິຈ
ຈິຕ຺ຕອນຸປ຺ປພນ຺ຣປຈ຺ຈຸປຏ຺ຖາໂນ	ມີການຕິກແຕ່ງຈິດໃຫ້ຢູ່ໃນອາຣົມ ເປັນຜົລ
ເສສຂນ຺ຣຕ຺ຕຍປທຏ຺ຖາໂນ	ມີນາມຂັນທ໌ທັ້ງ ໓ ທີ່ເຫລືອ (ເວທນາຂັນທ໌ ສັນຍາຂັນທ໌ ວິນຍານຂັນທ໌) ເປັນເຫດໃກ້ລ

ອະທິໂມກຂເຈຕສິກ

໕. **ອະທິໂມກຂເຈຕສິກ** ມີການຕັດສິນອາຣົມ ມີລັກຂະນາທິຈະຕຸກະ ດັ່ງນີ້

ສນ຺ນິຕ຺ຖານລກ຺ຂໂຕ	ມີການສັນນິສຖານອາຣົມ ເປັນລັກສະນະ
ອສံສປ຺ປນຣໂສ	ມີການບໍ່ໂຍກບໍ່ຄລອນ ເປັນກິຈ
ວິນິຈ຺ຉຍປຈ຺ຈຸປຏ຺ຖາໂນ	ມີການຕັດສິນ ເປັນຜົລ
ສນ຺ນິຍເກຢ຺ຢທມ຺ມປທຏ຺ຖາໂນ	ມີການສັນນິສຖານທັມມ໌ ເປັນເຫດໃກ້ລ

ວິຣິຍເຈຕສິກ

໖. ວິຣິຍເຈຕສິກ ຄື ຄວາມພຽນເພື່ອໃຫ້ໄດ້ອາຣົມ ມີລັກຂະນາທິຈະຕຸກະດັ່ງນີ້

ອຸສ຺ສາຫນລກ຺ຂນံ	ມີຄວາມອຸດສາຫະ ເປັນລັກສະນະ
ສຫຊາຕານံ ອຸປຕ຺ຖມ຺ພນຣສံ	ມີການອຸດໜູນຄ້ຳຊູສະຫະຊາດທັມມ໌ ເປັນກິຈ
ອສံສີທນປຈ຺ຈຸປຏ຺ຖານံ	ມີການບໍ່ທໍ້ຖອຍ ເປັນຜົລ
ສံເວຄປທຏ຺ຖານံ	ມີຄວາມສລົດ ເປັນເຫດໃກ້ລ

ປີຕິເຈຕສິກ

໕. ປີຕິເຈຕສິກ ຄື ຄວາມປລາບປລື້ມ ຫຼື ອິ່ມໃຈໃນອາຣົມ໌ ມີລັກຂະນາທິຈຕຸກະດັ່ງນີ້

ສມ຺ປິຍາຍນລກ຺ຂຕາ	ມີຄວາມອິ່ມໃຈ ເປັນລັກສະນະ
ກາຍຈິຕ຺ຕປີນນຣສາ	ມີການທຳກາຍແລະໃຈເອີບອີ່ມ ເປັນກິຈ
ໂອທຄ຺ຍປຈ຺ຈຸປຏ຺ຖານາ	ມີກາຍແລະໃຈເຟື່ອງຟູ ເປັນຜົລ
ເສສຂນ຺ລຕ຺ຕຍປທຏ຺ຖານາ	ມີນາມຂັນ໌ທັ້ງ ໓ ທີ່ເຫລືອ (ເວທນາຂັນ໌ ສັນຍາຂັນ໌ ວິນຍາຕຂັນ໌ກໍ່ເປັນເຫຕຸໃກ້ລ

ປີຕິເຈຕສິກ ຄື ຄວາມປລາບປລື້ມໃຈ ອິ່ມໃຈໃນອາຣົມ໌ນັ້ນມີ ໕ ປຣະການ

໑. ຂຸທ຺ທກາປີຕິ	ປລາບປລື້ມໃຈເລັກນ້ອຍພໍຮູ້ສຶກຂົນລຸກ
໒. ຂຕິກາປີຕິ	ປລາບປລື້ມໃຈຊົ່ວຂະນະເກີດຂຶ້ນເລື້ອຍໆ
໓. ໂອກ຺ກນ຺ຕິກາປີຕິ	ປລາບປລື້ມໃຈຈົນເຖິງກັບຕົວໂຍກຕົວໄຫວ
໔. ອຸພ຺ເພງຄາປີຕິ	ປລາບປລື້ມໃຈຈົນເຖິງກັບຕົວລອຍ
໕. ຜຣາຕາປີຕິ	ປລາບປລື້ມໃຈຈົນເອີບອິ່ມຊາບຊ່ານໄປທົ່ວທັ້ງກາຍແລະໃຈ

ປີຕິ ທີ່ເປັນອົງຄ໌ຊານນັ້ນ ຕ້ອງເຖິງ ຜຣຕາປີຕິ ສ່ວນປີຕິອີກ ໔ ບໍ່ນັບເປັນອົງຄ໌ຊານ ເພາະຍັງເປັນຂອງຫຍາບຢູ່

ອນຶ່ງ ປີຕິ ກັບ ສຸຂ ຕ່າງກັນ ຄື ປີຕິ ເປັນສັງຂາຂັນ໌ ສຸຂ ເປັນເວທນາຂັນ໌ ແລະເມື່ອມີ ປີຕິ ຈະຕ້ອງມີສຸຂສເມີແນ່ນອນ ແຕ່ວ່າ ເມື່ອມີສຸຂ ອາຈຈະບໍ່ມີປີຕິດ້ວຍກໍ່ໄດ້

ວັນທເຈຕສິກ

໖. ວັນທເຈຕສິກ ຄືຄວາມພໍໃຈໃນອາຣົມ໌ ຄວາມປລົງໃຈທີ່ຈະເຮັດ ມີລັກຂະນາທິຈຕຸກະ ດັ່ງນີ້

ກຕ຺ຕຸກມ຺ຍຕາ ລກ຺ຂໂຕ	ມີຄວາມປັຕຖນາເພື່ອຈະກະທຳ ເປັນລັກສະນະ
ອາຣມ຺ມຕປຣິເຢສຣໂສ	ມີການສແວງອາຣົມ໌ ເປັນກິຈ
ອາຣມ຺ມເຕນ ອຕ຺ຖິກຕາປຈ຺ຈຸປຏ຺ຖາໂນ	ມີຄວາມປັຕຖນາອາຣົມ໌ ເປັນຜົລ
ອາຣມ຺ມຕປທຏ຺ຖາໂນ	ມີອາຣົມ໌ ເປັນເຫຕຸໃກ້ລ

ອກຸສົລເຈຕສິກ

ອກຸສົລເຈຕສິກ ຄື ເຈຕສິກທີ່ຊົ່ວ ທີ່ບາປ ທີ່ຫຍາບ ທີ່ບໍ່ງາມ ທີ່ບໍ່ສລາດ ອກຸສົລເຈຕສິກນີ້ ເມື່ອປຣະກອບກັບຈິຕແລ້ວ ກໍເຮັດໃຫ້ຈິຕເສົ້າຫມອງຮ້ອນຮົນ ແລະທຳໃຫ້ເສັງສີລັມນ໌

ອກຸສົລເຈຕສິກ ປຣະກອບກັບອກຸສົລເຈຕສິກ ໑໔ ດວງເທົ່ານັ້ນ ບໍ່ປຣະກອບກັບຈິຕຢ່າງອື່ນເລີຍ ແລະເພາະເຫຕຸວ່າອກຸສົລ ເຈຕສິກ ປຣະກອບກັບອກຸສົລຈິຕ ດັ່ງນັ້ນຈຶ່ງໄດ້ຊື່ວ່າອກຸສົລເຈຕສິກ ບໍ່ຊື່ວ່າອໂສກຕເຈຕສິກ ເພາະຖ້າຊື່ວ່າອໂສກຕເຈຕສິກແລ້ວ ກໍຈະມີຄວາມຫມາຍໄປວ່າ ຕ້ອງປຣະກອບກັບອໂສກຕຈິຕໄດ້ທັ້ງຫມົດ ກ່າວຄືຕ້ອງປຣະກອບກັບ ອເຫຕຸກຈິຕດ້ວຍ

ອກຸສົລເຈຕສິກ ມີ ໑໔ ດວງ ແບ່ງອອກເປັນ ໕ ພວກ ຄື

ກ. **ໂມຈຕຸກເຈຕສິກ** ຫມາຍຄວາມວ່າ ເປັນເຈຕສິກພວກມີໂມຫະມີ ໔ ດວງດ້ວຍກັນ ຄື ໂມຫເຈຕສິກ ອຫິຣິກເຈຕສິກ ອໂນຕັປປເຈຕສິກ ແລະ ອຸທລັຈຈເຈຕສິກ ***ໂມຈຕຸກ*** ນີ້ ປຣະກອບກັບອກຸສົລເຈຕສິກໄດ້ທັ້ງຫມົດທັ້ງ ໑໔ ດວງ ດັ່ງນັ້ນຈຶ່ງມີຊື່ ອີກຊື່ວ່າ ***ສັພພາກຸສົລສາລາຣຕເຈຕສິກ*** ຫມາຍຄວາມວ່າ ເປັນເຈຕສິກທີ່ສາລາຣຕແກ່ ອກຸສົລຈິຕ ທັ້ງຫມົດ

ຂ. **ໂລຕິກເຈຕສິກ** ຫມາຍຄວາມວ່າເປັນເຈຕສິກພວກໂລກະ ມີ ໓ ດວງດ້ວຍກັນ ຄື ໂລກເຈຕສິກ ທິຝຖິເຈຕສິກ ແລະ ມານະເຈຕສິກ **ໂລຕິກ** ນີ້ປຣະກອບໄດ້ຂະເພາະແຕ່ໂລກມູລຈິຕ ໘ ດວງເທົ່ານັ້ນ

ຄ. **ໂທຈຕຸກເຈຕສິກ** ຫມາຍຄວາມວ່າ ເປັນເຈຕສິກພວກໂທສະມີ ໔ ດວງດ້ວຍກັນ ຄື ໂທສເຈຕສິກ ອິສສາເຈຕສິກ ມັຈຉຣິຍເຈຕສິກ ແລະກຸກກຸຈຈເຈຕສິກ **ໂທຈຕຸກ** ນີ້ປຣະກອບໄດ້ແຕ່ຂະເພາະໂທສມູລຈິຕ ໒ ດວງເທົ່ານັ້ນ

ງ. **ຖີທຸກເຈຕສິກ** ຫມາຍຄວາມວ່າ ເປັນເຈຕສິກພວກຖີນະ ມີ ໒ ດວງດ້ວຍກັນ ຄື ຖີນເຈຕສິກ ແລະມິທລເຈຕສິກ **ຖີທຸກ** ນີ້ປຣະກອບໄດ້ຂະເພາະແຕ່ອກຸສົລຈິຕທີ່ເປັນສສັງຂາຣິກ ໕ ດວງເທົ່ານັ້ນ

ຈ. **ວິຈິກິຈຉາເຈຕສິກ** ບໍ່ມີພວກ ມີແຕ່ຕົວດວງດຽວ ແລະປຣະກອບໄດ້ຂະເພາະແຕ່ໂມຫມູລຈິຕທີ່ເປັນວິຈິກິຈຉາ ດວງດຽວ ເທົ່ານັ້ນ ເອງ

ອກຸສົລເຈຕສິກ ໑໔ ດວງນັ້ນ ດັ່ງນີ້

ໂມຫເຈຕສິກ

໑. **ໂມຫເຈຕສິກ** ຄື ຄວາມຫລົງ ຄວາມບໍ່ຮູ້ຈິງຕາມສການະຂອງອາຣົມຕ໌ ມີລັກຂຕາທິຈຕຸກະດັ່ງນີ້

ອຌາລກຸຂໂຓ	ມີການບໍ່ຮູ້ ເປັນລັກສຕະ
ອາຕມມຸມຕສກາວຈຸຉາທຣໂສ	ມີການປົກປິດໄວ້ຊຶ່ງສການະແຫ່ງອາຣົມຕ໌ ເປັນກິຈ
ອມຸສກາຣປຈຸຈຸປຝຸຖາໂນ	ມີຄວາມມືດມົນ ເປັນຜົລ

ອໂຍນິໂສມນສິການປທຏຼານໂນ ມີການບໍ່ເອົາໃຈໃສ່ເປັນອັນດີກໍ່ອອາຣົມຕ໌ນັ້ນ ເປັນເຫຕຸໃກ້ລ

ທີ່ວ່າ ບໍ່ຮູ້ນັ້ນ ຫມາຍຄວາມວ່າບໍ່ຮູ້ໃນການສິ່ງຄວຣຮູ້ ແຕ່ບໍ່ຮູ້ໃນສິ່ງທີ່ບໍ່ຄວຣຮູ້

ຄວາມບໍ່ຮູ້ໃນທີ່ນີ້ ຫມາຍລະເພາະ ບໍ່ຮູ້ໃນທັມມ໌ ໘ ປຣະການ ຄື

(໑) ທຸກຸເຂ ອຌານໍ	ບໍ່ແຈ້ງໃນທຸກຂ໌
(໒) ທຸກຸຂສມຸທເຢ ອຌານໍ	ບໍ່ແຈ້ງເຫຕຸໃຫ້ເກີດທຸກຂ໌
(໓) ທຸກຸຂນິໂຣເຮ ອຌານໍ	ບໍ່ແຈ້ງການດັບທຸກຂ໌
(໔) ທຸກຸຂນິໂຣຄາມິນີປຏິປທາຍ ອຌານໍ	ບໍ່ແຈ້ງຫົນທາງທີ່ຈະດັບທຸກຂ໌
(໕) ປຸພຸພນຸເຕ ອຌານໍ	ບໍ່ແຈ້ງໃນຂັນຂ໌ ອາຍຕນ ທາຕຸ ອິນທຣີຍ໌ ສັຈຈ ປຏິຈຈສມຸປບາທ ທີ່ເປັນສ່ວນອດີຕ (ອເຫຕຸກທິຏຖິ ບໍ່ເຊື່ອເຫຕຸ)
(໖) ອປຣນຸເຕ ອຌານໍ	ບໍ່ແຈ້ງໃນ ຂັນຂ໌ ອາຍຕນ ທາຕຸ ອິນທຣີຍ໌ ສັຈຈ ປຏິຈຈສມຸປບາທ ທີ່ເປັນສ່ວນ ອນາຄົຕ (ອຸຈເຊທທິຏຖິ ເຫັນວ່າສູນແລະນັຕຖິກທິຏຖິ ບໍ່ເຊື່ອຜົລ)
(໗) ປຸພຸພນຸຕາປຣນຸເຕ ອຌານໍ	ບໍ່ແຈ້ງໃນຂັນຂ໌ ອາຍຕນ ທາຕຸ ອິນທຣີຍ໌ ສັຈຈະ ປຏິຈຈສມຸປບາທ ທັ້ງທີ່ເປັນສ່ວນໃນອດີຕແລະໃນອນາຄົຕ (ອກຣິຍທິຏຖິ ບໍ່ເຊື່ອ ທັ້ງເຫຕຸທັ້ງຜົລ)
(໘) ອິທປຈຸຈຍຕາປຏິຈຸຈສມຸປຸປນຸເນສຸ ຘມຸເມສຸ ອຌານໍ	ບໍ່ແຈ້ງໃນທັມມ໌ທີ່ມີເຫຕຸໃຫ້ເກີດຜົລອັນຕໍ່ເນື່ອງກັນ (ອັຕຕທິຏຖິເຊື່ອວ່າເປັນຕົວເປັນຕົນ)

ອຫິຣິກເຈຕສິກ

໒. ອຫິຣິເຈຕສິກ ຄື ຄວາມບໍ່ລະອາຍຣຕໍ່ການທຳບາປ ບໍ່ລະອາຍຣຕໍ່ການທຳອກຸສົລ ມີລັກຂຕາທິຈຕຸກະ ດັ່ງນີ້

ກາຍທຸຈຸຈຣິຕາທິຫີອຊິຄຸຈຸຈນລກຸຂນໍ	ມີການບໍ່ຊັງຣຕໍ່ກາຍທຸຈຣິຕ ເປັນຕົ້ນ ເປັນລັກສຕະ
ປາປານໍກຣຕຣສໍ	ມີການກະທຳບາປ ເປັນກິຈ
ອສງໂກຈນປຈຸຈຸປຏຸຖານໍ	ມີຄວາມບໍ່ຊັງຕໍ່ບາປທັມມ໌ ເປັນຜົລ
ອຕຸຕອຄາຣວປທຏຸານໍ	ມີການບໍ່ເຄົາຣົພຕົນ ເປັນເຫຕຸໃກ້ລ

ທີ່ບໍ່ເຄົາຣົພຕົນ ເພາະ

ກ. ບໍ່ລະອາຍຕໍ່ **ວັຍ**

ຂ. ບໍ່ລະອາຍຕໍ່ **ເພສ**

ຄ. ບໍ່ລະອາຍຕໍ່ **ຕຣະກູລ**

ງ. ບໍ່ລະອາຍຕໍ່ **ອກຸສົລ**

ອໂນຕຕັປປເຈຕສິກ

໓. **ອໂນຕຕັປເຈຕສິກ** ຄື ຄວາມບໍ່ສະດຸ້ງຢ້ານຕໍ່ການທຳບາປ ບໍ່ສະດຸ້ງຢ້ານຕໍ່ການທຳອກຸສົລ ມີລັກຂະນາທິຈຕຸກະ ດັ່ງນີ້

ອນຸຕ຺ຕາສລກ຺ຂນໍ	ມີການບໍ່ສະດຸ້ງຢ້ານຕໍ່ບາປ ເປັນລັກສນະ
ປາປານໍກຣຕຣສໍ	ມີການທຳບາປ ເປັນກິຈ
ອສງ຺ໂກຈນປຈ຺ຈຸປຎ຺ຖານໍ	ມີຄວາມບໍ່ຊັງຕໍ່ບາປທັມມ໌ ເປັນຜົລ
ປຣອຄາຣວປທຎ຺ຖານໍ	ບໍ່ມີການເຄົາຣົພຜູ້ອື່ນ ເປັນເຫຕຸໃກ້ລ

ອຸທັຈຈເຈຕສິກ

໔. **ອຸທັຈຈເຈຕສິກ** ຄືຄວາມຟຸ້ງຊ່ານ ບໍ່ສງົບ ຄິດຟຸ້ງໄປໃນອາຣົມຕ໌ຕ່າງ ໆ ມີລັກຂະນາທິຈຕຸກະ ດັ່ງນີ້

ອວູປສມລກ຺ຂນໍ	ມີຄວາມບໍ່ສງົບ ເປັນລັກສນະ
ອນວຕ຺ຖານຣສໍ	ມີການບໍ່ໝັ້ນໃນອາຣົມຕ໌ດຽວ ເປັນກິຈ
ກນ຺ຕຕ຺ຖ ປຈ຺ຈຸປຎ຺ຖານໍ	ມີຄວາມຫວັ່ນໄຫວ ເປັນຜົລ
ອໂຍນິໂສມນສິກາຣ ປທຎ຺ຖານໍ	ມີການບໍ່ເອົາໃຈໃສ່ເປັນອັນດີຕໍ່ອາຣົມຕ໌ນັ້ນ ເປັນເຫຕຸໃກ້ລ

ໂລກເຈຕສິກ

໕. **ໂລກເຈຕສິກ** ຄື ຄວາມຮັກ ຄວາມຢາກໄດ້ ຄວາມຕິດໃຈໃນອາຣົມຕ໌ທັງ ໖ ມີລັກຂະນາທິຈຕຸກະ ດັ່ງນີ້

ອາຣມ຺ມຄຫລກ຺ຂໂຕ	ມີການຍຶດໝັ້ນຊຶ່ງອາຣົມຕ໌ ເປັນລັກສນະ
ອກິສງ຺ຄຣໂສ	ມີການຕິດໃນອາຣົມຕ໌ ເປັນກິຈ
ອປຣິຈ຺ຈາຄປຈ຺ຈຸປຎ຺ຖາໂນ	ມີການບໍ່ບໍຣິຈາຄ ເປັນຜົລ

ສໍໂຍຊນິຍມ຺ເມສຸ ອສ຺ສາທທສ຺ສນປທຎ຺ຖາໂນ ມີການເບິ່ງດ້ວຍຄວາມຍິນດີໃນສັງໂຍຊນ໌ ເປັນເຫຕຸໃກ້ລ

ອັຖຂອງໂລກະໂດຍປຣິຍາຍ ໃນໄວຍກຣຕ໌ ຕາມປາລີໃນປຣມັຕຖທີປນີຜີກາ ໄດ້ຈຳແນກອອກໄປ ໑໐ ປຣະການ ຄື

(໑) **ຕັຕຫາ** ຄວາມຕ້ອງການ	(໒) **ຣາຄະ** ຄວາມກຳຫນັດ
(໓) **ກາມະ** ຄວາມໃຄຣ່	(໔) **ນັນທິ** ຄວາມເພລີດເພລີນ
(໕) **ອກິຊຊາ** ຄວາມເພັ່ງເລັງ	(໖) **ຊເນຕຕິ** ຄວາມກໍ່ໃຫ້ເກີດກິເລສ

(໗) **ໂປໂນພ̣ພວິກ** ຄວາມນຳໃຫ້ເກີດໃນພົບໃໝ່ (໙) **ອິຈ̣ຈາ** ຄວາມປັຕຖນາ

(໘) **ອາສາ** ຄວາມຫວັງ (໑໐) **ສັງໂຍຊນ໌** ຄວາມກ່ຽວຂ້ອງ ຄວາມຜູກພັນ ຜູກມັດ ຮັດໄວ້ ລ່າມໄວ້

ປຣິຕສ̣ສຕີຕິ ຕណ̣ຫາ ฯ (ວິສຸທ̣ທິມັຄ̣ຄ) ຄວາມກະຫາຍຢາກໄດ້ຊຶ່ງອາຣົມຕ໌ນັ້ນເອີ້ນວ່າ ***ຕັណຫາ*** *###*

ກາໂມ ຈ ໂສຕណ̣ຫາ ຈາຕິ ກາມຕណ̣ຫາ ฯ (ປຣມັຕຖທີປນີຜີກາ) ຄວາມກຳຫນັດທີ່ຢາກໄດ້ຊຶ່ງກາມຄຸຕອາຣົມຕ໌ນັ້ນ ເອີ້ນວ່າ **ກາມຕັណຫາ**

ສສ̣ສຕທິຜ̣ຖິ ສຫຄໂຕ ຫິ ຣາໂຄ ກວຕណ̣ຫາຕິ ວຸຈ̣ຈຕິ ฯ (ວິສຸທ̣ທິມັຄ̣ຄ) ຕັណຫາທີ່ເກີດພ້ອມດ້ວຍ ສັສສຕທິຜ̣ຖິ ເອີ້ນວ່າ **ກວຕັណຫາ**

ອຸຈ̣ເຊທທິຜ̣ຖິ ສຫຄໂຕ ຫິ ຣາໂຄ ວິກວຕណ̣ຫາ ວຸຈ̣ຈຕິ (ວິສຸທ̣ທິມັຄ̣ຄ) ຕັណຫາທີ່ເກີດພ້ອມດ້ວຍ ອຸຈເຊທທິຜ̣ຖິ ເອີ້ນວ່າ **ວິກວຕັណຫາ**

ທິຜ̣ຖິເຈຕສິກ

໕. ທິຜ̣ຖິເຈຕສິກ ຄື ຄວາມເຫັນຜິດຈາກຄວາມເປັນຈິງໃນສກາວລັມມ໌ ມີລັກຂຕາທິຈຕຸກະດັ່ງນີ້

ອໂຍນິໂສ ອກິນິເວສ ລກ̣ຂណາ	ມີການຖືໝັ້ນດ້ວຍຫາປັญญາບໍ່ໄດ້ ເປັນ ລັກສຕະ
ປຕາມາສ ຣສາ	ມີການຖືຜິດຈາກສກາວະ ເປັນ ກິຈ
ມິຈ̣ຈາກິນິເວສປຈ̣ຈຸປຜ̣ຖານາ	ມີການຍຶດຖືຄວາມເຫັນຜິດ ເປັນ ຜົລ
ອຣິຍານໍ ອທສ̣ສນ ກາມຕາທິ ປທຜ̣ຖານາ	ບໍ່ຕ້ອງການ ເຫັນພຣະອຣິຍະ ເປັນຕົ້ນ ເປັນ ເຫຕຸໃກ້ລ

ຄຳວ່າ **ທິຜ̣ຖິ** ແປລຕາມພຍັญຊນະ ຄື ຕາມຕົວອັກສຣ ຕາມສັພທ໌ ກໍແປລວ່າຄວາມເຫັນ ບໍ່ເຈາະຈົງວ່າເປັນຄວາມເຫັນຜິດຫຼືຄວາມເຫັນຖືກຕ້ອງຕາມສກາວະ

ແຕ່ໂດຍອັຖ ຄື ຕາມຄວາມຫມາຍແຫ່ງລັມມ໌ແລ້ວ ຖ້າໃຊ້ລອຍໆ ວ່າ **ທິຜ̣ຖິ** ລ້າໆ ກໍຫມາຍວ່າເປັນມິຈ̣ຈາທິຜ̣ຖິ ຄືຄວາມເຫັນຜິດສເມີໄປ ເວັ້ນໄວ້ແຕ່ໃນທີ່ໃດບົ່ງວ່າເປັນ ສັມມາທິຜ̣ຖິ ຈຶ່ງມີຄວາມຫມາຍວ່າເປັນຄວາມເຫັນຊອບຄວາມເຫັນຖືກ

ໂດຍຈະເພາະ ທິຜ̣ຖິເຈຕສິກ ເປັນຄວາມເຫັນຜິດສເມີໄປ ແລະທິຜ̣ຖິນີ້ແບ່ງເປັນຫຍາບໆ ເປັນ ໒ ຄື **ທິຜ̣ຖິສາມັญ** ແລະ **ທິຜ̣ຖິພິເສຫ**

ທິຜ̣ຖິສາມັญ ໄດ້ແກ່ ສັກກາຍທິຜ̣ຖິ ຄື ເຫັນເປັນຕົວຕົນບຸຄຄົລເຮົາເຂົາ ອັນເປັນຄວາມເຫັນຜິດ ແຕ່ທີ່ຈັດເປັນສາມັญ ເພາະທິຜ̣ຖິຊນິດນີ້ ມີປຣະຈຳທົ່ວທຸກຕົວສັຕວ໌ເປັນປົກຕິວິສັຍ (ເວັ້ນພຣະອຣິຍບຸຄຄົລ)

ທິຍກິພິເສສ ໄດ້ແກ່ ນິຍຕມິຈສາທິຍກິ ໓ ຄື **ອເຫຕຸກທິຍກິ** ບໍ່ເຊື່ອເຫຕຸ **ນັຕຖິກທິຍກິ** ບໍ່ເຊື່ອຜົລ **ອກິຣິຍທິຍກິ** ບໍ່ເຊື່ອທັ້ງເຫຕຸທັ້ງຜົລ ແລະ ***ສັສສຕທິຍກິ*** ເຫັນວ່າທ່ຽງແທ້ແນ່ນອນ ***ອຸຈເຉທທິຍກິ*** ເຫັນວ່າສູນ ຕລອດທັ້ງ ***ທິຍກິ ໖໒*** ທີ່ຈັດເປັນທິຍກິພິເສສ ກໍເພາະວ່າທິຍກິຊນິດນີ້ບາງຄົນກໍມີ ບາງຄົນກໍບໍ່ມີ

ມານເຈຕສິກ

໗. ມານເຈຕສິກ ຄື ຄວາມຖືຕົນຄວາມທະນົງຕົນ ມີລັກຂະນາທິຈຕຸກະດັ່ງນີ້

ອຸຓ຺ຓຕິ ລກ຺ຂໂຓ	ມີການທະນົງຕົນ ເປັນລັກສະນະ
ສມ຺ປຄ຺ຄ ຣໂສ	ມີການຍົກຍ້ອງສັມປຍຸຕຕທັມມ໌ ເປັນກິຈ
ເກຕຸກມ຺ຍຕາປຈ຺ຈຸປຏ຺ຐາໂນ	ມີຄວາມປັຕຖນາສູງ ເປັນຜົລ
ທິຏ຺ຐິວິປ຺ປຍຸຕ຺ຕໂລກ ປທຏ຺ຐາໂນ	ມີໂລກຈິຕທີ່ເປັນທິຍກິວິປປຍຸຕຕ ເປັນເຫຕຸໃກ້ລ

ມານະ ນີ້ທ່ານຈັດໄວ້ ໙ ປຣະການ ຄື

(໑) ເປັນຜູ້ເລີສວ່າເຂົາ ສຳຄັຍຕົວວ່າ ເລີສວ່າເຂົາ

(໒) ເປັນຜູ້ເລີສວ່າເຂົາ ສຳຄັຍຕົວວ່າ ສເມີເຂົາ

(໓) ເປັນຜູ້ເລີສວ່າເຂົາ ສຳຄັຍຕົວວ່າ ເລວກວ່າເຂົາ

(໔) ເປັນຜູ້ສເມີເຂົາ ສຳຄັຍຕົວວ່າ ເລີສວ່າເຂົາ

(໕) ເປັນຜູ້ສເມີເຂົາ ສຳຄັຍຕົວວ່າ ສເມີເຂົາ

(໖) ເປັນຜູ້ເລວກວ່າເຂົາ ສຳຄັຍຕົວວ່າ ເລວກວ່າເຂົາ

(໗) ເປັນຜູ້ເລວກວ່າເຂົາ ສຳຄັຍຕົວວ່າ ເລີສວ່າເຂົາ

(໘) ເປັນຜູ້ສເມີເຂົາ ສຳຄັຍຕົວວ່າ ສເມີເຂົາ

(໙) ເປັນຜູ້ເລວກວ່າເຂົາ ສຳຄັຍຕົວວ່າ ເລວກວ່າເຂົາ

ອຕິມານະ = ດູຫມິ່ນທ່ານ, **ສາຣັມກະ** = ແຂ່ງດີ, **ຖັມກະ** = ຫົວດື້, **ສາເຖຍຍະ** = ໂອ້ອວດ ເຫລົ່ານີ້ຈັດເປັນມານະທັ້ງນັ້ນ

ຂໍ້ຄວຣສັງເກຕ ຄືຖ້າເກີດມີການປຽບທຽບເຮົາກັບເຂົາຂຶ້ນເມື່ອໃດກໍເປັນມານະເມື່ອນັ້ນ ບໍ່ວ່າການປຽບທຽບນັ້ນຈະເປັນການປຽບທຽບດ້ວຍ ຊາຕິ ໂຄຕຣ ສກຸລ ຣູປ ສົມບັຕິ ຊັພຍ໌ ສິລປະວິທຍາ ການງານ ຫຼື ຄວາມສລຽວສລາດ

ໂທສເຈຕສິກ

໗. ໂທສເຈຕສິກ ຄື ຄວາມໂກດ ຄວາມບໍ່ພໍໃຈໃນອາຣົມທັ້ງ ໖ ມີລັກຂະນາທິຈະຕຸກະ ດັ່ງນີ້

ຈຕ຺ຑິກລກ຺ຂໂຓ	ມີຄວາມທຍາບກຣະດ້າງ ເປັນລັກສະນະ
ນິສ຺ສຍທາຫນຣໂສ	ມີການທຳໃຫ້ຈິດຕົນແລະຜູ້ອື່ນຫມົ່ນໄຫມ້ ເປັນກິຈ
ທູສນປຈ຺ຈຸປຏ຺ຖາໂນ	ມີການປຣະທຸທຸຮ້າຍ[1] ການທຳລາຍ ເປັນຜົລ
ອາຆາຕວຕ຺ຖຸ ປທຏ຺ຖາໂນ	ມີອາຄາຕວັດຖຸ ເປັນເຫຕຸໃກ້ລ

ຄວາມບໍ່ພໍໃຈ ເສັຽໃຈ ກລຸ້ມໃຈ ຣຳຄານໃຈ ຫງຸດຫງິດ ໂກດ ຊັງ ຢ້ານ ປຣະທຸທຸຮ້າຍ ທຳລາຍເຫລົ່ານັ້ນເປັນລັກສະນະຫຼືເປັນຕົວໂທສະທັ້ງນັ້ນ

ອາຄາຕວັດຖຸ ອັນເປັນເຫຕຸໃກ້ລໃຫ້ເກີດໂທສະນັ້ນມີ ໑໐ ປຣະການ ຄື

(໑) ອາຄາຕເຂົາ ເພາະຄິດວ່າເຂົາ ໄດ້ ທຳຄວາມເສື່ອມເສັຽໃຫ້ແກ່ເຮົາ

(໒) ອາຄາຕເຂົາ ເພາະຄິດວ່າເຂົາ ກຳລັງ ທຳຄວາມເສື່ອມເສັຽໃຫ້ແກ່ເຮົາ

(໓) ອາຄາຕເຂົາ ເພາະຄິດວ່າເຂົາ ຈັກ ທຳຄວາມເສື່ອມເສັຽໃຫ້ແກ່ເຮົາ

(໔) ອາຄາຕເຂົາ ເພາະຄິດວ່າເຂົາ ໄດ້ ທຳຄວາມເສື່ອມເສັຽໃຫ້ແກ່ຜູ້ທີ່ເຮົາຮັກເຮົາມັກ

(໕) ອາຄາຕເຂົາ ເພາະຄິດວ່າເຂົາ ກຳລັງ ທຳຄວາມເສື່ອມເສັຽໃຫ້ແກ່ຜູ້ທີ່ເຮົາຮັກເຮົາມັກ

(໖) ອາຄາຕເຂົາ ເພາະຄິດວ່າເຂົາ ຈັກ ທຳຄວາມເສື່ອມເສັຽໃຫ້ແກ່ຜູ້ທີ່ເຮົາຮັກເຮົາມັກ

(໗) ອາຄາຕເຂົາ ເພາະຄິດວ່າເຂົາ ໄດ້ ທຳຄຸນປຣະໂຍຊນ໌ໃຫ້ແກ່ຜູ້ທີ່ເຮົາຊັງ

(໘) ອາຄາຕເຂົາ ເພາະຄິດວ່າເຂົາ ກຳລັງ ທຳຄຸນປຣະໂຍຊນ໌ໃຫ້ແກ່ຜູ້ທີ່ເຮົາຊັງ

(໙) ອາຄາຕເຂົາ ເພາະຄິດວ່າເຂົາ ຈັກ ທຳຄຸນປຣະໂຍຊນ໌ໃຫ້ແກ່ຜູ້ທີ່ເຮົາຊັງ

(໑໐) ຄວາມອາຄາຕເກີດຂຶ້ນໃນຖານະອັນບໍ່ສົມຄວນ ເຊັ່ນເກີດໂກດຂຶ້ນເມື່ອເດີນສະດຸດຕໍໄມ້ ຫຼື ຢຽບຫນາມ ເປັນຕົ້ນ

---

[1] ປຣະທຸທຸຮ້າຍ ອ່ານວ່າ ປຣະ-ທຸດ-ສະ-ຮ້າຍ (ຫມາຍເຖິງ "ທຳຮ້າຍ")

ອິສສາເຈຕະສິກ

໙. **ອິສສາເຈຕະສິກ** ຄືທັມມະຊາດທີ່ປຸງແຕ່ງຈິດ ໃຫ້ຈິດເກີດຄວາມບໍ່ຍິນດີ ຄວາມອິດສາໃນການໄດ້ລາບໄດ້ຍົດຂອງຜູ້ອື່ນ ມີລັກຂະນາທິຈະຕຸກະ ດັ່ງນີ້

ປະສມ຺ປຕ຺ຕິນໍ ອຸສ຺ສູຍນລກ຺ຂຓາ	ມີການອິດສາໃນສົມບັດຂອງຜູ້ອື່ນ ເປັນລັກສະນະ
ຕຕ຺ເຖວ ອນພິຣຕິຣສາ	ມີການບໍ່ພໍໃຈໃນຄວາມມັ່ງມີຂອງຜູ້ອື່ນ ເປັນກິດ
ຕໂຕວິມຸຂການປຈ຺ຈຸປຏ຺ຊານາ	ມີການເບືອນໜ້າໜີຈາກສົມບັດຂອງຜູ້ອື່ນ ເປັນຜົນ
ປະສມ຺ປຕ຺ຕິປທຏ຺ຊານາ	ມີສົມບັດຂອງຜູ້ອື່ນ ເປັນເຫດໃກ້ລ

ມັຈຉະລິຍເຈຕະສິກ

໑໐. **ມັຈຉະລິຍເຈຕະສິກ** ຄື ທັມມະຊາດທີ່ປຸງແຕ່ງຈິດ ໃຫ້ຈິດເກີດຄວາມຕະຫນີ່ຫນຽວແນ່ນ ບໍ່ຍອມເສັຽສະລະ ມີລັກຂະນາທິຈະຕຸກະ ດັ່ງນີ້

ອຕ຺ຕໂນສມ຺ປຕ຺ຕິນໍ ນິຄູຫນລກ຺ຂຓໍ	ມີການເຊື່ອງສົມບັດຂອງຕົນ ເປັນລັກສະນະ
ຕາສໍ ເຢວ ປເຣຫິສາລາຣນການ ອກ຺ຂມນຣສໍ	ມີການບໍ່ມັກໃຫ້ສົມບັດຂອງຕົນເປັນສາທາລະນະແກ່ຜູ້ອື່ນ ເປັນກິດ
ສງ຺ໂກຈນປຈ຺ຈຸປຏ຺ຊານໍ	ມີຄວາມຫົດຫູ່ ຫວງແຫນ ບໍ່ເຜື່ອແຜ່ ເປັນຜົນ
ອຕ຺ຕສມ຺ປຕ຺ຕິປທຏ຺ຊານໍ	ມີສົມບັດຂອງຕົນ ເປັນເຫດໃກ້ລ

ມັຈຉະລິຍະ ໕ ປຣະການ ໄດ້ແກ່

(໑) ອາວາສມັຈຉະລິຍ ຕະຫນີ່ ທີ່ຢູ່
(໒) ກຸລມັຈຉະລິຍ ຕະຫນີ່ ສກຸລ
(໓) ລາກມັຈຉະລິຍ ຕະຫນີ່ ລາກ
(໔) ວັຕຕມັຈຉະລິຍ ຕະຫນີ່ ວັຣຕະ
(໕) ທັມມ໌ມັຈຉະລິຍ ຕະຫນີ່ ທັມມ໌

ກຸກກຸຈຈເຈຕສິກ

໑໑. **ກຸກກຸຈຈເຈຕສິກ** ຄືທັມມຊາຕິທີ່ເດືອດຮ້ອນຣຳຄານໃຈໃນສິ່ງຊົ່ວ ອກຸສົລກັມມ໌ທີ່ໄດ້ເຮັດໄປແລ້ວ ແລະຮ້ອນໃຈໃນກຸສົລກັມມ໌ ຄວາມດີທີ່ຍັງບໍ່ໄດ້ເຮັດ ມີລັກຂຕາທິຈຕຸກະ ດັ່ງນີ້

ປຈ຺ຈານຸຕາປລກ຺ຂຓ຺	ມີຄວາມເດືອດຮ້ອນຢູ່ເນືອງໆ ໃນກາຍຫລັງ ເປັນລັກສຕະ
ກຕາກຕານຸໂສຈນຣສ໌	ມີການຕາມເດືອດຮ້ອນຢູ່ເນືອງ ໆ ເຖິງບາປທີ່ໄດ້ກຣະທຳແລ້ວ ແລະບຸຍທີ່ບໍ່ໄດ້ກຣະທຳ ເປັນກິຈ
ວິປ຺ປຏິສາຣປຈ຺ຈຸປຏ຺ຖານ໌	ມີຄວາມກິນແຫນງໃຈຢູ່ ເປັນຜົລ
ກຕາກຕປທຏ຺ຖານ໌	ມີການທຳບາປ ບໍ່ໄດ້ກຣະທຳບຸຍ ເປັນເຫຕຸໃກ້ລ

ຖີນເຈຕສິກ

໑໔. **ຖີນເຈຕສິກ** ຄືເຈຕສິກທີ່ທຳໃຫ້ຈິຕທໍ້ຖອຍຫົດຫູ່ ເຊື່ອງຊຶມ ບໍ່ໃສ່ໃຈໃນອາຣົມຕ໌ ມີລັກຂຕາທິຈຕຸກະ ດັ່ງນີ້

ອນຸສ຺ສາຫລກ຺ຂຓ຺	ມີການບໍ່ອຸຕສາຫະ ເປັນລັກສຕະ
ວິຣິຢວິໂນທນຣສ໌	ມີການທຳລາຍຄວາມພຽຣ ເປັນກິຈ
ສໍສີທນປຈ຺ຈຸປຏ຺ຖານ໌	ມີຄວາມທໍ້ຖອຍ ເປັນຜົລ

ອໂຍນິໂສມນສິການປທຏ຺ຖານ໌ ມີການບໍ່ເອົາໃຈໃສ່ເປັນອັນດີຕໍ່ອາຣົມຕ໌ນັ້ນ ເປັນເຫຕຸໃກ້ລ

ມິທ຺ຣເຈຕສິກ

໑໕. **ມິທ຺ຣເຈຕສິກ** ຄືເຈຕສິກທີ່ທຳໃຫ້ເຈຕສິກທີ່ເກີດຮ່ວມດ້ວຍຕົນໃຫ້ຫົດຫູ່ທໍ້ຖອຍ ງ່ວງເຫງົາຫາວນອນ ແລະງ່ວງຊຶມຫລັບ ຈັບອາຣົມຕ໌ບໍ່ຕິດ ມີລັກຂຕາທິຈຕຸກະ ດັ່ງນີ້

ອກມ຺ມຍ຺ຍຕາລກ຺ຂຓ຺	ມີຄວາມບໍ່ຄວຣແກ່ການງານ ເປັນລັກສຕະ
ໂອທຫນຣສ໌	ມີການກັ້ນກຳບັງກຸສົລ ເປັນກິຈ
ລີນຕາປຈ຺ຈຸປຏ຺ຖານ໌	ມີຄວາມທໍ້ຖອຍ ເປັນຜົລ
ອໂຍນິໂສມນສິການປທຏ຺ຖານ໌	ມີການບໍ່ເອົາໃຈໃສ່ເປັນອັນດີຕໍ່ອາຣົມຕ໌ນັ້ນ ເປັນເຫຕຸໃກ້ລ

ວິຈິກິຈຊາເຈຕສິກ

໑໔. **ວິຈິກິຈຊາເຈຕສິກ** ຄື ຄວາມສົງສັຍ ຄວາມລັງເລບໍ່ແນ່ໃຈ ໃນອາຣົມຕ໌ຕ່າງ ໆ ສົງສັຍຕັດສິນອາຣົມຕ໌ບໍ່ໄດ້ ມີລັກຂຕາທິຈຕຸກະ ດັ່ງນີ້

ສໍສຍລກ຺ຂຕາ	ມີຄວາມສົງສັຍ ເປັນລັກສຕະ
ກມ຺ປນຣສາ	ມີການຫວັ່ນໄຫວໃນອາຣົມຕ໌ ເປັນກິຈ
ອນິຈ຺ຊຍປຈ຺ຈຸປຎ຺ຖານາ	ມີການບໍ່ສາມາຖຕັດສິນໃຈໄດ້ ເປັນຜົລ
ອໂຍນິໂສມນສິການປທຎ຺ຖານາ	ມີການບໍ່ເອົາໃຈໃສ່ເປັນອັນດີຕໍ່ອາຣົມຕ໌ນັ້ນ ເປັນເຫຕຸໃກ້ລ

ຄວາມສົງສັຍທັ້ງຫລາຍ ບໍ່ແມ່ນເປັນວິຈິກິຈຊາເຈຕສິກນີ້ທັ້ງຫມົດ ຄວາມສົງສັຍໃນວິຈິກິຈຊາເຈຕສິກນີ້ ຫມາຍຈະເພາະສົງສັຍໃນທັມມ໌ ໘ ປຣະການເທົ່ານັ້ນ ຄື

(໑) ສົງສັຍໃນພຣະພຸທທເຈົ້າ ໄດ້ແກ່ສົງສັຍໃນພຣະສຣີຣະ (ວ່າເຫັນຈະບໍ່ມີຕົວຈິງ ເປັນຕາຈະສົມມຸຕີຂຶ້ນ) ຫຼື ສົງສັຍໃນພຣະຄຸຕ (ພຣະພຸທທຄຸຕ ໙)

(໒) ສົງສັຍໃນພຣະທັມມ໌ ວ່າມັຄຄ ໔ ຜົລ ໔ ນິພພານ ໑ ມີຈິງບໍ່ແລະທັມມ໌ນີ້ນຳອອກຈາກທຸກຂ໌ ໄດ້ຈິງບໍ່

(໓) ສົງສັຍໃນພຣະສົງຄ໌ ວ່າສົງຄ໌ທີ່ຕັ້ງຢູ່ໃນມັຄຄ ໔ ຜົລ ໔ ມີຈິງບໍ່ ສົງຄ໌ທີ່ປະຕິບັຕິດີຈິງມີບໍ່ ຜົລແຫ່ງທານທີ່ຖວາຍແກ່ສົງຄ໌ ມີຈິງບໍ່

(໔) ສົງສັຍໃນສິກຂາ ໓ (ສີລ ສມາທິ ປັຍຍາ) ວ່າມີຈິງບໍ່ ຜລານິສົງສ໌ແຫ່ງການສຶກສາປະຕິບັຕິໃນສິກຂາ ໓ ມີຈິງບໍ່

(໕) ສົງສັຍໃນຂັນທ໌ ໕ ອາຍຕນ ທາຕຸທີ່ເປັນສ່ວນອະດີຕມີຈິງບໍ່ ຄືສົງສັຍວ່າຊາຕິກ່ອນມີຈິງບໍ່ (ອເຫຕຸກທິຎຽ)

(໖) ສົງສັຍໃນຂັນທ໌ ອາຍຕນ ທາຕຸ ທີ່ເປັນອນາຄົຕ ມີຈິງບໍ່ ຄືສົງສັຍວ່າ ຊາຕິຫນ້າມີຈິງບໍ່ (ອຸຈເຉທທິຎຽ)

(໗) ສົງສັຍໃນຂັນທ໌ ອາຍຕນ ທາຕຸ ທັ້ງທີ່ເປັນສ່ວນອະດີຕແລະອນາຄົຕນັ້ນ ມີຈິງບໍ່ ຄືສົງສັຍທັ້ງຊາຕິກ່ອນແລະຊາຕິຫນ້າ (ອກິຣິຍທິຎຽ)

(໘) ສົງສັຍໃນປະຕິຈຈສມຸປບາທທັມມ໌ ຄື ທັມມ໌ທີ່ເປັນເຫຕຸເປັນຜົລອາສັຍກັນເກີດຂຶ້ນຕໍ່ເນື່ອງກັນໄປໂດຍບໍ່ຂາດສາຍ ເລີຍນັ້ນມີຈິງບໍ່ (ອັຕຕທິຎຽ)

ອນຶ່ງຄວາມສົງສັຍຢ່າງອື່ນທີ່ບໍ່ແມ່ນທັມມ໌ ໘ ປຣະການ ເຊັ່ນສົງສັຍໃນເຣື່ອງສົມມຸຕິແລະບັນຍັຕິ ບໍ່ເປັນກິເລສ

ໂສກາຕເຈຕສິກ

ໂສກາຕເຈຕສິກ ເປັນເຈຕສິກທີ່ດີງາມ ບໍ່ເສົ້າຫມອງ ບໍ່ຮ້ອນຮົນ ເມື່ອປຣະກອບກັບຈິຕ ກໍ່ເຮັດໃຫ້ຈິຕນັ້ນດີງາມ ປຣາສຈາກຄວາມຮ້ອນຮົນ ໃຫ້ຈິຕຕັ້ງຢູ່ໃນສີລທັມມ໌ ມີການເວັ້ນຈາກບາປ ເວັ້ນຈາກທຸຈຣິຕຕ່າງ ໆ ຈັ່ງຊັ້ນເຈຕສິກ ປຣະເພທນີ້ ຈຶ່ງເອີ້ນວ່າ "**ໂສກາຕເຈຕສິກ**"

ຈິຕທີ່ມີໂສກາຕເຈຕສິກປຣະກອບ ກໍ່ເອີ້ນວ່າ **ໂສກາຕຈິຕ** ສ່ວນຈິຕໃດທີ່ບໍ່ມີໂສກາຕເຈຕສິກປຣະກອບ ກໍ່ເອີ້ນວ່າ **ອໂສກາຕຈິຕ**

ໂສກາຕເຈຕສິກ ມີຈຳນວນ ໒໕ ດວງ ແລະຍັງແບ່ງອອກໄດ້ເປັນ ໔ ພວກ ຄື

ກ. **ໂສກາຕສາທາຣຕເຈຕສິກ** ມີ ໑໙ ດວງ ເປັນເຈຕສິກທີ່ສາທາຣຕະກັບໂສກາຕຈິຕທັ້ງຫມົດ ຫມາຍຄວາມວ່າ ໂສກາຕຈິຕ ໕໙ ຫຼື ໙໑ ດວງນັ້ນ ບໍ່ວ່າດວງໃດດວງນຶ່ງເກີດຂຶ້ນ ຈະຕ້ອງມີໂສກາຕສາທາຣຕເຈຕສິກນີ້ປຣະກອບພ້ອມກັນທັ້ງ ໑໙ ດວງ ບໍ່ມີເວັ້ນເລີຍ

ຂ. **ວິຣຕີເຈຕສິກ** ມີ ໓ ດວງ ເປັນເຈຕສິກທີ່ເວັ້ນຈາກບາປທັມມ໌ທັ້ງປວງ ອັນເກີດຈາກກາຍທຸຈຣິຕ ແລະວຈີທຸຈຣິຕ

ຄ. **ອັປປມັນຍາເຈຕສິກ** ມີ ໒ ດວງ ເປັນເຈຕສິກທີ່ມີຄວາມຮູ້ແຜ່ໄປບໍ່ມີປຣະມາຕ ເອີ້ນວ່າ **ພຣົຫ໌ມວິຫາຣ** ກໍ່ໄດ້ ທີ່ເອີ້ນວ່າອັປປມັນຍານັ້ນເພາະແຜ່ໄປໃນສັຕວ໌ທັ້ງຫລາຍຈົນປຣະມາຕບໍ່ໄດ້ ທີ່ເອີ້ນວ່າພຣົຫ໌ມວິຫາຣນັ້ນເພາະທັມມ໌ນີ້ເປັນທີ່ຢູ່ສຳຣານຂອງພວກພຣົຫ໌ມ

ງ. **ປັນຍາເຈຕສິກ** ມີດວງດຽວ ບໍ່ມີພວກເປັນເຈຕສິກທີ່ມີຄວາມຮູ້ເປັນໃຫຍ່ ເປັນປຣະທານ ປົກຄອງຊຶ່ງສຫຊາຕທັມມ໌ທັ້ງປວງ **ປັນຍິນທຣິຍເຈຕສິກ** ກໍ່ເອີ້ນ

ໂສກາຕສາທາຣຕເຈຕສິກ ໑໙ ດວງ ມີດັ່ງນີ້

ສັທທາເຈຕສິກ

໑. **ສັທທາເຈຕສິກ** ຄື ຄວາມເຊື່ອຖືເຫຕຸຜົລຕາມຄວາມເປັນຈິງ ຄວາມເລື່ອມໃສໃນກຸສົລທັມມ໌ ຄວາມເຊື່ອໃນຝ່າຍດີ ເຊັ່ນ ເຊື່ອຄຳສັ່ງສອນຂອງພຣະພຸທທເຈົ້າ ມີລັກຂຕາທິຈຕຸກະ ດັ່ງນີ້

ສທ຺ທຫານລກ຺ຂຕາ	ມີຄວາມເຊື່ອຖືໃນອາຣົມຕ໌ທີ່ດີ ເປັນລັກສຕະ
ປສາທນຣສາ	ມີການເລື່ອມໃສ ເປັນກິຈ
ອກາຣຸສ຺ສິຍປຈ຺ຈຸປຏ຺ຏານາ	ມີຄວາມບໍ່ຂຸ່ນມົວ ເປັນຜົລ
ສທ຺ເທຍ຺ຍວຕ຺ຖຸປທຏ຺ຏານາ	ມີປູຊນີຍວັຕຖຸເປັນເຫຕຸໃກ້ລ

ສັທທາແມ້ຢ່າງນ້ອຍພຽງເຊື່ອວ່າສັດນັ້ນມີກັມມ໌ເປັນຂອງຕົນ ຄື ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ ພຽງເທົ່ານີ້ກໍເປັນຄຸນຍິ່ງ ບໍ່ຈັ່ງຊັ້ນກໍຈະບໍ່ຢ້ານຕໍ່ບາປກັມມ໌ ຈະເຮັດຫຍັງກໍບໍ່ຄິດວ່າເປັນທຸຈຣິດເສັຽຫາຍ ເພາະສຳຄັນຜິດວ່າຈະບໍ່ຕ້ອງໄດ້ຮັບຜົລນັ້ນ ຖ້າມີສັທທາ ເຊື່ອກັມມ໌ເຊື່ອຜົລຂອງກັມມ໌ແລ້ວ ກໍຈະຕັ້ງຕົນໄວ້ໃນທາງທີ່ຊອບ ປະກອບການງານທີ່ປາສຈາກໂທສສັທທາ ຈຶ່ງເປັນທັມມ໌ເບື້ອງຕົ້ນທີ່ຈະເຮັດໃຫ້ປະກອບຄຸນງາມຄວາມດີ ເປັນບຸນເປັນກຸສົລ ຈົນຫາປະມານບໍ່ໄດ້ **ສັທທາ ພືຊໍ ໆ** ສັທທາປຽບເໝືອນພືຊ (ອັນຈະງອກງາມໂຕໃຫຍ່ໃຫ້ດອກຜົລໃນກາຍໜ້າ)

ເຫຕຸອັນເປັນທີ່ຕັ້ງແຫ່ງຄວາມເລື່ອມໃສສັທທາ

(໑) ຣູປປມານ — ເລື່ອມໃສສັທທາ ເພາະເຫັນຮູປສົມບັດສວຍງາມ

(໒) ລູຂປ຺ປມານ — ເລື່ອມໃສສັທທາ ເພາະເຫັນຄວາມປະພຶດຮຽບຮ້ອຍເຄັ່ງໃນທັມມ໌ວິນັຍ

(໓) ໂຄສປ຺ປມານ — ເລື່ອມໃສສັທທາ ເພາະໄດ້ຟັງຊື່ສຽງລືວ່າດີຢ່າງນັ້ນຢ່າງນີ້

(໔) ຘມ຺ມປ຺ປມານ — ເລື່ອມໃສສັທທາ ເພາະໄດ້ສດັບທັມມ໌ຂອງຜູ້ທີ່ສລາດໃນການສແດງ

ສຕິເຈຕສິກ

໔. **ສຕິເຈຕສິກ** ຄືຄວາມຣະລຶກຮູ້ອາຣົມຕ໌ແລະຢັບຢັ້ງບໍ່ໃຫ້ຈິຕຕົກໄປໃນອກຸສົລ ຄວາມຣະລຶກອາຣົມຕ໌ທີ່ເປັນກຸສົລ ຄວາມຣະລຶກໄດ້ທີ່ຮູ້ທັນອາຣົມຕ໌

ສຕິ ເປັນທັມມ໌ທີ່ມີອຸປການະຫລາຍຕ້ອງໃຊ້ສຕິຕໍ່ເນື່ອງກັນຕລອດເວລາ ໃນທາງຈເຣີນວິປັສສນາຫຼືຈເຣີນສມາທິ ມຸ່ງທາງປະຕິບັຕິຊຶ່ງເປັນທາງສາຍດຽວທີ່ຈະຫລຸດພົ້ນຈາກກິເລສໄປໄດ້ ໂດຍຈເຣີນສຕິປັຏຖານທາງ **ກາຍ ເວທນາ ຈິຕ ທັມມ໌** ມີສຕິຣະລຶກຮູ້ຢູ່ເນືອງ ໆ ວ່າ ກາຍມີປະຕິກູລ ຯລຯ ສຕິມີລັກຂະນາທິຈຕຸກະ ດັ່ງນີ້

ອປິລາປນລກ຺ຂຕາ — ມີຄວາມຣະລຶກໄດ້ໃນອາຣົມຕ໌ເນືອງໆ ຄືມີຄວາມບໍ່ປະມາທ ເປັນລັກສຕະ

ອສມ຺ໂມຫຣສາ — ມີການບໍ່ຫລົງລືມ ເປັນກິຈ

ອາຣກ຺ຂປຈ຺ຈຸປຏ຺ຐານາ — ມີການຮັກສາອາຣົມຕ໌ ເປັນຜົລ

ຖິຣສຍ຺ຍາປທຏ຺ຐານາ — ມີການຈຳໄດ້ແມ່ນຢຳ ເປັນເຫຕຸໃກ້ລ

ສຕິເປັນເຄື່ອງຊັກນຳໃຈໃຫ້ຍຶດຖືກຸສົລທັມມ໌ເປັນອຸດົມຄຕິ ຖ້າຫາກວ່າຂາດສຕິເປັນປະຣະມານເສັຽແລ້ວສມາທິກໍບໍ່ສາມາຖຈະມີໄດ້ເລີຍ ແລະເມື່ອບໍ່ມີສມາທິແລ້ວ ປັນຍາກໍເກີດບໍ່ໄດ້

ເຫຕຸໃຫ້ເກີດສຕິ ໂດຍປົກຕິມີ ໑໗ ປະການ ຄື

(໑) ຄວາມຮູ້ຍິ່ງ ເຊັ່ນ ສຕິຂອງບຸຄຄົລທີ່ຣະລຶກຊາຕິໄດ້ພຣະພຸທທອົງຄ໌ຣະລຶກຊາຕິໄດ້ບໍ່ຈຳກັດຊາຕິຈະຣະລຶກໄດ້ທຸກຊາຕິທີ່ພຣະອົງຄ໌ປັຕຖນາ ສຕິຂອງພຣະອານົນທ໌ຈຳພຣະສູຕທີ່ພຣະພຸທທຈ້າຕຣັສໄວ້ໄດ້ໝົດ

(໒) ຊັພຍ໌ ເປັນເຫຕຸໃຫ້ເຈົ້າຂອງຊັພຍ໌ມີສະຕິ ຄືເມື່ອມີຊັພຍ໌ມັກຈະເກັບຮັກສາໄວ້ຢ່າງດີ ແລະຈະຣະມັດຣະວັງຈົດຈຳໄວ້ວ່າຕົນເກັບຊັພຍ໌ໄວ້ທີ່ໃດ

(໓) ສະຕິເກີດຂຶ້ນ ເນື່ອງຈາກເກີດເຫຕຸການຕ໌ຄັ້ງຍິ່ງໃຫຍ່ໃນຊີວິດ ເຊັ່ນພຣະໂສດາບັນຈະຈຳໄດ້ໂດຍແມ່ນຢຳເຖິງເຫຕຸການຕ໌ທີ່ທ່ານໄດ້ບັນລຸເປັນພຣະໂສດາບັນ ຫຼື ບຸຄຄົລທີ່ໄດ້ຮັບຍົສຍິ່ງໃຫຍ່ເທື່ອນຶ່ງໃນຊີວິດ

(໔) ສະຕິເກີດຂຶ້ນ ໂດຍຣະລຶກເຖິງເຫຕຸການຕ໌ທີ່ຕົນໄດ້ຮັບຄວາມສຸຂທີ່ປຣະທັບໃຈ ເມື່ອນຶກເຖິງກໍຈະຈຳເຣື່ອງຕ່າງ ໆ ໄດ້

(໕) ສະຕິເກີດຂຶ້ນ ເນື່ອງຈາກຄວາມທຸກຂ໌ທີ່ໄດ້ຮັບເມື່ອຣະລຶກເຖິງກໍຈະຈື່ຈຳໄດ້

(໖) ສະຕິເກີດຂຶ້ນ ເພາະເຫັນເຫຕຸການຕ໌ທີ່ຄລ້າຍຄລຶງກັບເຫຕຸການຕ໌ທີ່ຕົນເຄີຍປຣະສົບ

(໗) ສະຕິເກີດຂຶ້ນ ເພາະເຫັນເຫຕຸການຕ໌ທີ່ຕຣົງກັນຂ້າມກັບທີ່ເຄີຍປຣະສົບ

(໘) ສະຕິເກີດຂຶ້ນ ເພາະຄຳເວົ້າຂອງຄົນອື່ນ ເຊັ່ນ ມີຄົນເຕືອນໃຫ້ເກັບຊັພຍ໌ທີ່ລືມໄວ້

(໙) ສະຕິເກີດຂຶ້ນ ເພາະເຫັນເຄື່ອງຫມາຍທີ່ຕົນທຳໄວ້ ເຊັ່ນ ເຫັນປຶ້ມທີ່ຂຽນຊື່ໄວ້ຖືກລືມໄວ້

(໑໐) ສະຕິເກີດຂຶ້ນ ເພາະເຫັນເຣື່ອງຣາວຕ່າງ ໆ ຫຼື ຜົລງານ ເຊັ່ນ ເຫັນພຸທທປຣະວັຕິກໍຣະລຶກເຖິງອົງຄ໌ສົມເດັຈພຣະສັມມາສັມພຸທທເຈົ້າ ເປັນຕົ້ນ

(໑໑) ສະຕິເກີດຂຶ້ນ ເພາະຄວາມຈຳໄດ້ ເຊັ່ນ ມີການນັດຫມາຍໄວ້ ເມື່ອມອງໄປທີ່ກຣະດານກໍຈຳໄດ້ວ່າຕ້ອງໄປຕາມທີ່ໄດ້ນັດໄວ້

(໑໒) ສະຕິເກີດຂຶ້ນ ເພາະການນັບ ເຊັ່ນ ການຈເຣີນສະຕິຣະລຶກເຖິງພຣະພຸທທຄຸຓ ກໍໃຊ້ນັບລູກປຣະຄຳ ເພື່ອບໍ່ໃຫ້ລືມ

(໑໓) ສະຕິເກີດຂຶ້ນ ເພາະການຊົງຈຳເຣື່ອງຣາວຕ່າງ ໆ ທີ່ສຶກສາຄົ້ນຄວ້າ ແລ້ວຈຳເຣື່ອງຣາວຕ່າງ ໆ ໄດ້

(໑໔) ສະຕິເກີດຂຶ້ນ ເພາະການຣະລຶກຊາຕິໄດ້ ໑ ຊາຕິແດ່ ໒ ຊາຕິແດ່ (ບຸຄຄົລທີ່ບໍ່ແມ່ນພຣະພຸທທເຈົ້າ)

(໑໕) ສະຕິເກີດຂຶ້ນ ເພາະການບັນທຶກໄວ້ ເມື່ອເບິ່ງບັນທຶກກໍຈຳໄດ້

(໑໖) ສະຕິເກີດຂຶ້ນ ເພາະຊັພຍ໌ທີ່ເກັບໄດ້ເຊັ່ນເຫັນຊັພຍ໌ກໍນຶກຂຶ້ນໄດ້ວ່າໄດ້ເກັບຊັພຍ໌ໄວ້

(໑໗) ສະຕິເກີດຂຶ້ນ ເພາະສິ່ງທີ່ເຄີຍພົບເຄີຍເຫັນມາແລ້ວ ເມື່ອເຫັນອີກເທື່ອກໍຣະລຶກໄດ້

ຫິຣິເຈຕສິກ

໓. **ຫິຣິເຈຕສິກ** ຄືຄວາມລະອາຍຣຕໍ່ການທຳບາປທຳຊົ່ວ ທັ້ງທາງກາຍ ທາງວາຈາ ທາງໃຈ ບາປຄືທັມມຊາຕິທີ່ທຳໃຫ້ຈິຕເສົ້າຫມອງ ບຸຄຄືທັມມຊາຕິທີ່ຊຳຣະຈິຕໃຫ້ສະອາດຜ່ອງແຜ້ວ ໃນຂຕະທີ່ຈິຕອກຸສົລເກີດຂຶ້ນຢາກຈະປຣະພຣຶຕິຜິດສີລ ໕ ເຄື່ອງປັບຢັ້ງ

ບໍ່ໃຫ້ເກີດອະກຸສົລຈິດນັ້ນກໍຄື **ຫິຣິ** ຄືເກີດຄວາມລະອາຍຕໍ່ບາບທີ່ຈະກະທຳ ຈຶ່ງຢັບຢັ້ງໄວ້ຊ່ອຍບໍ່ໃຫ້ທຳອະກຸສົລ ດັ່ງນັ້ນຫິຣິຈຶ່ງເປັນທັມມ໌ທີ່ເປັນ**ໂລກບາລ** ຄືເປັນທັມມຊາຕິທີ່ຄຸ້ມຄອງໂລກ **ຫິຣິ** ເກີດຂຶ້ນທຳໃຫ້ລະອາຍຕໍ່ບາບຈຶ່ງບໍ່ກລ້າທຳບາບທັ້ງໃນທີ່ລັບແລະທີ່ແຈ້ງ ສິ່ງທີ່ທຳໃຫ້ເກີດຫິຣິ ຄືມີການເຄົາຣົພຕົນເອງ ຈຶ່ງລະອາຍຕໍ່ການທຳບາບ ຫິຣິເຈຕສິກມີລັກຂະນາທິຈະຕຸກະດັ່ງນີ້

ປາປໂຕຊິຄຸຈ຺ຈນລກ຺ຂຕາ	ມີຄວາມຂັຍງຕໍ່ບາບ ເປັນລັກສະນະ
ປາປານໍອກຣຕຣສາ	ມີການບໍ່ທຳບາບ ເປັນກິຈ
ປາປໂຕສງ຺ໂກຈນ ປຈ຺ຈຸປຊ຺ຊານາ	ມີຄວາມລະອາຍຕໍ່ບາບ ເປັນຜົລ
ອຕ຺ຕຄາຣວປທຊ຺ຊານາ	ມີຄວາມເຄົາຣົພໃນຕົນ ເປັນເຫຕຸໃກ້ລ

ໂອຕັປປເຈຕສິກ

໔. **ໂອຕັປປເຈຕສິກ** ຄື ທັມມຊາຕິທີ່ມີຄວາມສະດຸ້ງຢ້ານຕໍ່ຜົລຂອງບາບ ຈຶ່ງບໍ່ທຳບາບ ມີລັກຂະນາທິຈະຕຸກະ ດັ່ງນີ້

ອຕ຺ຕາສນລກ຺ຂຕໍ	ມີຄວາມສະດຸ້ງຢ້ານຕໍ່ບາບ ເປັນລັກສະນະ
ປາປານໍອກຣຕຣສໍ	ມີການບໍ່ທຳບາບ ເປັນກິຈ
ປາປໂຕສງ຺ໂກຈນປຈ຺ຈຸປຊ຺ຊານໍ	ມີຄວາມລະອາຍຕໍ່ບາບ ເປັນຜົລ
ປຣຄາຣວປທຊ຺ຊານໍ	ມີຄວາມເຄົາຣົພຜູ້ອື່ນ ເປັນເຫຕຸໃກ້ລ

ຫິຣິກັບໂອຕັປປະ ຈະເກີດໄດ້ຕ້ອງອາສັຍ ເຫຕຸພາຍນອກ ໔ ເຫຕຸພາຍໃນ ໕ ຢ່າງໃດຢ່າງນຶ່ງ ເຫຕຸພາຍນອກ ໔ ໄດ້ແກ່

(໑) ອຕ຺ຕານຸວາທກຍໍ	ຢ້ານຕໍ່ການຖືກຕິຕຽນຕົນດ້ວຍຕົນເອງ
(໒) ປຣວາທານຸກຍໍ	ຢ້ານຕໍ່ການຖືກຕິຕຽນຕົນຈາກຜູ້ອື່ນ
(໓) ທຕ຺ຑກຍໍ	ຢ້ານຕໍ່ອາຊຍາກັມ຺ ຄືກົດໝາຍບ້ານເມືອງ
(໔) ທຸຄ຺ຄຕິກຍໍ	ຢ້ານຕໍ່ພັຍໃນອະບາຍພູມີ

ເຫຕຸພາຍໃນ ໕ ໄດ້ແກ່

(໑) ກຸລະ	ລະອາຍບາບຢ້ານບາບ ໂດຍຄຳນຶງເຖິງຕະກູລຂອງຕົນ
(໒) ວຢະ	ລະອາຍບາບຢ້ານບາບ ໂດຍຄຳນຶງເຖິງວັຍຂອງຕົນ
(໓) ພາຫຸສັຈຈະ	ລະອາຍບາບຢ້ານບາບ ໂດຍຄຳນຶງເຖິງການສຶກສາຂອງຕົນ
(໔) ຊາຕິມຫັຕຕະ	ລະອາຍບາບຢ້ານບາບ ໂດຍຄຳນຶງເຖິງຊາຕິອັນປະເສີດຂອງຕົນ
(໕) ສັຕຖຸມຫັຕຕະ	ລະອາຍບາບຢ້ານບາບ ໂດຍຄຳນຶງເຖິງພຣະພຸທຣເຈົ້າ ບິດາ ມາຕດາ ຄຣູ ອາຈາຣຍ໌

(ຝ) ຫາປັຊຊຸມຫັຕຕະ ລະອາຍບາບຢ້ານບາບ ໂດຍຄຳນຶງເຖິງ ນໍ່ຣະດົກຂອງພຣະພຸທຣເຈົ້າ ຂອງບິດາມາຣດາ ຊຶ່ງຕົນເອງຈະຕ້ອງຮັບນໍ່ຣະດົກນັ້ນ

(ກ) ສພຣຫມຈາຣີນຫັຕຕະ ລະອາຍບາບຢ້ານບາບ ໂດຍຄຳນຶງເຖິງ ເພື່ອນທີ່ດີທີ່ເຄີຍຄົບມາ

(ກຼ) ສູຣກາວະ ລະອາຍບາບຢ້ານບາບ ໂດຍຄຳນຶງເຖິງ ຄວາມກລ້າຫານແລະຄວາມສງົບສງ່ຽມ ຈງມຕົວຂອງຕົນ

ອໂລກເຈຕສິກ

໕. ອໂລກເຈຕສິກ ຄື ທັມມຊາຕິທີ່ບໍ່ຢາກໄດ້ ບໍ່ຂ້ອງໃນອາຣົມຕ໌ ບໍ່ຕິດໃນອາຣົມຕ໌ ເມື່ອປະສົບໃນອາຣົມຕ໌ນັ້ນ ຈະພຍາຍາມໃຫ້ຫລຸດອອກໄປຈາກອາຣົມຕ໌ນັ້ນ ມີລັກຂະນາທີ່ຈຕຸກະ ດັ່ງນີ້

ອລຄຸຄກາວລກ຺ຂໂຕ ມີຄວາມບໍ່ຕິດອາຣົມຕ໌ ເປັນລັກສຕະ

ອປຣິຄຸຄຫໂສ ມີການບໍ່ຫວງແຫນ ເປັນກິຈ

ອນລ຺ລີນກາວປຈ຺ຈຸປຕ຺ຖານໂນ ມີການບໍ່ຍຶດມັ່ນ ເປັນຜົລ

ໂຍນິໂສມນສິການປທຕ຺ຖານໂນ ມີການເອົາໃຈໃສ່ເປັນອັນດີຕໍ່ອາຣົມຕ໌ນັ້ນ ເປັນເຫຕຸໃກ້ລ

ອໂທສເຈຕສິກ

໖. **ອໂທສເຈຕສິກ** ຄືທັມມຊາຕິທີ່ບໍ່ໂກຣ ບໍ່ຫຍາບຄາຍ ບໍ່ມີປອງຮ້າຍ ບໍ່ປະທຸສຮ້າຍ (ມີເມຕຕາຕໍ່ກັນ) ມີລັກຂະນາທີ່ຈຕຸກະ ດັ່ງນີ້

ອຈຕ຺ທິກລກ຺ຂໂຕ ມີຄວາມບໍ່ດຸຮ້າຍ ເປັນລັກສຕະ

ອາພາຕວິນຍຣໂສ ມີການທຳລາຍຄວາມອາພາຕ ເປັນກິຈ

ໂສມກາວປຈ຺ຈຸປຕ຺ຖານໂນ ມີຄວາມຣົ່ມເຢັນ ເປັນຜົລ

ໂຍນິໂສມນສິການປທຕ຺ຖານໂນ ມີການເອົາໃຈໃສ່ເປັນອັນດີຕໍ່ອາຣົມຕ໌ນັ້ນ ເປັນເຫຕຸໃກ້ລ

ຂນ຺ຕິ ຄື ຄວາມອົດທົນ ທົນຕຣາກຕຣຳ ທົນລຳບາກ ທົນຕໍ່ເຫຕຸທີ່ທຳໃຫ້ເຈັບໃຈ

ອກ຺ໂກຣ ຄື ຄວາມບໍ່ໂກຣ

ສ່ວນ **ເມຕ຺ຕາ** ຍັງປຣະສົງຄ໌ໃຫ້ຜູ້ອື່ນມີຄວາມສຸຂອີກດ້ວຍ

ທັງ **ຂັນຕິ ອັກໂກຣ** ແລະ **ເມຕຕາ** ນີ້ອົງຄ໌ທັມມ໌ໄດ້ແກ່ **ອໂທສະ**

ເມຕຕາ ມີການເພັ່ງເລັງເຫັນຄວາມງົດງາມແຫ່ງຈິຕໃຈຂອງຜູ້ອື່ນ ເປັນການທີ່ເກີດ

ສ່ວນ **ຣາຄະ** ມີການເພັ່ງເລັງເຫັນຄວາມງົດງາມແຫ່ງຮ່າງກາຍຂອງຜູ້ອື່ນ ເປັນການທີ່ເກີດ

ຕັຕຣມັຊຊັຕຕຕາເຈຕສິກ

໗. **ຕັຕຣມັຊຊັຕຕຕາເຈຕສິກ** ຄື ການທຳໃຈເປັນກາງ ເປັນຢຸຕິທັມມ໌ ບໍ່ມີອຄຕິ ບໍ່ລຳອຽງ ການວາງໃຈເສີຍໃນອາຣົມຕ໌ (ເປັນອຸເບກຂາໃນພຣົຫ໌ມວິຫາຣ) ມີລັກຂະນາທິຈຕຸກະ ດັ່ງນີ້

ຈິຕຕເຈຕສິການໍ ສມວາຫິຕລກ຺ຂຕາ	ມີການຊົງໄວ້ຊຶ່ງຈິຕແລະເຈຕສິກໃຫ້ສເມີກາຄ ເປັນລັກສະນະ
ອູນາທິກຕານິວາຣຕຣສາ	ມີການຫ້າມຄວາມຍິ່ງຫຍ່ອນ ເປັນກິຈ
ມຊ຺ຊຕ຺ຕການປຈ຺ຈຸປຖ຺ຖານາ	ມີຄວາມເປັນກາງກອຸເບກຂາ) ເປັນຜົລ
ສມ຺ປຍຸຕ຺ຕານໍປທຖ຺ຖານາ	ມີສັມປຢຸຕຕທັມມ໌ ເປັນເຫຕຸໃກ້ລ

ກາຍປັສສັທທິເຈຕສິກ ແລະ ຈິຕຕປັສສັທທິເຈຕສິກ

໘. **ກາຍປັສສິທທິເຈຕສິກ** ຄື ສກາວທີ່ທຳໃຫ້ເຈຕສິກສງົບຈາກອກຸສົລ ຄວາມສງົບຈາກອກຸສົລຂອງເຈຕສິກ

໙. **ຈິຕຕປັສສັທທິເຈຕສິກ** ຄື ສກາວທີ່ທຳໃຫ້ຈິຕສງົບຈາກອກຸສົລ ຄວາມສງົບຈາກອກຸສົລຂອງຈິຕ ເຈຕສິກ ໒ ດວງນີ້ ມີລັກຂະນາທິຈຕຸກະ ດັ່ງນີ້

ກາຍຈິຕ຺ຕານໍທຣຖວູປສມລກ຺ຂຕາ	ມີການທຳໃຫ້ເຈຕສິກ ທຳໃຫ້ຈິຕສງົບຈາກຄວາມຮ້ອນຣົນ ເປັນລັກສະນະ
ກາຍຈິຕ຺ຕທຣຖນິມ຺ມທ຺ທນຣສາ	ມີການທຳລາຍຄວາມຮ້ອນຣົນຂອງເຈຕສິກ ຂອງ ຈິຕ ເປັນກິຈ
ກາຍຈິຕ຺ຕານໍ ອປຣິປ຺ຜນ຺ທນສີຕິກາວ ປຈ຺ຈຸປຖ຺ຖານາ	ມີຄວາມເຢືອກເຢັນ ບໍ່ປ່ຽນລປງ ເປັນຜົລ
ກາຍຈິຕ຺ຕປທຖ຺ຖານາ	ມີເຈຕສິກ ມີຈິຕ ເປັນເຫຕຸໃກ້ລ

ກາຍລຫຸຕາເຈຕສິກ ແລະ ຈິຕຕລຫຸຕາເຈຕສິກ

໑໐. **ກາຍລຫຸຕາເຈຕສິກ** ຄືສກາວທີ່ທຳໃຫ້ເຈຕສິກເບົາຈາກອກຸສົລ ຄວາມເບົາຂອງເຈຕສິກຈາກອກຸສົລ

໑໑. **ຈິຕຕລຫຸຕາເຈຕສິກ** ຄືສກາວທີ່ທຳໃຫ້ຈິຕເບົາຈາກອກຸສົລ ຄວາມເບົາຂອງຈິຕຈາກອກຸສົລ

ເຈຕສິກ ໒ ດວງນີ້ ມີລັກຂະນາທິຈຕຸກະ ດັ່ງນີ້

ກາຍຈິຕ຺ຕຄຣຸກາວວູປສມລກ຺ຂຕາ	ມີການທຳໃຫ້ເຈຕສິກ ທຳໃຫ້ຈິຕ ສງົບຈາກຄວາມຫນັກ ເປັນລັກສະນະ
ກາຍຈິຕ຺ຕຄຣຸກາວນິມ຺ມທ຺ທນຣສາ	ມີການທຳລາຍຄວາມຫນັກຂອງເຈຕສິກ ຂອງຈິຕ ເປັນກິຈ

ກາຍຈິຕຸຕານໍອທນ຺ຕາປຈ຺ຈຸປຏ຺ຐານາ ມີຄວາມບໍ່ຫນັກຂອງເຈຕສິກ ຂອງຈິຕ ເປັນຜົລ

ກາຍຈິຕຸຕປທຏ຺ຐານາ ມີເຈຕສິກ ມີຈິຕ ເປັນເຫຕຸໃກ້ລ

ກາຍມຸທຸຕາເຈຕສິກ ແລະ ຈິຕຕມຸທຸຕາເຈຕສິກ

໑໔. **ກາຍມຸທຸຕາເຈຕສິກ** ຄື ສະພາວທີ່ທຳໃຫ້ເຈຕສິກມີຄວາມອ່ອນໂຍນ ຄວາມອ່ອນໂຍນຂອງເຈຕສິກ ທຳໃຫ້ເປັນໄປງ່າຍດາຍໃນອາຣົມທີ່ເປັນກຸສົລ

໑໕. **ຈິຕຕມຸທຸຕາເຈຕສິກ** ຄື ສະພາວທີ່ທຳໃຫ້ຈິຕອ່ອນໂຍນ ເຈຕສິກທີ່ທຳໃຫ້ຈິຕອ່ອນໂຍນ ເປັນໄປໄດ້ງ່າຍດາຍໃນອາຣົມທີ່ເປັນກຸສົລ

ເຈຕສິກ ໒ ດວງນີ້ ມີລັກຂະນາທິຈຕຸກະ ດັ່ງນີ້

ກາຍຈິຕຸຕທຸທຸຣວູປສມລກ຺ຂຕາ ມີເຈຕສິກ ແລະມີການທຳໃຫ້ຈິຕສງົບຈາກຄວາມແຂ້ງກຣະດ້າງ ເປັນ ລັກສະນະ

ກາຍຈິຕຸຕທຸທຸຣກາວນິມ຺ມທຸທນຣສາ ມີການທຳລາຍຄວາມແຂ້ງກຣະດ້າງຂອງເຈຕສິກ ແລະຂອງຈິຕ ເປັນກິຈ

ອປ຺ປຜິພາຕປຈ຺ຈຸປຏ຺ຐານາ ມີຄວາມບໍ່ໂກຣບໍ່ອາພາຕ ເປັນຜົລ

ກາຍຈິຕຸຕປທຏ຺ຐານາ ມີເຈຕສິກ ມີຈິຕ ເປັນເຫຕຸໃກ້ລ

ກາຍກັມມັຌຌຕາເຈຕສິກ ແລະ ຈິຕຕກັມມັຌຌຕາເຈຕສິກ

໑໔. **ກາຍກັມມັຌຌຕາເຈຕສິກ** ຄື ເຈຕສິກທີ່ຄວຣແກ່ການງານອັນເປັນກຸສົລ ຄວາມຄວຣແກ່ການງານຂອງເຈຕສິກ

໑໕. **ຈິຕຕກັມມັຌຌຕາເຈຕສິກ** ຄື ເຈຕສິກທີ່ທຳໃຫ້ຈິຕຄວຣແກ່ການງານອັນເປັນກຸສົລ ການທຳໃຫ້ຈິຕຄວຣແກ່ງານ

ເຈຕສິກ ໒ ດວງນີ້ ມີລັກຂະນາທິຈຕຸກະ ດັ່ງນີ້

ກາຍຈິຕຸຕາກມ຺ມຌ຺ຌກາວວູປສ ມີການທຳໃຫ້ເຈຕສິກທຳໃຫ້ຈິຕສງົບຈາກຄວາມບໍ່ຄວຣແກ່ການງານ ເປັນລັກສະນະ

ກາຍຈິຕຸຕາ ກມ຺ມຌ຺ຌກາວ ນິມ຺ມທຸທນຣສາ ມີການທຳລາຍຄວາມບໍ່ຄວຣແກ່ການງານຂອງເຈຕສິກ ຂອງຈິຕ ເປັນກິຈ

ກາຍຈິຕຸຕານໍ ອາຣມ຺ມຕາກຣຕສມ຺ປຕ຺ຕິປຈ຺ຈຸປຏ຺ຐານາ ທຳໃຫ້ເຈຕສິກ ທຳໃຫ້ຈິຕມີອາຣົມສົມຄວຣແກ່ການງານເປັນຜົລ

ກາຍຈິຕຸຕປທຏ຺ຐານາ ມີເຈຕສິກ ມີຈິຕ ເປັນເຫຕຸໃກ້ລ

ຈິດທີ່ບໍ່ຄວຣແກ່ການງານ ຈະໃຊ້ຈິດທຳສມາທິກໍມີຜົລນ້ອຍ ເຊັ່ນຈິດທີ່ມີຮ່າງກາຍອ່ອນເພັ້ຽ ຫຼື ປ່ວຍ ເຊັ່ນ ປວດຫົວ ປວດທ້ອງ ເມື່ອຮ່າງກາຍບໍ່ສະບາຍການທຳສມາທິກໍໄດ້ຜົລນ້ອຍເສັຽເວລາທຳສມາທິ ໔ ຊົ່ວໂມງ ກໍເຮັດບໍ່ໄດ້ ເພາະຈິດບໍ່ມີກັມມັຍຕາເຈຕສິກປຣະກອບ

ຈິດແລະເຈຕສິກທີ່ບໍ່ຄວຣແກ່ການງານ ຄືຈິດແລະເຈຕສິກທີ່ຖືກນິວຣຕ໌ຄຣອບງຳ ນິວຣຕ໌ປຽບເຫມືອນ ຕະປູຕຣຶງຈິດ ຫຼື ສນິມກິນເນື້ອເຫລັກທຳໃຫ້ເຫລັກກຣ່ອນ ນິວຣຕ໌ທັ້ງ ໕ ອັນມີ ກາມຈັນທນິວຣຕ໌ ພຍາປາທນິວຣຕ໌ ວິຈິກິຈສານິວຣຕ໌ ຖີນມິທທນິວຣຕ໌ ອຸທັຈຈກຸກກຸຈຈນິວຣຕ໌ ເມື່ອນິວຣຕ໌ຄຣອບງຳຈິດແລ້ວຈິດກໍບໍ່ຄວຣແກ່ການງານ ຕ້ອງລະນິວຣຕ໌ໃຫ້ໄດ້ກ່ອນ ແລ້ວຈຶ່ງໃຊ້ຈິດທຳງານ ເມື່ອຈິດມີກັມມັຍຕາເຈຕສິກປຣະກອບແລ້ວ ການທຳສມາທິກໍຈະໄດ້ຜົລໃນຊົ່ວຣະຍະເວລາພຽງເລັກນ້ອຍ

ກາຍປາຄຸຍຍຕາເຈຕສິກ ແລະ ຈິຕຕປາຄຸຍຍຕາເຈຕສິກ

໑໕. **ກາຍປາຄຸຍຍຕາເຈຕສິກ** ຄື ເຈຕສິກທີ່ທຳໃຫ້ເຈຕສິກຄລ່ອງແຄລ່ວຕໍ່ກຸສົລ ຄວາມຄລ່ອງແຄລ່ວຂອງເຈຕສິກໃນກຸສົລ

໑໗. **ຈິຕຕປາຄຸຍຍຕາເຈຕສິກ** ຄື ເຈຕສິກທີ່ທຳໃຫ້ຈິດຄລ່ອງແຄລ່ວຕໍ່ກຸສົລ ການທຳໃຫ້ຈິດຄລ່ອງແຄລ່ວໃນກຸສົລ

ເຈຕສິກ ໒ ດວງນີ້ ມີລັກຂຕາທິຈຕຸກະ ດັ່ງນີ້

ກາຍຈິຕຸຕານໍ ອເຄລຍຸຍກາວລກຸຂຕາ	ມີຄວາມບໍ່ອາພາຣຂອງເຈຕສິກ ຂອງຈິດ ເປັນລັກສຕະ
ກາຍຈິຕຸຕເຄລຍຸຍນິມຸມທຸທນຣສາ	ມີການທຳລາຍຄວາມອາພາຣ ຂອງເຈຕສິກ ຂອງຈິດ ເປັນກິຈ
ນິຣາທີນວປຈຸຈຸປຎຸຖານາ	ມີຄວາມປຣາສຈາກໂທສ ເປັນຜົລ
ກາຍຈິຕຸຕປທຎຸຖານາ	ມີເຈຕສິກ ມີຈິດ ເປັນເຫຕຸໃກ້ລ

ກາຍຸຊຸກຕາເຈຕສິກ ແລະ ຈິຕຕຸຊຸກຕາເຈຕສິກ

໑໗. **ກາຍຸຊຸກຕາເຈຕສິກ** ຄື ເຈຕສິກທີ່ທຳໃຫ້ເຈຕສິກມຸ່ງຕຣົງຕໍ່ກຸສົລ ຄວາມມຸ່ງຕຣົງຂອງເຈຕສິກຕໍ່ກຸສົລ

໑໙. **ຈິຕຕຸຊຸກຕາເຈຕສິກ** ຄື ເຈຕສິກທີ່ທຳໃຫ້ຈິດມຸ່ງຕຣົງຕໍ່ກຸສົລ ການທຳໃຫ້ຈິດມຸ່ງຕຣົງຕໍ່ກຸສົລ

ເຈຕສິກ ໒ ດວງນີ້ ມີລັກຂຕາທິຈຕຸກະ ດັ່ງນີ້

ກາຍຈິຕຸຕອຊຸຊວລກຸຂຕາ	ມີຄວາມຊື່ອຕຣົງຂອງເຈຕສິກ ຂອງຈິດ ເປັນລັກສຕະ
ກາຍຈິຕຸຕກຸຜິລກາວນິມຸມທຸທນຣສາ	ມີການທຳລາຍຄວາມບໍ່ຊື່ອຕຣົງຂອງເຈຕສິກ ຂອງຈິດ ເປັນກິຈ
ອຊິມຸຫຕາປປຈຸຈຸປຎຸຖານາ	ມີຄວາມຊື່ອຕຣົງຂອງເຈຕສິກ ຂອງຈິດ ເປັນຜົລ
ກາຍຈິຕຸຕປທຎຸຖານາ	ມີເຈຕສິກ ມີຈິດ ເປັນເຫຕຸໃກ້ລ

ວິຣະຕິເຈຕະສິກ

ວິຣະຕິເຈຕະສິກ ມີ ໓ ດວງ ຄື ສັມມາວາຈາເຈຕະສິກ ສັມມາກັມມັນຕະເຈຕະສິກ ແລະສັມມາອາຊີວະເຈຕະສິກ

ສັມມາວາຈາເຈຕະສິກ

໑. **ສັມມາວາຈາເຈຕະສິກ** ຄື ການເວົ້າຊອບ ເວົ້າສິ່ງທີ່ເປັນກຸສົນ ເວັ້ນຈາກວະຈີທຸຈະລິດທັງ ໔ ມີ **ມຸສາວາທ** ເວົ້າຕົວະ **ປິສຸນາວາທ** ເວົ້າສໍ່ສຽດ **ຜະຣຸສວາທ** ເວົ້າຫຍາບຄາຍ **ສັມຜັປປະລາປ** ເວົ້າເພີ້ເຈີ້ໄຮ້ສາຕະ ທັງນີ້ບໍ່ກ່ຽວກັບອາຊີພ

ສັມມາວາຈາມີ ໓ ປຣະການ

ກ. **ກະຖາສັມມາວາຈາ** ໄດ້ແກ່ ການກ່າວວາຈາທີ່ດີ ມີສີລະທັມ ເພື່ອຫວັງປຣະໂຍຊນ໌ແກ່ຜູ້ຟັງ ເຊັ່ນ ອາຈາຣຍ໌ສອນສິສຍ໌ ເປັນຕົ້ນ

ຂ. **ເຈຕະນາສັມມາວາຈາ** ໄດ້ແກ່ ຜູ້ມີເຈຕະນາສະມາທານສີລ ວ່າຈະລະເວັ້ນວະຈີທຸຈະລິດ ມີການບໍ່ກ່າວມຸສາ ເປັນຕົ້ນ

ຄ. **ວິຣະຕິສັມມາວາຈາ** ໄດ້ແກ່ ການເວັ້ນຈາກວາຈາທຸຈະລິດທັງ ໔ ມີເວັ້ນຈາກມຸສາວາທ ປິສຸນາວາທ ຜະຣຸສວາທ ສັມຜັປປະລາປໃນເມື່ອມີອາຣົມທ໌ທີ່ຄວຈະລ່ວງປຣາກົຍຢູ່ລະເພາະຫນ້າ (ວິຣະມິຕັພພວັຕຖຸ) (ບໍ່ມີຄວາມຕັ້ງໃຈໄວ້ກ່ອນເມື່ອປຣະສົບກັບອາຣົມທ໌ລະເພາະຫນ້າຈຶ່ງຕ້ອງງົດເວັ້ນ)

ສັມມາກັມມັນຕະເຈຕະສິກ

໔. **ສັມມາກັມມັນຕະເຈຕະສິກ** ຄື ປຣະກອບການງານຊອບ **ການງານທີ່ບໍ່ທຸຈະຣິດ** ເວັ້ນຈາກກາຍທຸຈະຣິດທັງ ໓ ມີ **ຂ້າສັຕວ໌ ລັກຊັພຍ໌** ແລະ **ລ່ວງປຣະເວນີ** ເປັນການກຣະທຳປົກກະຕິ ຄື ເປັນການທຳງານປົກກະຕິປຣະຈຳວັນ ບໍ່ກ່ຽວກັບອາຊີພ

ສັມມາກັມມັນຕະ ມີ ໓ ປຣະການ

ກ. **ປຖາພລັງສັມມາກັມມັນຕະ** ໄດ້ແກ່ການກຣະທຳການງານໂດຍຊອບ ການງານທີ່ບໍ່ທຸຈະຣິດ ມີການປຣະກອບກຸສົນ ເປັນຕົ້ນ ຕາມກຳລັງຂອງຕົນ

ຂ. **ເຈຕະນາສັມມາກັມມັນຕະ** ໄດ້ແກ່ເຈຕະນາທີ່ຕັ້ງໃຈສະມາທານວ່າຈະລະເວັ້ນກາຍທຸຈະຣິດ ມີການບໍ່ຂ້າສັຕວ໌ ບໍ່ລັກຊັພຍ໌ ບໍ່ລ່ວງປຣະເວນີ

ຄ. **ວິຣະຕິສັມມາກັມມັນຕະ** ໄດ້ແກ່ການເວັ້ນຈາກກາຍທຸຈະຣິດທັງ ໓ ມີເວັ້ນການຂ້າສັຕວ໌ ການລັກຊັພຍ໌ ການລ່ວງປຣະເວນີ ໃນເມື່ອມີອາຣົມທ໌ທີ່ຄວຈະລ່ວງມາປຣາກົຍຢູ່ລະເພາະຫນ້າ (ວິຣະມິຕັພພວັຕຖຸ) ຫມາຍຄວາມວ່າບໍ່ໄດ້ຕັ້ງໃຈໄວ້ກ່ອນວ່າຈະງົດເວັ້ນ ແຕ່ມາປຣະສົບກັບອາຣົມທ໌ຈຶ່ງຕ້ອງງົດເວັ້ນລະເພາະຫນ້າ

ສັມມາອາຊີວະເຈຕະສິກ

໓. **ສັມມາອາຊີວະເຈຕະສິກ** ຄື ຄວາມເປັນຢູ່ຊອບ ການລ້ຽງຊີບຊອບ ປະກອບອາຊີບທີ່ສຸຈະຣິດ ເວັ້ນຈາກທຸຈະຣິດທັ້ງ ໆ ຄື ເວັ້ນກາຍທຸຈະຣິດ ໓ ແລະເວັ້ນວະຈີທຸຈະຣິດ ໔ ທີ່ກ່ຽວກັບອາຊີບ

ສັມມາອາຊີວະ ມີ ໒ ປະການ

ກ. **ວິຣິຍະສັມມາອາຊີວະ** ໄດ້ແກ່ຄວາມພຽນໃນການກະທຳການງານຫາລ້ຽງຊີບໂດຍຊອບທັມ

ຂ. **ວິຣະຕີສັມມາອາຊີວະ** ໄດ້ແກ່ການງົດເວັ້ນຈາກກາຍທຸຈະຣິດ ໓ ວະຈີທຸຈະຣິດ ໔ ທີ່ກ່ຽວແກ່ອາຊີບ

ເຈຕະສິກ ໓ ດວງນີ້ ມີລັກຂະນາທິຈະຕຸກະ ດັ່ງນີ້

ກາຍທຸຈ຺ຈຣິຕາທິວຕ຺ຖຸນໍ ອວີຕິກ຺ກມລກ຺ຂຓາ	ມີການບໍ່ລ່ວງກາຍທຸຈະຣິດ ເປັນຕົ້ນ ເປັນລັກສະນະ
ກາຍທຸຈ຺ຈຣິຕວຕ຺ຖຸໂຕສງ຺ໂກຈນຣສາ	ມີການເວັ້ນຈາກກາຍທຸຈະຣິດ ເປັນຕົ້ນ ເປັນກິດ
ອກຣິຍປຈ຺ຈຸປຏ຺ຖານາ	ມີການບໍ່ທຸຈະຣິດ ເປັນຜົນ
ສທ຺ທາຫິໂຕຕປ຺ປາທິຄຸຓປທຏ຺ຖານາ	ມີຄຸນທັມຄື ສັທທາ ຫິຣິໂອຕັປປະ ເປັນຕົ້ນ ເປັນເຫດໃກ້ລ

ອັປປະມັນຍາເຈຕະສິກ

ອັປປະມັນຍາເຈຕະສິກ ມີ ໒ ດວງ ໄດ້ແກ່ ກະຣຸນາເຈຕະສິກ ແລະມຸທິຕາເຈຕະສິກ

ກະຣຸນາເຈຕະສິກ

໑. **ກະຣຸນາເຈຕະສິກ** ຄື ມີຄວາມສົງສານ ຢາກຈະຊ່ອຍເຫລືອສັດທີ່ກຳລັງໄດ້ຮັບທຸກຢູ່ ຫຼື ທີ່ຈະໄດ້ຮັບທຸກໃນກາຍໜ້າ ມີລັກຂະນາທິຈະຕຸກະ ດັ່ງນີ້

ທຸກ຺ຂາປນຍນາການປວຕ຺ຕິລກ຺ຂຓາ	ມີການໄດ້ເຫັນຜູ້ອື່ນເປັນທຸກ ຍ່ອມມີຄວາມສົງສານ ເປັນລັກສະນະ
ປຣທຸກ຺ຂາສຫນຣສາ	ມີການບໍ່ນັກເຫັນທຸກຂອງຜູ້ອື່ນ ເປັນກິດ
ອວິຫິສາປຈ຺ຈຸປຏ຺ຖານາ	ມີຄວາມບໍ່ບຽດບຽນ ເປັນຜົນ

ທຸກ຺ຂາພິພູຕານໍ ອນາຖການທສ຺ສນ ປທຏ຺ຖານາ ມີການໄດ້ເຫັນສັດອະນາຖາ ອັນຖືກທຸກ ຄອບງຳ ເປັນເຫດໃກ້ລ

ອວິຫິສາ = ບໍ່ບຽດບຽນຜູ້ອື່ນ

ກະຣຸນາ = ຍັງປະສົງຄ໌ຊ່ອຍຜູ້ອື່ນໃຫ້ພົ້ນທຸກອີກດ້ວຍ

ໂສກ = ເຮົາສູນເສັຽຂອງທີ່ເຮົາຮັກ ກໍໂສກເສົ້າ

ກະຣຸນາ = ເຫັນຜູ້ອື່ນສູນເສັຽສິ່ງທີ່ເຂົາຮັກ ເຮົາກໍຊ່ອຍໃຫ້ເຂົາພົ້ນທຸກຈາກການເສົ້າໂສກ

ເມຕຕາ ກຣຸຕາ	ເປັນ **ອພຍາປາທ**	ມຸທິຕາ ອຸເປກຂາ	ເປັນ **ອນກິຊຊາ** (ບໍ່ຄິດຈ້ອງຈະເອົາຂອງເຂົາ)

ມຸທິຕາເຈຕສິກ

໔. **ມຸທິຕາເຈຕສິກ** ຄື ພລອຍຍິນດີດ້ວຍໃນເມື່ອຮູ້ວ່າເຂົາມີຄວາມສຸຂ ມີຄວາມຍິນດີຕໍ່ສັດວ໌ທີ່ໄດ້ສຸຂ ມີລັກຂຕາທິຈຕຸກະ ດັ່ງນີ້

ປໂມທນລກ຺ຂຕາ ມີຄວາມຍິນດີດ້ວຍໃນຄວາມສຸຂຂອງຜູ້ອື່ນ ເປັນລັກສຕະ

ອນິສ຺ສາຍນຣສາ ມີການບໍ່ອິສສາຕີສຢາ ເປັນກິຈ

ອຣຕິວິຫາຕປຈ຺ຈຸປຏ຺ຎານາ ມີຄວາມປັຕຖນາໃຫ້ຜູ້ອື່ນຈເຣີນ ເປັນຜົລ

ສຕ຺ຕານໍ ສມ຺ປຕ຺ຕິທສ຺ສນປທຏ຺ຎານາ ມີການໄດ້ເຫັນສັຕວ໌ມີສົມບັຕິ ເປັນເຫຕຸໃກ້ລ

ປັຌຌາເຈຕສິກ

ປັຌຌາເຈຕສິກ ມີແຕ່ດວງດຽວບໍ່ມີພວກ ມີຊື່ເອີ້ນອີກຊື່ນຶ່ງວ່າ **ປັຌຌິນທຣິຍເຈຕສິກ**

ປັຌຌາເຈຕສິກ ຄືຄວາມຮູ້ໃນເຫຕຸຜົລແຫ່ງຄວາມຈິງຂອງສພາວທັມມ໌ແລະທຳລາຍຄວາມເຫັນຜິດ ຫຼື ເປັນເຈຕສິກທີ່ມີຄວາມຮູ້ເປັນໃຫຍ່ ປົກຄອງຊຶ່ງສຫຊາຕທັມມ໌ທັ້ງປວງ ມີລັກຂຕາທິຈຕຸກະ ດັ່ງນີ້

ຘມ຺ມສພາວປຏິເວຘລກ຺ຂຕາ ມີຄວາມຮູ້ແຈ້ງຊຶ່ງສພາວທັມມ໌ ເປັນລັກສຕະ

ໂມຫນ຺ຘການວິທ຺ທໍສນຣສາ ມີການກຳຈັດມືດ ເປັນກິຈ

ອສມ຺ໂມຫປຈ຺ຈຸປຏ຺ຎານາ ມີຄວາມບໍ່ຫລົງຜິດ ຫຼື ບໍ່ເຫັນຜິດ ເປັນຜົລ

ສມາຘິປທຏ຺ຎານາ ມີສມາຘິ ເປັນເຫຕຸໃກ້ລ

ປັຌຌານີ້ມີອັຖາຘິບາຍຢ່າງກວ້າງຂວາງ ແລະແຈກແຈງໄດ້ຫລາຍນັຍ ຫລາຍກຣະບວນເປັນຈຳນວນຫລວງຫລາຍ ແຕ່ໃນທີ່ນີ້ຈະກ່າວຫຍໍ້ ໆ ພໍໃຫ້ຮູ້ເຄົ້າ ຈຶ່ງຂໍແຈກແຈງວ່າ ປັຌຌາມີພຽງ ໓ ນັຍ ເທົ່ານັ້ນ ຄື

ກ. **ກັມມສກຕາປັຌຌາ** ປັຌຌາທີ່ຮູ້ວ່າ ກັມມ໌ເປັນສົມບັຕິຂອງຕົນ

ຂ. **ວິປັສສນາປັຌຌາ** ປັຌຌາທີ່ຮູ້ຂັນທ໌ ໕ ຣູປນາມ ເປັນ ອນິຈຈັງ ທຸກຂັງ ອນັຕຕາ

ຄ. **ໂລກຸຕຕຣປັຌຌາ** ປັຌຌາທີ່ຮູ້ແຈ້ງແທງຕລອດໃນອຣິຍສັຈຈ ໔ ປັຌຌາທີ່ຮູ້ເຫັນຄວາມທີ່ສັຕວ໌ມີກັມມ໌ເປັນສົມບັຕິຂອງຕົນ ອັນເອີ້ນວ່າ

ກັມມສກຕາປັນຍາ ນີ້ ມີ ໑໐ ປະການ ຄື

(໑) ອຕ຺ຖິທິນ຺ນ໌ ປັນຍາຮູ້ເຫັນວ່າ ທານທີ່ບຸຄຄົລໃຫ້ແລ້ວ ຍ່ອມມີຜົລ

(໒) ອຕ຺ຖິຍິຕ຺ຖ໌ ປັນຍາຮູ້ເຫັນວ່າ ການບູຊາຍ່ອມມີຜົລ

(໓) ອຕ຺ຖິຫຸຕ໌ ປັນຍາຮູ້ເຫັນວ່າ ການບວງສວງເທວດາ ຍ່ອມມີຜົລ

(໔) ອຕ຺ຖິກມ຺ມານ໌ ຜລ໌ວິປາໂກ ປັນຍາຮູ້ເຫັນວ່າ ຜົລວິບາກຂອງກັມມ໌ດີແລະຊົ່ວມີຢູ່ (ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ ທັງທາງຕຣົງແລະທາງອ້ອມ)

(໕) ອຕ຺ຖິອຍ໌ໂລໂກ ປັນຍາຮູ້ເຫັນວ່າ ໂລກນີ້ມີຢູ່ (ຜູ້ຈະມາເກີດນັ້ນມີ)

(໖) ອຕ຺ຖິປໂຣໂລໂກ ປັນຍາຮູ້ເຫັນວ່າ ໂລກໜ້າມີຢູ່ (ຜູ້ຈະໄປເກີດນັ້ນມີ)

(໗) ອຕ຺ຖິມາຕາ ປັນຍາຮູ້ເຫັນວ່າ ມາຣດາມີຢູ່ (ການທຳດີ ທຳຊົ່ວຕໍ່ມາຣດາຍ່ອມຈະໄດ້ຮັບຜົລ)

(໘) ອຕ຺ຖິປິຕາ ປັນຍາຮູ້ເຫັນວ່າ ບິດາມີຢູ່ (ການທຳດີ ທຳຊົ່ວຕໍ່ບິດາຍ່ອມຈະໄດ້ຮັບຜົລ)

(໙) ອຕ຺ຖິ ສຕ຺ຕາໂອປປາຕິກາ ປັນຍາຮູ້ເຫັນວ່າ ໂອປປາຕິກສັຕວ໌ນັ້ນມີຢູ່ (ສັຕວ໌ນຣົກ ເປຕ ອສຸຣກາຍ ເທວດາ ພຣົຫ໌ມນັ້ນມີ)

(໑໐) ອຕ຺ຖິ ໂລເກສມຕພ຺ຣາຫ຺ມຕາ ສມ຺ມາປຕິປນ຺ນາ ປັນຍາຮູ້ເຫັນວ່າສມຕພຣາຫ໌ມຕ໌ ຜູ້ປະຕິບັຕິດີ ປະຕິບັຕິຊອບ ປະກອບດ້ວຍຄວາມຮູ້ຍິ່ງ ເຫັນຈິງ ປະຈັກສ໌ຊຶ່ງໂລກນີ້ ແລະໂລກໜ້າດ້ວຍຕົນເອງ ແລ້ວປະກາສໃຫ້ຜູ້ອື່ນຮູ້ນັ້ນມີຢູ່ໃນໂລກນີ້

ສັມປໂຢຄນັຍ

ສັມປໂຢຄ ແປລວ່າ ປະກອບພ້ອມ ໃນທີ່ນີ້ໝາຍຄວາມວ່າ ເຈຕສິກແຕ່ລະດວງນັ້ນ ດວງນຶ່ງ ໆ ປະກອບກັບຈິຕໄດ້ຈັກດວງ ຄືຈິຕໃດແດ່? ຊຶ່ງຈະໄດ້ສແດງຕໍ່ໄປນີ້ ດັ່ງມີຄາຖາສັງຄຫະ (ເປັນຄາຖາທີ່ ໓) ວ່າ

໓. ເຕສ໌ ຈິຕ຺ຕາວິຍຸຕ຺ຕານ໌ ຍຖາໂຍຄມິໂຕ ປຣ໌
ຈິຕ຺ຕຸປ຺ປາເທສຸ ປຈ຺ເຈກ໌ ສມ຺ປໂຍໂຄ ປວຸຈ຺ຈຕິ ໆ

ແປລຄວາມວ່າ ເບື້ອງໜ້າແຕ່ນີ້ຈະສແດງສັມປໂຢຄະແຫ່ງທັມມ໌ (ຄືເຈຕສິກ) ເຫລົ່ານີ້ ອັນປະກອບກັບຈິຕ ສະເພາະໃນຈິຕຕຸປປາທະ (ຈິຕທີ່ເກີດຂຶ້ນ) ດວງນຶ່ງ ໆ ໂດຍສົມຄວຣແກ່ທີ່ຈະປະກອບໄດ້

ສັມປໂຢຄນັຍແຫ່ງອັນຍສມານາເຈຕສິກ

໔. ສຕ຺ຕ ສພ຺ພຕ຺ຖ ຍຸຊ຺ຊນ຺ຕິ ຍຖາໂຍຄ໌ ປກິຕ຺ຕກາ
ຈຸທ຺ທສາກຸເລເສ຺ວວ ໂສກເຕເສ຺ວວ ໂສກຕາ ໆ

ແປລຄວາມວ່າ

໑. ສັພພຈິຕສາທາຣຕເຈຕສິກ (໗ ດວງ) ປະກອບໃນຈິຕໄດ້ທຸກດວງ (ໂດຍຫຍໍ້ຈິຕມີ ໘໙ ດວງ)

໔. ປກິຓກກເຈຕສິກ (໖ ດວງ) ປຣະກອບກັບຈິຕໄດ້ຈະເພາະແຕ່ທີ່ຄວຣ (ປຣະກອບໄດ້ບາງດວງ)

໕. ອກຸສົລເຈຕສິກ (໑໔ ດວງ) ປຣະກອບໄດ້ຈະເພາະໃນອກຸສົລຈິຕ ໑໒ ດວງເທົ່ານັ້ນ

໔. ໂສກຓເຈຕສິກ (໒໕ ດວງ) ປຣະກອບໄດ້ຈະເພາະໂສກຓຈິຕເທົ່ານັ້ນ

໕. ໗ສຕຸສິ ປຍ຺ຈປຍ຺ຍາສ ເອກາທສ ຈ ໂສລສ

ສຕ຺ຕຕິ ວີສຕິ ເຈວ ປກິຕ຺ຓກວິວຊ຺ຊິຕາ ໆ

ແປລຄວາມວ່າຈິຕທີ່ປກິຓກກເຈຕສິກບໍ່ປຣະກອບ ມີຈຳນວນຕາມລຳດັບດັ່ງນີ້

ວິຕົກ ບໍ່ປຣະກອບກັບຈິຕ ໖໖ ດວງ

ວິຈາຣ ບໍ່ປຣະກອບກັບຈິຕ ໕໕ ດວງ

ອະທິໂມກຂ ບໍ່ປຣະກອບກັບຈິຕ ໑໑ ດວງ

ວິຣິຍະ ບໍ່ປຣະກອບກັບຈິຕ ໑໖ ດວງ

ປີຕິ ບໍ່ປຣະກອບກັບຈິຕ ໗໐ ດວງ

ຈັນທະ ບໍ່ປຣະກອບກັບຈິຕ ໒໐ ດວງ

໖. ປຍ຺ຈປຍ຺ຍາສ ໗ສຜ຺ຖິ ຜກຸສຕ຺ຕຕິ ຕິສຕ຺ຕຕິ

ເອກປຍ຺ຍາສ ເຈກູນ ສຕ຺ຕຕິ ສປກິຕ຺ຓກາ ໆ

ແປລຄວາມວ່າຈິຕທີ່ປກິຓກກເຈຕສິກຍ່ອມເຂົ້າປຣະກອບ ມີຈຳນວນຕາມລຳດັບດັ່ງນີ້

ວິຕົກ ຍ່ອມເຂົ້າປຣະກອບກັບຈິຕ ໕໕ ດວງ

ວິຈາຣ ຍ່ອມເຂົ້າປຣະກອບກັບຈິຕ ໖໖ ດວງ

ອະທິໂມກຂ ຍ່ອມເຂົ້າປຣະກອບກັບຈິຕ ໗໘ ດວງ

ວິຣິຍະ ຍ່ອມເຂົ້າປຣະກອບກັບຈິຕ ໗໕ ດວງ

ປີຕິ ຍ່ອມເຂົ້າປຣະກອບກັບຈິຕ ໕໑ ດວງ

ຈັນທະ ຍ່ອມເຂົ້າປຣະກອບກັບຈິຕ ໖໙ ດວງ

ອະທິບາຍ

ຣວມຄວາມວ່າ ອັຍຍສມານາເຈຕສິກ ໑໓ ດວງ ກ່າວໂດຍສັມປໂຍຄນັຍ ຄືການປຣະກອບກັບຈິຕຕ່າງ ໆ ໄດ້ນັ້ນ ແບ່ງອອກເປັນ ໗ ນັຍ ຄື

ນັຍທີ່ ໑ ສັພພຈິຕຕສາທາຣຓ ໗ ດວງ ຄື ຜັສສະ ເວທນາ ສັຍຍາ ເຈຕນາ ເອກັຄຄຕາ ຊີວິຕິນທຣີຍ ແລະ ມນສິການ ນີ້ປຣະກອບກັບຈິຕໄດ້ທັ້ງຫມົດທຸກດວງ ຄືທັ້ງ ໘໙ ດວງ ຫຼື ນັບຢ່າງພິສດາຣ ກໍທັ້ງ ໑໒໑ ດວງ ບໍ່ມີເວັ້ນເລີຍ

ນັຍທີ່ ໒ ວິຕົກເຈຕສິກ ປຣະກອບກັບຈິຕ ໕໕ ດວງ ແຕ່ບໍ່ປຣະກອບກັບຈິຕ ໖໖ ດວງ
ນັຍທີ່ ໓ ວິຈາຣເຈຕສິກ ປຣະກອບກັບຈິຕ ໖໖ ດວງ ປຣະກອບກັບຈິຕ ໕໕ ດວງ
ນັຍທີ່ ໔ ອທິໂມກຂເຈຕສິກ ປຣະກອບກັບຈິຕ ໗໘ ດວງ ປຣະກອບກັບຈິຕ ໑໑ ດວງ
ນັຍທີ່ ໕ ວິຣິຍເຈຕສິກ ປຣະກອບກັບຈິຕ ໗໓ ດວງ ປຣະກອບກັບຈິຕ ໑໖ ດວງ
ນັຍທີ່ ໖ ປີຕິເຈຕສິກ ປຣະກອບກັບຈິຕ ໕໑ ດວງ ປຣະກອບກັບຈິຕ ໗໐ ດວງ
ນັຍທີ່ ໗ ສັນທເຈຕສິກ ປຣະກອບກັບຈິຕ ໖໙ ດວງ ປຣະກອບກັບຈິຕ ໑໐ ດວງ

ວິຕົກເຈຕສິກ

ປຣະກອບກັບຈິຕ ໕໕ ດວງ ຄື	ບໍ່ປຣະກອບກັບຈິຕ ໖໖ ດວງ ຄື
ອກຸສົລຈິຕ ໑໒	ທວິປັນຈວິນຍານ ໑໐
ອເຫຕຸກຈິຕ ໘ (ເວັ້ນທວິປັນຈ ໑໐)	ທຸຕິຍຊານ ໑໑
ກາມໂສກົນ ໒໔	ຕຕິຍຊານ ໑໑
ປຖົມຊານຈິຕ ໑໑	ຈຕຸຕຖຊານ ໑໑
	ປັນຈມຊານ ໒໓

ວິຈາຣເຈຕສິກ

ປຣະກອບກັບຈິຕໄດ້ ໖໖ ດວງ ຄື	ບໍ່ປຣະກອບກັບຈິຕ ໕໕ ດວງ ຄື
ອກຸສົລຈິຕ ໑໒	ທວິປັນຈວິນຍານ ໑໐
ອເຫຕຸກຈິຕ ໘ (ເວັ້ນທວິປັນຈ ໑໐)	ຕຕິຍຊານ ໑໑
ກາມໂສກົນ ໒໔	ຈຕຸຕຖຊານ ໑໑
ປຖົມຊານ ໑໑	ປັນຈມຊານ ໒໓
	ທຸຕິຍຊານ ໑໑

ອສໂມກະເຈຕະສິກ

ປະກອບກັບຈິດໄດ້ ໗໗ ດວງ ຄື	ບໍ່ປະກອບກັບຈິດ ໑໑ ດວງ ຄື
ອກຸສົລຈິດ ໑໑ (ເວັ້ນວິຈິກິຈສາຈິດ)	ວິຈິກິຈສາສຫຄຕຈິດ ໑
ອເຫຕຸກຈິດ ໗ (ເວັ້ນທວິປັນຈ ໑໐)	ທວິປັນຈວິນຍານ ໑໐
ກາມໂສກນ ໒໔	
ມຫັຄຄຕຈິດ ໒໗	
ໂລກຸຕຕຈິດ ໗	

ວິຣິຍເຈຕະສິກ

ປະກອບກັບຈິດ ໄດ້ ໗໓ ດວງ ຄື	ບໍ່ປະກອບກັບຈິດ ໑໖ ດວງ ຄື
ອກຸສົລຈິດ ໑໒	ອເຫຕຸກຈິດ ໑໖ (ເວັ້ນມໂນທວາຣາວັຊຊນຈິດ ໑ ກັບ ຫສິຕຸປປາທຈິດ ໑) **ໝາຍເຫຕຸ** ຈິດ ໑໖ ດວງ ທີ່ວິຣິຍເຈຕະສິກບໍ່ປະກອບນີ້ມີຊື່ເອີ້ນວ່າ **ອວິຣິຍຈິດ ໑໖**
ມໂນທວາຣາວັຊຊນຈິດ ໑	
ຫສິຕຸປປາທຈິດ ໑	
ກາມໂສກນ ໒໔	
ມຫັຄຄຕຈິດ ໒໗	
ໂລກຸຕຕຈິດ ໗	

ປີຕິເຈຕະສິກ

ປະກອບກັບຈິດໄດ້ ໕໑ ດວງ ຄື	ບໍ່ປະກອບກັບຈິດ ໗໐ ດວງ ຄື
ໂສມນັສໂລກມູລຈິດ ໒	ອຸເປກຂາໂລກມູລຈິດ ໒
ໂສມນັສສັນຕີຣິດ ໑	ໂທສມູລຈິດ ໒
ໂສມນັສຫສິຕຸປປາທຈິດ ໑	ໂມຫມູລຈິດ ໒
ໂສມນັສຜ່ານໂສກນຈິດ ໑໒	ອຸເປກຂາອເຫຕຸກຈິດ ໑໔

ปฐมฌานจิต ๑๑	กายวิญญาณจิต ๒
ทุติยฌานจิต ๑๑	อุเบกขากามโสภณจิต ๑๒
ตติยฌานจิต ๑๑	จตุตถฌานจิต ๑๑ ปัญจมฌานจิต ๒๓

ฉันทเจตสิก

ประกอบกับจิตได้ ๖๙ ดวง คือ	ไม่ประกอบกับจิต ๒๐ ดวง คือ
โลภมูลจิต ๘	โมหมูลจิต ๒
โทสมูลจิต ๒	อเหตุกจิต ๑๘
กามโสภณจิต ๒๔	
มหัคคตจิต ๒๗	
โลกุตตรจิต ๘	

สัมปโยคนัยแห่งอกุศลเจตสิก

๘. สพฺพาปุญฺเญสุ จตฺตาโร โลภมูเล ตโย คตา
โทสมูเลสุ จตฺตาโร สสงฺขาเร ทวยํ ตถา ฯ

แปลความว่า เจตสิก ๔ ดวง ย่อมประกอบกับ อกุศลจิตทั้งหลาย

เจตสิก ๓ ดวง ย่อมประกอบกับ โลภมูลจิต

เจตสิก ๔ ดวง ย่อมประกอบกับ โทสมูลจิต

เจตสิก ๒ ดวง ย่อมประกอบกับ สสังขาริกจิต

๙. วิจิกิจฺฉา วิจิกิจฺฉา จิตฺเต จาติ จตุทฺทส
ทฺวาทสากุสเลสฺเวว สมฺปยุชฺชนฺติ ปญฺจธา ฯ

แปลความว่า วิจิกิจฉาเจตสิก ย่อมประกอบกับวิจิกิจฉาจิต (เท่านั้น) อกุศลเจตสิก ๑๔ ดวง ย่อมประกอบกับอกุศลจิต ๑๒ ดวง โดยสัมปโยคนัย ๕ อย่าง ดังนี้

อธิบาย

รวมความว่า อกุศลเจตสิก ๑๔ ดวง กล่าวโดยสัมปโยคนัย คือการประกอบกับอกุศลจิตนั้นแบ่งออกเป็น ๕ นัย คือ:

ນັຍທີ່ ໑ ເຈຕສິກ ໔ ດວງ ຄື ໂມຫເຈຕສິກ ອຫິຣິກເຈຕສິກ ອໂນຕັປປເຈຕສິກ ແລະອຸທັຈຈເຈຕສິກ ຊຶ່ງມີຊື່ຣວມເອີ້ນວ່າ ໂມຈຕຸກະ ຫຼື ສັພພາກຸສົລສາລາຣຕເຈຕສິກນັ້ນ ປະກອບກັບອກຸສົລຈິຕໄດ້ທັ້ງຫມົດ ຄືທັ້ງ ໑໒ ດວງ

ນັຍທີ່ ໒ ເຈຕສິກ ໓ ດວງຄື ໂລກເຈຕສິກ ທິຝຖິເຈຕສິກ ແລະ ມານເຈຕສິກ ຊຶ່ງມີຊື່ຣວມເອີ້ນວ່າ ໂລຕິກະ ນັ້ນ

ໂລກເຈຕສິກ ປຣະກອບກັບໂລກມູລຈິຕໄດ້ທັ້ງຫມົດ ຄື ທັ້ງ ໘ ດວງ

ທິຝຖິເຈຕສິກ ປຣະກອບກັບໂລກມູລຈິຕໄດ້ ຈະເພາະແຕ່ທີ່ເປັນທິຝຖິຄຕສັມປຢຸຕຕຈິຕ ໔ ດວງ

ມານເຈຕສິກ ກໍປຣະກອບກັບໂລກມູລຈິຕໄດ້ຈະເພາະທີ່ເປັນທິຝຖິຄຕວິປປຢຸຕຕຈິຕ ໔ ດວງ

ນັຍທີ່ ໓ ເຈຕສິກ ໔ ດວງ ຄື ໂທສເຈຕສິກ ອິສສາເຈຕສິກ ມັຈຈຣິຍເຈຕສິກ ແລະກຸກກຸຈຈເຈຕສິກ ຊຶ່ງມີຊື່ຣວມເອີ້ນວ່າ ໂທຈຕຸກະ ນັ້ນ ຍ່ອມປຣະກອບກັບໂທສມູລຈິຕ ໒ ດວງ

ນັຍທີ່ ໔ ເຈຕສິກ ໒ ດວງ ຄື ຖີນເຈຕສິກແລະມິທ+ເຈຕສິກ ຊຶ່ງມີຊື່ຣວມເອີ້ນວ່າ ຖີທຸກະ ນັ້ນຍ່ອມປຣະກອບກັບສສັງຂາຣິກໃນອກຸສົລຈິຕ ອັນມີຈຳນວນ ໕ ດວງ ໄດ້ແກ່ ໂລກມູລຈິຕ ທີ່ເປັນສສັງຂາຣິກ ໔ ດວງ ແລະໂທສມູລຈິຕທີ່ເປັນສສັງຂາຣິກ ໑ ດວງ

ນັຍທີ່ ໕ ເຈຕສິກ ໑ ດວງ ຄືວິຈິກິຈຈາເຈຕສິກ ຍ່ອມປຣະກອບກັບວິຈິກິຈຈາສຫຄຕຈິຕ ໄດ້ຈະເພາະດວງດຽວເທົ່ານັ້ນ

ສັມປໂຍຄນັຍແຫ່ງໂສກຕເຈຕສິກ

໙. ເອກູນວີສຕິທມ຺ມາ ຊາຍນ຺ເຕກູນສຕ຺ຖີສຸ
ຕໂຍ ໂສຬສ ຈິຕ຺ເຕສຸ ອຕ຺ຖວີສຕິຍំ ທ຺ວຍំ ໆ

ແປລຄວາມວ່າ ເຈຕສິກ ໑໙ ດວງ ຍ່ອມປຣະກອບກັບຈິຕ ໕໙ ດວງ

ເຈຕສິກ ໓ ດວງ ຍ່ອມປຣະກອບກັບຈິຕ ໑໖ ດວງ

ເຈຕສິກ ໒ ດວງ ຍ່ອມປຣະກອບກັບຈິຕ ໒໘ ດວງ

໑໐. ປຍ຺ຍາ ປກາສິຕາ ສຕ຺ຕ ຈຕ຺ຕາຣີສ ວິເສສ຺ປິ
ສມ຺ປຢຸຕ຺ຕາ ຈຕ຺ເຣວំ ໂສກເຕສ຺ວຸວ ໂສກຕາ ໆ

ແປລຄວາມວ່າ ປັຍຍາເຈຕສິກ ຍ່ອມປຣະກອບກັບຈິຕ ໔໗ ດວງ ໂສກຕເຈຕສິກ ຍ່ອມປຣະກອບກັບໂສກຕຈິຕໂດຍສັມປໂຍຄນັຍ ໔ ຢ່າງ ດັ່ງນີ້

ອະທິບາຍ

ໂສຠຓເຈຕສິກ ໒໕ ດວງ ຍ່ອມປຣະກອບໄດ້ສະເພາະໂສຠຓຈິດເທົ່ານັ້ນ ແລະກໍບໍ່ໄດ້ປຣະກອບພ້ອມກັນທັ້ງຫມົດ ດັ່ງນັ້ນ ຈຶ່ງສແດງສັມປໂຢຄນັຍແຫ່ງໂສຠຓເຈຕສິກໄວ້ເປັນ ໔ ນັຍ ຄື

ນັຍທີ່ ໑ ເຈຕສິກ ໑໙ ດວງນັ້ນ ຫມາຍເຖິງໂສຠຓສາຘາຣຓເຈຕສິກ ໑໙ ດວງ ຍ່ອມເຂົ້າປຣະກອບກັບໂສຠຓຈິດທັ້ງ ໕໙ ດວງ ຫຼືນັບຢ່າງພິສດາຣກໍທັ້ງ ໙໑ ດວງ ກ່າວຄື ໂສຠຓຈິດທັ້ງ ໕໙ ຫຼື ໙໑ ດວງ ບໍ່ວ່າຈະເປັນຈິດດວງໃດດວງນຶ່ງເກີດຂຶ້ນ ໂສຠຓສາຘາຣຓເຈຕສິກກໍຈະເຂົ້າປຣະກອບພ້ອມກັນທັນທີທັ້ງ ໑໙ ດວງ ບໍ່ມີເວັ້ນເລີຍ

ໂສຠຓສາຘາຣຓເຈຕສິກ ໑໙ ດວງ ໄດ້ແກ່ ສັທຘາ ສຕິ ຫິຣິ ໂອຕັປປະ ອໂລຠະ ອໂທສະ ຕັຕຣມັຊຊັຕຕຕາ ກາຍປັສສັທຘິ ຈິຕຕປັສສັທຘິ ກາຍລຫຸຕາ ຈິຕຕລຫຸຕາ ກາຍມຸທຸຕາ ຈິຕຕມຸທຸຕາ ກາຍກັມມັຎຎຕາ ຈິຕຕກັມມັຎຎຕາ ກາຍປາຄຸຎຎຕາ ຈິຕຕປາຄຸຎຎຕາ ກາຍຸຊຸກຕາ ຈິຕຕຸຊຸກຕາ

ນັຍທີ່ ໒ ເຈຕສິກ ໓ ດວງ ຍ່ອມປຣະກອບກັບຈິດ ໑໖ ດວງ ນັ້ນຫມາຍເຖິງວິຣຕີເຈຕສິກ ໓ ດວງ ຄື ສັມມາວາຈາເຈຕສິກ ສັມມາກັມມັນຕເຈຕສິກ ແລະສັມມາອາຊີວເຈຕສິກ ຍ່ອມປຣະກອບໄດ້ກັບຈິດ ໑໖ ດວງ ໄດ້ແກ່ ມຫາກຸສົລຈິດ ໘ ໂລກຸຕຕຈິດ ໘

ນັຍທີ່ ໓ ເຈຕສິກ ໒ ດວງ ຍ່ອມປຣະກອບກັບຈິດ ໒໘ ດວງ ນັ້ນ ຫມາຍເຖິງອັປປມັຎຎາເຈຕສິກ ໒ ດວງ ຄື ກຣຸຓາເຈຕສິກ ແລະມຸທິຕາເຈຕສິກ ຍ່ອມປຣະກອບກັບຈິດ ໒໘ ດວງ ຊຶ່ງໄດ້ແກ່ ມຫາກຸສົລຈິດ ໘ ມຫາກິຣິຍາຈິດ ໘ ຮູປາວຈຣຈິດ ໑໒ (ເວັ້ນຮູປາວຈຣປັຎຈມຊານຈິດ ໓)

ນັຍທີ່ ໔ ປັຎຎາເຈຕສິກ ຍ່ອມປຣະກອບກັບຈິດ ໔໗ ດວງ ຊຶ່ງໄດ້ແກ່ ກາມາວຈຣຎາຓສັມປຢຸຕຕຈິດ ໑໒ ມຫັຄຄຕຈິດ ໒໗ ໂລກຸຕຕຈິດ ໘

ອນິຢຕໂຢຄີເຈຕສິກ

ອນິຢຕໂຢຄີເຈຕສິກ ຄືເຈຕສິກທີ່ປຣະກອບບໍ່ແນ່ນອນ ຫມາຍຄວາມວ່າເຈຕສິກ ນັ້ນບາງເທື່ອກໍປຣະກອບ ບາງເທື່ອກໍບໍ່ປຣະກອບ

໑໑. ອິສ຺ສມຈ຺ຉເຣກຸກ຺ກຸຈ຺ຈ ວິຣຕີ ກຣຸຓາ ທໂຢ
ນານາ ກທາຈິ ມາໂນຈ ຖີນມິທ຺ຘໍ ຕຖາ ສຫ ໆ

ແປລຄວາມວ່າ ອິສສາ ມັຈຉຣິຍະ ກຸກກຸຈຈະ ວິຣຕີ (໓ ດວງ) ກຣຸຓາ ມຸທິຕາ ມານະ ຖີນະ ມິທຘະ ຍ່ອມປຣະກອບກັບຈິດ ເປັນບາງເທື່ອບໍ່ພ້ອມກັນ (ທັງ ໑໑ ດວງນີ້ ເປັນ ອນິຢຕໂຢຄີເຈຕສິກ)

໑໒. ຢຖາວຸຕ຺ຕານຸສາເຣນ ເສສາ ນິຢຕໂຢຄີໂນ
ສງຄຫຎຈ ປວກ຺ຂາມິ ເຕສມ຺ທານິ ຢຖາຣຫໍ ໆ

ແປລຄວາມວ່າ ອາສັລນັຍທີ່ກ່າວມານີ້ ເຈຕສິກທີ່ເຫລືອທາກໍ່ຮູ້ວ່າເປັນ **ນິຢຕໂຢຄີເຈຕສິກ** ເຈຕສິກທີ່ເຫລືອ (໔໑ ດວງ) ເປັນນິຢຕໂຢຄີເຈຕສິກ (ປະກອບໄດ້ແນ່ນອນ) ຕໍ່ໄປນີ້ຈະໄດ້ກ່າວສັງຄຫນັຍຂອງເຈຕສິກ ຕາມສົມຄວຣ

ອະທິບາຍ

ເຈຕສິກທັງ ໕໒ ດວງ ຈຳແນກໄດ້ ໒ ປະເພທ ຄື **ອນິຢຕໂຢຄີເຈຕສິກ** ແລະ **ນິຢຕໂຢຄີເຈຕສິກ**

ກ. **ອນິຢຕໂຢຄີເຈຕສິກ** ເປັນເຈຕສິກທີ່ປະກອບກັບຈິຕບໍ່ສເມີໄປ ບໍ່ເປັນທີ່ແນ່ນອນກ່າວຄື ປະກອບເປັນບາງເທື່ອ ມີຈຳນວນ ໑໑ ດວງ ໄດ້ແກ່ ອິສສາ ມັຈຈຣິຢະ ກຸກກຸຈຈະ ສັມມາວາຈາ ສັມມາກັມມັນຕະ ສັມມາອາຊີວະ ກຣຸຕາ ມຸທິຕາ ມານະ ຖີນະ ແລະມິທທະ

ຂ. **ນິຢຕໂຢຄີເຈຕສິກ** ເປັນເຈຕສິກທີ່ປະກອບກັບຈິຕສເມີ ເປັນທີ່ແນ່ນອນມີ ໔໑ ດວງຄື ເຈຕສິກທີ່ເຫລືອຈາກ ໑໑ ດວງນັ້ນເອງ

ອນິຢຕໂຢຄີເຈຕສິກ ທີ່ວ່າປະກອບກັບຈິຕບໍ່ສເມີໄປ ບໍ່ແນ່ນອນ ບາງເທື່ອກໍ່ປະກອບ ບາງເທື່ອກໍ່ບໍ່ປະກອບນັ້ນ ເປັນດັ່ງນີ້

໑. **ອິສສາ ມັຈຈຣິຢະ ກຸກກຸຈຈະ** ໓ ດວງນີ້ ຖ້າຈະເກີດກໍ່ຕ້ອງເກີດຮ່ວມກັນພ້ອມກັບໂທສຈິຕ ແລະຈະຕ້ອງເກີດເທື່ອລະດວງ ຄືທີລະຢ່າງເທົ່ານັ້ນ ເພາະອາຣົມຕ່າງກັນ ການປະກອບເປັນບາງເທື່ອແລະເທື່ອລະດວງ ເຊັ່ນນີ້ເອີ້ນວ່າ **ນານາກທາຈິ**

ເວລາທີ່ຣິຫຢາສົມບັຕິຂອງຜູ້ອື່ນ ອິສສາເຈຕສິກກໍ່ເກີດຮ່ວມກັບໂທສະ ແຕ່ມັຈຈຣິຢະແລະກຸກກຸຈຈະບໍ່ເກີດ ເພາະອາຣົມຕ໌ຄົນລະຢ່າງຕ່າງກັນ

ເວລາທີ່ຫານງວແນ່ນໃນສົມບັຕິຂອງຕົນ ມັຈຈຣິຢເຈຕສິກກໍ່ເກີດຮ່ວມກັບໂທສະ ແຕ່ອິສສາແລະກຸກກຸຈຈະບໍ່ເກີດ

ເວລາທີ່ເສົ້າໃຈ ຣຳຄານໃຈ ໃນບາປທີ່ຕົນໄດ້ກຣະທຳໄປແລ້ວ ຫຼືໃນການບຸນທີ່ຕົນບໍ່ໄດ້ເຮັດ ກຸກກຸຈຈະເຈຕສິກກໍ່ເກີດຮ່ວມກັບໂທສະ ແຕ່ອິສສາແລະມັຈຈຣິຢະບໍ່ເກີດ

໒. **ວິຣຕີ ໓ ດວງ** ຄື ສັມມາວາຈາເຈຕສິກ ສັມມາກັມມັນຕະເຈຕສິກ ແລະ ສັມມາອາຊີວເຈຕສິກນັ້ນ ຖ້າເປັນໂລກີຍ໌ປະກອບກັບຈິຕທີ່ເປັນມຫາກຸສົລ ກໍ່ເປັນ**ນານາກທາຈິ** ຄືປະກອບເປັນບາງເທື່ອ ແລະປະກອບເທື່ອລະດວງ

ເວລາທີ່ເວັ້ນ **ວຈີທຸຈຣິຕ ໔** ຄື ມຸສາວາຈາ ປິສຸຕາວາຈາ ຜຣຸສວາຈາ ແລະສັມຜັປປລາປວາຈາ ທີ່ບໍ່ກ່ຽວກັບອາຊີພເວລານັ້ນສັມມາວາຈາກໍ່ເກີດ ແຕ່ສັມມາກັມມັນຕະແລະສັມມາອາຊີວະ ບໍ່ເກີດ

ເວລາທີ່ເວັ້ນ **ກາຍທຸຈຣິຕ ໓** ຄື ປາຕາຕິບາຕ ອທິນນາທານ ແລະກາເມສຸມິຈສາຈາຕ ທີ່ບໍ່ກ່ຽວກັບອາຊີພ ເວລານັ້ນສັມມາກັມມັນຕະກໍ່ເກີດ ແຕ່ສັມມາວາຈາແລະສັມມາອາຊີວະບໍ່ເກີດ

ເວລາທີ່ເວັ້ນ **ວຈີທຸຈຣິຕ ໔** ແລະ **ເວັ້ນກາຍທຸຈຣິຕ ໓** ທີ່ຣວມເອີ້ນວ່າເວັ້ນທຸຈຣິຕ ໗ ທີ່ກ່ຽວກັບອາຊີພເວລານັ້ນສັມມາອາຊີວະເກີດ ແຕ່ຖືວ່າສັມມາວາຈາແລະສັມມາກັມມັນຕະບໍ່ເກີດ

ແຕ່ຖ້າເປັນໂລກຸຕຕະໂດຍປະກອບກັບໂລກຸຕຕະຈິດແລ້ວ ກໍເປັນ **ນິຍຕເອກໂຕ** ຄືຕ້ອງປະກອບແນ່ນອນແລະປະກອບພ້ອມກັນທັງ ໓ ດວງ ເພາະວິຣະຕີນີ້ເປັນອົງຄ໌ມັຄຄມີໜ້າທີ່ປະຫານກິເລສ ຖ້າວິຣະຕີບໍ່ເກີດ ມັຄຄຈິດກໍຈະເກີດບໍ່ໄດ້ເລີຍ

໓. **ກຣຸນາເຈຕສິກ** ກັບມຸທິຕາເຈຕສິກ ກໍເປັນ **ນານາກທາຈິ** ຄືປະກອບເປັນບາງເທື່ອແລະເທື່ອລະດວງ

ເວລາໃດທີ່ຮັບເອົາທຸກຂິຕສັຕວ໌ ຄືສັຕວ໌ທີ່ກຳລັງໄດ້ຮັບທຸກຂ໌ຢູ່ເປັນອາຣົມຕ໌ເກີດກຣຸນາສົງສານສັຕວ໌ນັ້ນ ປັຕຖນາຊ່ວຍສັຕວ໌ນັ້ນໃຫ້ພົ້ນທຸກຂ໌ ກຣຸນາເຈຕສິກກໍເກີດແຕ່ມຸທິຕາເຈຕສິກບໍ່ເກີດ

ເວລາໃດທີ່ຮັບເອົາສຸຂິຕສັຕວ໌ ຄືສັຕວ໌ທີ່ກຳລັງມີຄວາມສຸຂຢູ່ເປັນອາຣົມຕ໌ແລ້ວກໍພລອຍປີຕິຍິນດີກັບເຂົາດ້ວຍເຊັ່ນນີ້ ມຸທິຕາເຈຕສິກກໍເກີດ ແຕ່ກຣຸນາເຈຕສິກບໍ່ເກີດ

໔. **ມານເຈຕສິກ** ເພາະມີດວງດຽວ ບໍ່ມີພວກ ຈຶ່ງເອີ້ນວ່າເປັນ **ກທາຈິ** ຄືປະກອບເປັນບາງເທື່ອ (ບໍ່ແມ່ນ**ນານາກທາຈິ** ຊຶ່ງໝາຍຄວາມວ່າປະກອບເປັນບາງເທື່ອແລະເທື່ອລະດວງ) ມານເຈຕສິກນີ້ຖ້າຈະເກີດ ກໍເກີດໃນໂລກທິຜຸຄຄຕວິປປຍຸຕຕຈິຕ ໔ ດວງ

໕. **ຖີນເຈຕສິກ** ແລະມິທລເຈຕສິກ ຄູ່ນີ້ເປັນ **ສຫກທາຈິ** ຄືປະກອບເປັນບາງເທື່ອແລະພ້ອມກັນ ໝາຍຄວາມວ່າຖ້າຈະປະກອບກໍຕ້ອງປະກອບດ້ວຍກັນພ້ອມກັນທັງຄູ່ (ບໍ່ແມ່ນເທື່ອລະດວງ) ຫຼືຖ້າບໍ່ປະກອບກໍບໍ່ປະກອບທັງຄູ່

ສັງຄຫນັຍ

ສັງຄຫະ ແປລວ່າ **ຣວບຣວມ** ຫຼື **ສົງເຄາະຫ໌** ໃນທີ່ນີ້ມີຄວາມໝາຍວ່າ ຈິຕແຕ່ລະດວງໄດ້ຣວບຣວມເຈຕສິກເຂົ້າມາໄວ້ເທົ່າໃດ ຄື ຫຍັງແດ່? ຫຼື ຈິຕແຕ່ລະດວງມີເຈຕສິກຫຍັງແດ່? ຣວມເປັນຈຳນວນເທົ່າໃດມາສົງເຄາະຫ໌ຈິຕນັ້ນ

໑໓. ຉຕ຺ຕິສານຸຕ຺ຕເຣ ລມ຺ມາ ປຌ຺ຈຕິສ ມຫຄ຺ຄເຕ
ອຕ຺ຖຕິສາປິ ລພ຺ກນ຺ຕິ ກາມາວຈໂສກຕເຕ ຯ

໑໔. ສຕ຺ຕວີສຕິປຸຌ຺ຌມ຺ຫິ ທ຺ວາທສາເຫຕ຺ເກຕິ ຈ
ຍຖາສມ຺ພວໂຢເຄນ ປຌ຺ຈລາ ຕຕ຺ຖ ສງ຺ຄໂຫ ຯ

ແປລຄວາມວ່າ **ໂລກຸຕຕຈິຕ** ປະກອບດ້ວຍເຈຕສິກ ໓໖ ດວງ (ໂລກຸຕຕຈິຕຢ່າງຫຍໍ້ ໘ ດວງ)

ມຫັຄຄຕຈິຕ ປະກອບດ້ວຍເຈຕສິກ ໓໕ ດວງ

ກາມາວຈໂສກຕຈິຕ ປະກອບດ້ວຍເຈຕສິກ ໓໘ ດວງ

ອກຸສົລຈິຕ ປະກອບດ້ວຍເຈຕສິກ ໒໗ ດວງ

ອເຫຕຸກຈິຕ ປະກອບດ້ວຍເຈຕສິກ ໑໒ ດວງ

ຈິຕທີ່ຖືກປະກອບດ້ວຍເຈຕສິກ ໂດຍສັງຄຫນັຍ ໕ ຢ່າງ

ອນຸຕຕຣສັງຄຫນັຍ

ອນຸຕຕຣ ມີຄວາມໝາຍວ່າ ***ເໜືອຢ່າງບໍ່ມີຫຍັງເໜືອກວ່າ*** ຫຼືແມ້ແຕ່ຈະເໜືອເທົ່າ ພົ້ນຢ່າງບໍ່ມີຫຍັງຈະທຽບໄດ້ ທັງນີ້ກໍໝາຍເຖິງໂລກຸຕຕຣນັ້ນເອງ ດັ່ງນັ້ນອນຸຕຕຣສັງຄຫນັຍ ກໍຄື ສັງຄຫນັຍແຫ່ງໂລກຸຕຕຈິຕ ນັ້ນແຫລະ

໑໕. ຉຕ຺ຕິ຺ສ ປຍ຺ຈຕິ຺ສາ ຈ　　ຈຕຸຕ຺ຕິ຺ສ ຢຖາກ຺ກມໍ
ເຕຕ຺ຕິ຺ສ ທ຺ວຢມິຈ຺ເຈວໍ　　ປຍ຺ຈຮານຸຕ຺ຕເຣ ຖິຕາ ໆ

ແປລຄວາມວ່າ ໂລກຸຕຕຈິຕນັ້ນ (ຢ່າງພິສດານ ໔໐ ດວງ) ມີສັງຄຫະ ໕ ນັຍ ຕາມລຳດັບ ຄື ໓໖ ນັຍນຶ່ງ, ໓໕ ນັຍນຶ່ງ, ໓໔ ນັຍນຶ່ງ, ໓໓ ຄູ່ນຶ່ງ

ອະທິບາຍ

ນັຍທີ່ ໑ ປຖົມຊານມັຄຄຈິຕ ໒ ດວງ ປຖົມຊານຜົລຈິຕ ໒ ດວງ ມີເຈຕສິກປຣະກອບ ໓໖ ດວງ ໄດ້ແກ່ ອັນຍສມານາເຈຕສິກ ໑໓ ໂສພຳເຈຕສິກ ໒໓ (ເວັ້ນອັປປມັນຍາເຈຕສິກ ໒)

ນັຍທີ່ ໒ ທຸຕິຍຊານມັຄຄຈິຕ ໒ ດວງ ທຸຕິຍຊານຜົລຈິຕ ໒ ດວງ ມີເຈຕສິກປຣະກອບ ໓໕ ດວງ ໄດ້ແກ່ ອັນຍສມານາເຈຕສິກ ໑໒ (ເວັ້ນວິຕົກເຈຕສິກ) ໂສພຳເຈຕສິກ ໒໓ (ເວັ້ນອັປປມັນຍາ ໒)

ນັຍທີ່ ໓ ຕະຕິຍຊານມັຄຄຈິຕ ໒ ດວງ ຕະຕິຍຊານຜົລຈິຕ ໒ ດວງ ມີເຈຕສິກປຣະກອບ ໓໔ ດວງ ໄດ້ແກ່ ອັນຍສມານາເຈຕສິກ ໑໑ (ເວັ້ນວິຕົກ ວິຈາຣ) ໂສພຳເຈຕສິກ ໒໓ (ເວັ້ນອັປປມັນຍາ)

ນັຍທີ່ ໔ ຈຕຸຕຖຊານມັຄຄຈິຕ ໒ ດວງ ຈຕຸຕຖຊານຜົລຈິຕ ໒ ດວງ ມີເຈຕສິກປຣະກອບ ໓໓ ດວງ ໄດ້ແກ່ ອັນຍສມານາເຈຕສິກ ໑໐ (ເວັ້ນວິຕົກ ວິຈາຣ ປີຕິ) ໂສພຳເຈຕສິກ ໒໓ (ເວັ້ນອັປປມັນຍາ)

ນັຍທີ່ ໕ ປັນຈມຊານມັຄຄຈິຕ ໒ ດວງ ປັນຈມຊານຜົລຈິຕ ໒ ດວງມີເຈຕສິກປຣະກອບ ໓໓ ດວງໄດ້ແກ່ ອັນຍສມານາເຈຕສິກ ໑໐ (ເວັ້ນວິຕົກ ວິຈາຣ ປີຕິ) ໂສພຳເຈຕສິກ ໒໓ (ເວັ້ນອັປປມັນຍາ)

ມຫັຄຄຕສັງຄຫນັຍ

໑໖. ປຍ຺ຈຕິ຺ສ ຈຕຸຕ຺ຕິ຺ສ　　ເຕຕ຺ຕິ຺ສ ຈ ຢຖາກ຺ກມໍ
ພາຕ຺ຕິ຺ສ ເຈວ ຕິ຺ເສຕິ　　ປຍ຺ຈຮາວ ມຫຄ຺ຄເຕ

ແປລຄວາມວ່າ ມຫັຄຄຕຈິຕ ໒໗ ດວງ ມີສັງຄຫະ ໕ ນັຍ ຕາມລຳດັບຄື ໓໕ ນັຍນຶ່ງ, ໓໔ ນັຍນຶ່ງ, ໓໓ ນັຍນຶ່ງ, ໓໒ ນັຍນຶ່ງ ແລະ ໓໐ ນັຍນຶ່ງ

ອະທິບາຍ

ມຫັຄຄຕຈິຕ ໒໗ ດວງ ນັ້ນ ເມື່ອນັບຕາມອຳນາຈແຫ່ງຊານແລ້ວ ກໍມີເຈຕສິກປຣະກອບບໍ່ເທົ່າກັນ ຈຶ່ງຈັດໄດ້ເປັນ ໕ ນັຍ ຄື

ນັຍທີ່ ໑ ປຖົມຊານ ກຸສົລ ໑ ວິບາກ ໑ ກິຣິຍາ ໑ ຮວມ ໓ ດວງ ມີເຈຕສິກປຣະກອບ ໓໕ ດວງ ໄດ້ແກ່ ອັຌຌສມານາເຈຕສິກ ໑໓ ໂສຠຓເຈຕສິກ ໑໒ (ເວັ້ນວິຣຕິເຈຕສິກ ໓)

ນັຍທີ່ ໒ ທຸຕິຍຊານ ກຸສົລ ໑ ວິບາກ ໑ ກິຣິຍາ ໑ ຮວມ ໓ ດວງ ມີ ເຈຕສິກປຣະກອບ ໓໕ ດວງໄດ້ແກ່ ອັຌຌສມານາເຈຕສິກ ໑໒ (ເວັ້ນວິຕົກເຈຕສິກ) ໂສຠຓເຈຕສິກ ໑໒ (ເວັ້ນວິຣຕິ ໓)

ນັຍທີ່ ໓ ຕຕິຍຊານ ກຸສົລ ໑ ວິບາກ ໑ ກິຣິຍາ ໑ ຮວມ ໓ ດວງ ມີເຈຕສິກປຣະກອບ ໓໓ ດວງໄດ້ແກ່ ອັຌຌສມານາເຈຕສິກ ໑໑ (ເວັ້ນວິຕົກ ວິຈາຣ) ໂສຠຓເຈຕສິກ ໑໒ (ເວັ້ນວິຣຕິ ໓)

ນັຍທີ່ ໔ ຈຕຸຕຖຊານ ກຸສົລ ໑ ວິບາກ ໑ ກິຣິຍາ ໑ ຮວມ ໓ ດວງ ມີເຈຕສິກປຣະກອບ ໓໒ ດວງ ໄດ້ແກ່ ອັຌຌສມານາເຈຕສິກ ໑໐ (ເວັ້ນວິຕົກ ວິຈາຣ ປີຕິ) ໂສຠຓເຈຕສິກ ໑໒ (ເວັ້ນວິຣຕິ ໓)

ນັຍທີ່ ໕ ປັຌຈມຊານ ໑໕ ດວງ ຄື ຣູປາວຈຣປັຌຈມຊານ ກຸສົລ ວິບາກ ກິຣິຍາ ໓ ດວງ ອຣູປາວຈຣ ກຸສົລ ວິບາກ ກິຣິຍາ ໑໒ ດວງ ມີເຈຕສິກປຣະກອບ ໓໐ ດວງ ໄດ້ແກ່ ອັຌຌສມານາເຈຕສິກ ໑໐ (ເວັ້ນວິຕົກ ວິຈາຣ ປີຕິ) ໂສຠຓເຈຕສິກ໒໐ (ເວັ້ນວິຣຕິ ໓ ອັປປມັຌຌາ ໓)

ກາມາວຈໂສຠຓສັງຄຫນັຍ

໑໗. ອຏ຺ຐຕິໍສ ສຕ຺ຕຕິໍສ　　ທ຺ວຍໍ ຉຕ຺ຕິໍສກໍ ສຸເຠ
ປຌ຺ຈຕິໍສ ຈຕຸຕ຺ຕິໍສ　　ທ຺ວຍໍ ເຕຕ຺ຕິໍສກໍ ກ຺ຣິເຍ ຯ
໑໗. ເຕຕ຺ຕິໍສ ປາເກ ພາຕ຺ຕິໍສທ຺　　ວເຍກຕິໍສກໍ ຠເວ
ສເຫຕຸກາມາວຈຣ　　ປຸຌ຺ຌປາກກ຺ຣິຍາມເນ ຯ

ແປລຄວາມວ່າ ໃນສເຫຕຸກກາມາວຈຣ ກຸສົລ ວິບາກ ກິຣິຍາ ມີສັງຄຫະ ຕາມລຳດັບຄື:

ມຫາກຸສົລ ມີ ໓໘ ນຶ່ງນັຍ ໓໗ ສອງນັຍ ໓໖ ນຶ່ງນັຍ
ມຫາວິບາກ ມີ ໓໕ ນຶ່ງນັຍ ໓໔ ສອງນັຍ ໓໓ ນຶ່ງນັຍ
ມຫາກິຣິຍາ ມີ ໓໓ ນຶ່ງນັຍ ໓໒ ສອງນັຍ ໓໑ ນຶ່ງນັຍ

ອທິບາຍ

ໃນກາມາວຈໂສຠຓຈິຕ ໒໔ ດວງນັ້ນ ມີສັງຄຫະຮວມ ໑໒ ນັຍ ດັ່ງນີ້ ຄື

ມຫາກຸສົລ ໘ ດວງ ມີເຈຕສິກປຣະກອບ ໔ ນັຍ ຄື ໓໘, ໓໗, ໓໗, ໓໖
ມຫາກິຣິຍາ ໘ ດວງ ມີເຈຕສິກປຣະກອບ ໔ ນັຍ ຄື ໓໕, ໓໔, ໓໔, ໓໓
ມຫາວິບາກ ໘ ດວງ ມີເຈຕສິກປຣະກອບ ໔ ນັຍ ຄື ໓໓, ໓໒, ໓໒, ໓໑

ນັຍທີ່ ໑ ມຫາກຸສົລ ຄູ່ທີ່ ໑ ຄືດວງທີ່ ໑ ກັບດວງທີ່ ໒ ທີ່ເປັນຍາຕສັມປະຍຸຕຕ ທັງຄູ່ ມີເຈຕະສິກປະກອບ ໓໘ ດວງ ຕັນທີ່ ຄື ອັນຍະສະມານາເຈຕະສິກ ໑໓ ໂສພະນະເຈຕະສິກ ໒໕

ນັຍທີ່ ໒ ມຫາກຸສົລ ຄູ່ທີ່ ໒ ຄືດວງທີ່ ໓ ກັບດວງທີ່ ໔ ຊຶ່ງເປັນຍາຕວິປະຍຸຕຕທັງຄູ່ ມີເຈຕະສິກປະກອບ ໓໗ ດວງ ຄື ອັນຍະສະມານາເຈຕະສິກ ໑໓ ໂສພະນະເຈຕະສິກ ໒໔ (ເວັ້ນປັນຍາເຈຕະສິກ)

ນັຍທີ່ ໓ ມຫາກຸສົລ ຄູ່ທີ່ ໓ ຄືດວງທີ່ ໕ ກັບດວງທີ່ ໖ ຊຶ່ງເປັນອຸເບກຂາທັງຄູ່ ມີເຈຕະສິກປະກອບ ໓໗ ດວງ ຄື ອັນຍະສະມານາເຈຕະສິກ ໑໒ (ເວັ້ນປີຕິ) ໂສພະນະເຈຕະສິກ ໒໕

ນັຍທີ່ ໔ ມຫາກຸສົລ ຄູ່ທີ່ ໔ ຄືດວງທີ່ ໗ ກັບດວງທີ່ ໘ ຊຶ່ງທັງຄູ່ເປັນອຸເບກຂາດ້ວຍເປັນຍາຕວິປະຍຸຕຕດ້ວຍ ມີເຈຕະສິກປະກອບ ໓໖ ດວງຄື ອັນຍະສະມານາເຈຕະສິກ ໑໒ (ເວັ້ນປີຕິ) ໂສພະນະເຈຕະສິກ ໒໔ (ເວັ້ນປັນຍາ)

ນັຍທີ່ ໕ ມຫາກິຣິຍາຄູ່ທີ່ ໑ ຄືດວງທີ່ ໑ ກັບດວງທີ່ ໒ ມີເຈຕະສິກປະກອບ ໓໕ ດວງ ຄື ອັນຍະສະມານາເຈຕະສິກ ໑໓ ໂສພະນະເຈຕະສິກ ໒໒ (ເວັ້ນວິຣະຕີເຈຕະສິກ ໓)

ນັຍທີ່ ໖ ມຫາກິຣິຍາຄູ່ທີ່ ໒ ຄືດວງທີ່ ໓ ກັບດວງທີ່ ໔ ມີເຈຕະສິກປະກອບ ໓໕ ດວງ ຄື ອັນຍະສະມານາເຈຕະສິກ ໑໓ ໂສພະນະເຈຕະສິກ ໒໑ (ເວັ້ນວິຣະຕີ ໓ ປັນຍາ ໑)

ນັຍທີ່ ໗ມຫາກິຣິຍາ ຄູ່ທີ່ ໓ ຄືດວງທີ່ ໕ ກັບດວງທີ່ ໖ ມີເຈຕະສິກປະກອບ ໓໕ ດວງ ຄື ອັນຍະສະມານາເຈຕະສິກ ໑໒ (ເວັ້ນປີຕິ) ໂສພະນະເຈຕະສິກ ໑໒ (ເວັ້ນວິຣະຕີ)

ນັຍທີ່) ມຫາກິຣິຍາ ຄູ່ທີ່ ໔ ຄືດວງທີ່ ໗ ກັບດວງທີ່ ໘ ມີເຈຕະສິກປະກອບ ໓໓ ດວງ ຄື ອັນຍະສະມານາເຈຕະສິກ ໑໒ (ເວັ້ນປີຕິ) ໂສພະນະເຈຕະສິກ ໒໑ (ເວັ້ນວິຣະຕີ ປັນຍາ)

ນັຍທີ່ ໙ ມຫາວິບາກ ຄູ່ທີ່ ໑ ຄືດວງທີ່ ໑ ກັບດວງທີ່ ໒ ມີເຈຕະສິກປະກອບ ໓໓ ດວງ ຄື ອັນຍະສະມານາເຈຕະສິກ ໑໓ ໂສພະນະເຈຕະສິກ ໑໐ (ເວັ້ນວິຣະຕີ ອັປປະມັນຍາ)

ນັຍທີ່ ໑໐ ມຫາວິບາກ ຄູ່ທີ່ ໒ ຄືດວງທີ່ ໓ ກັບດວງທີ່ ໔ ມີເຈຕະສິກປະກອບ ໓໒ ດວງ ຄືອັນຍະສະມານາເຈຕະສິກ ໑໓ ໂສພະນະເຈຕະສິກ ໑໙ (ເວັ້ນວິຣະຕີ ອັປປະມັນຍາ ແລະປັນຍາ)

ນັຍທີ່ ໑໑ ມຫາວິບາກ ຄູ່ທີ່ ໓ ຄືດວງທີ່ ໕ ກັບດວງທີ່ ໖ ມີເຈຕະສິກປະກອບ ໓໒ ດວງ ຄື ອັນຍະສະມານາເຈຕະສິກ ໑໒ (ເວັ້ນປີຕິ) ໂສພະນະເຈຕະສິກ ໑໐ (ເວັ້ນວິຣະຕີ ອັປປະມັນຍາ)

ນັຍທີ່ ໑໒ ມຫາວິບາກ ຄູ່ທີ່ ໔ ຄືດວງທີ່ ໗ ກັບດວງທີ່ ໘ ມີເຈຕະສິກປະກອບ ໓໑ ດວງ ຄື ອັນຍະສະມານາເຈຕະສິກ ໑໒ (ເວັ້ນປີຕິ) ໂສພະນະເຈຕະສິກ ໑໙ (ເວັ້ນວິຣະຕີ ອັປປະມັນຍາ ແລະປັນຍາ)

ໂສພະນະເຈຕະສິກທີ່ບໍ່ໄດ້ສັງຄະຫະນັຍ

ຕໍ່ໄປນີ້ຈະສແດງໂສພະນະເຈຕະສິກບາງດວງ ທີ່ບໍ່ໄດ້ປະກອບກັບໂສພະນະຈິຕ ບາງປະເພທ

໑໙. ນ ວິຊຊນເຕຕຸຖ ວິຣຕີ ກຸຣເຢສຸ ຈ ມຫຄຸຄເຕ

ອນຸຕ຺ຕເຣ ອປ຺ປມຍ຺ຍາ ກາມປາເກ ທຸວຍ຺ ຕຖາ ໆ

ແປລຄວາມວ່າ ໂສພາຕະເຈຕະສິກທີ່ກ່າວມານີ້

ໃນມະຫາກິຣິຍາຈິດ ຍ່ອມບໍ່ມີວິຣະຕີເຈຕະສິກ

ໃນມະຫັຄຄະຕະຈິດ ຍ່ອມບໍ່ມີວິຣະຕີເຈຕະສິກ

ໃນໂລກຸຕຕະຈິດ ຍ່ອມບໍ່ມີອັປປະມັນຍາເຈຕະສິກ

ໃນມະຫາວິບາໃຈິດ ຍ່ອມບໍ່ມີທັ້ງ ໕ (ຄືທັ້ງວິຣະຕີ ແລະ ອັປປະມັນຍາ)

ອະທິບາຍ

໑. ໃນມະຫາກິຣິຍາຈິດ ໘ ດວງ ທັ້ງນີ້ເປັນເພາະມະຫາກິຣິຍາຈິດ ເປັນຈິດຂອງພຣະອະຣະຫັນຕ໌ ຊຶ່ງຈົບການສຶກສາແລ້ວ ເປັນຜູ້ທີ່ປຣາສຈາກບາປທັມທັ້ງປວງ ຕັ້ງແຕ່ອະຣະຫັຕຕະຜົລໄດ້ເກີດຂຶ້ນແລ້ວ ຈຶ່ງບໍ່ຈຳເປັນຫຼືບໍ່ມີກິຈທີ່ຈະຕ້ອງເວັ້ນເວົ້າຊົ່ວເວັ້ນທຳຊົ່ວຫຼືເວັ້ນລ້ຽງຊີພຊົ່ວອີກເລີຍ ດ້ວຍວ່າບໍ່ມີກິເລສເຫລືອທີ່ຈະໃຫ້ທຳຊົ່ວຢ່າງນັ້ນ ຫຼື ຢ່າງໃດ ໆ ທັ້ງສິ້ນ

໒. ໃນມະຫັຄຄະຕະຈິດທັ້ງ ໒໗ ດວງ ກໍບໍ່ມີວິຣະຕີເຈຕະສິກປະກອບ ເພາະມະຫັຄຄະຕະຈິດເກີດຂຶ້ນໂດຍມີກັມມັຜຖານເປັນອາຣົມຕ໌ ບໍ່ແມ່ນເກີດຂຶ້ນໂດຍອາສັຍການເວັ້ນທຸຈຣິຕຊຶ່ງຈະຕ້ອງມີວິຣະມິຕັພພວັຕຖຸ (ວັຕຖຸອັນຄວຣເວັ້ນ) ເປັນອາຣົມຕ໌ແຕ່ຢ່າງໃດ

໓. ໃນໂລກຸຕຕະຈິດ ບໍ່ມີອັປປະມັນຍາເຈຕະສິກປະກອບ ເພາະອັປປະມັນຍາເຈຕະສິກ ຈະຕ້ອງມີສັຕວ໌ບັນຍັຕິເປັນອາຣົມຕ໌ ແຕ່ໂລກຸຕຕະຈິດນັ້ນມີພຣະນິພພານເປັນອາຣົມຕ໌ແຕ່ຢ່າງດຽວ

໔. ໃນມະຫາວິບາໃຈິດ ໘ ດວງ ກໍບໍ່ມີວິຣະຕີເຈຕະສິກທັ້ງ ໓ ແລະອັປປະມັນຍາເຈຕະສິກທັ້ງ ໒ ຣວມ ໕ ດວງນີ້ ປະກອບດ້ວຍເລີຍ ເພາະມະຫາວິບາກເປັນຈິດທີ່ເປັນຜົລຂອງມະຫາກຸສົລ ທຳຫນ້າທີ່ປະຕິສົນທິ ເປັນຕົ້ນ ເມື່ອຂະຕະປະຕິສົນທິນັ້ນ ບໍ່ຕ້ອງເວັ້ນເວົ້າຊົ່ວ ເວັ້ນທຳຊົ່ວ ແລະເວັ້ນລ້ຽງຊີພຊົ່ວ ທັ້ງຂະຕະນັ້ນກໍບໍ່ໄດ້ກຣຸຕາສົງສາຣຜູ້ໃດ ບໍ່ໄດ້ມີມຸທິຕາ ຄືພລອຍຍິນດີກັບໃຜ ອັນເປັນການເວັ້ນ ຄືບໍ່ເກີດ! ຫຼື ເກີດຂຶ້ນບໍ່ໄດ້ຢູ່ແລ້ວຕາມທັມມະຊາຕິ ຈຶ່ງບໍ່ຕ້ອງມີວິຣະຕີເຈຕະສິກ ອັປປະມັນຍເຈຕະສິກ ມາປະກອບ

ທັມມ໌ບາງປະການທີ່ທຳໃຫ້ຈິດຕ່າງກັນ

໒໐. ອນຸຕ຺ຕເຣ ຌານທມ຺ມາ ອປ຺ປມຍ຺ຍາ ຈ ມຊ຺ຌິເມ
ວິຣຕິ ຌາຓ ປີຕິ ຈ ປຣິຕ຺ເຕສຸ ວິເສສກາ ໆ

ແປລຄວາມວ່າ ໃນ **ໂລກຸຕຕະຈິດ** ຊານທັມມ໌ຍ່ອມ ເຮັດໃຫ້ຕ່າງກັນ

ໃນ **ມະຫັຄຄະຕະຈິດ** ຊານທັມມ໌ແລະອັປປະມັນຍາ ເຮັດໃຫ້ຕ່າງກັນ

ໃນ **ກາມາວະຈະໂສພາຕະຈິດ** ວິຣະຕີ ຍາຓ ປີຕິ ເຮັດໃຫ້ຕ່າງກັນ

ອະທິບາຍ

໑. ໃນ**ໂລກຸຕຕະຈິດ**ນັ້ນ ຊານອັງຄ໌ ຄືຊານທັງ ໕ ຍ່ອມທຳໃຫ້ຈິດວິເສດ ຄືຕ່າງກັນຈາກ ໘ ດວງ ເປັນ ໔໐ ດວງ ແລະ

ວິຕົກເຈຕະສິກ ທຳໃຫ້ ໂລກຸຕຕະຣະ ປະຖົມຊານ ຕ່າງກັບ ໂລກຸຕຕະຣະ ທຸຕິຍະຊານ

ວິຈາຣະເຈຕະສິກ ທຳໃຫ້ ໂລກຸຕຕະຣະ ທຸຕິຍະຊານ ຕ່າງກັບ ໂລກຸຕຕະຣະ ຕະຕິຍະຊານ

ປິຕິເຈຕະສິກ ທຳໃຫ້ ໂລກຸຕຕະຣະ ຕະຕິຍະຊານ ຕ່າງກັບ ໂລກຸຕຕະຣະ ຈະຕຸດຖະຊານ

ສຸຂະເວທະນາເຈຕະສິກ ທຳໃຫ້ ໂລກຸຕຕະຣະ ຈະຕຸດຖະຊານ ຕ່າງກັບ ໂລກຸຕຕະຣະ ປັນຈະມະຊານ

ອຸເບກຂາເວທະນາເຈຕະສິກ ທຳໃຫ້ ໂລກຸຕຕະຣະ ປັນຈະມະຊານ ຕ່າງກັບ ໂລກຸຕຕະຣະ ຊານຕົ້ນ ໆ

໔. ໃນມະຫັດຄະຕະຈິດນັ້ນ ຊານອັງຄ໌ແລະອັປປະມັນຍາເຈຕະສິກ ຍ່ອມທຳໃຫ້ຈິດວິເສດ ຄື ຕ່າງກັນ ດັ່ງຕໍ່ໄປນີ້

ວິຕົກເຈຕະສິກ ທຳໃຫ້ ໂລກິຍະ ປະຖົມຊານ ຕ່າງກັບ ໂລກິຍະ ທຸຕິຍະຊານ

ວິຈາຣະເຈຕະສິກ ທຳໃຫ້ ໂລກິຍະ ທຸຕິຍະຊານ ຕ່າງກັບ ໂລກິຍະ ຕະຕິຍະຊານ

ປິຕິເຈຕະສິກ ທຳໃຫ້ ໂລກິຍະ ຕະຕິຍະຊານ ຕ່າງກັບ ໂລກິຍະ ຈະຕຸດຖະຊານ

ສຸຂະເວທະນາເຈຕະສິກ ທຳໃຫ້ ໂລກິຍະ ຈະຕຸດຖະຊານ ຕ່າງກັບ ໂລກິຍະ ປັນຈະມະຊານ

ອຸເບກຂາເວທະນາເຈຕະສິກ ທຳໃຫ້ ໂລກິຍະ ປັນຈະມະຊານ ຕ່າງກັບ ໂລກິຍະ ຊານຕົ້ນ ໆ

ອັປປະມັນຍາເຈຕະສິກ ທຳໃຫ້ ໂລກິຍະ ປັນຈະມະຊານ ຕ່າງກັບ ໂລກິຍະ ຊານຕົ້ນ ໆ

໓. ໃນກາມາວະຈະໂສພະນະຈິດນັ້ນ ວິຣະຕີເຈຕະສິກ ຍານະຄື ປັນຍາເຈຕະສິກແລະປິຕິເຈຕະສິກ ຍ່ອມທຳໃຫ້ຈິດວິເສດ ຄື ຕ່າງກັນດັ່ງນີ້

ມະຫາກຸສົລຈິດ ມີວິຣະຕີປະຣະກອບ ທຳໃຫ້ຕ່າງກັບມະຫາກິຣິຍາຈິດ ຊຶ່ງບໍ່ມີວິຣະຕີປະຣະກອບ

ຈິດທີ່ເປັນຍານະສັມປະຢຸດຕະ ມີປັນຍາເຈຕະສິກປະຣະກອບ ທຳໃຫ້ຕ່າງກັບຈິດທີ່ເປັນຍານະວິປປະຢຸດຕະ ຊຶ່ງບໍ່ມີປັນຍາເຈຕະສິກປະຣະກອບ

ຈິດທີ່ເກີດພ້ອມດ້ວຍໂສມະນັສເວທະນາ ມີປິຕິເຈຕະສິກປະຣະກອບ ທຳໃຫ້ຕ່າງກັບຈິດທີ່ບໍ່ເກີດພ້ອມດ້ວຍໂສມະນັສເວທະນາ ຊຶ່ງບໍ່ມີປິຕິເຈຕະສິກປະຣະກອບ

ອີກຢ່າງ ມີຂໍ້ທີ່ຄວນສັງເກດວ່າ ໃນກໍລະນີໃດທີ່ປັນຍາເຈຕະສິກ ຫຼື ປິຕິເຈຕະສິກຈຶ່ງປະຣະກອບ ຫຼືບໍ່ປະຣະກອບນັ້ນ ດັ່ງນີ້:

ຈິດດວງໃດທີ່ເປັນຍານະສັມປະຢຸດຕະແລ້ວ ຈິດດວງນັ້ນຈະຕ້ອງມີປັນຍາເຈຕະສິກປະຣະກອບດ້ວຍສເມີໄປຢ່າງແນ່ນອນ

ຈິດດວງໃດທີ່ເກີດພ້ອມດ້ວຍໂສມະນັສເວທະນາແລ້ວ ຈິດດວງນັ້ນຈະຕ້ອງມີປິຕິເຈຕະສິກປະຣະກອບດ້ວຍສເມີໄປຢ່າງແນ່ນອນ (ຈະເພາະກາມຈິດ)

ດັ່ງນັ້ນ ກໍຄວຣເປັນທີ່ເຂົ້າໃຈໄດ້ວ່າ

ຈິຕດວງໃດທີ່ເປັນຌານວິປປຍຸຕຕ ຄືບໍ່ປຣະກອບດ້ວຍປັນຌາແລ້ວ ປັນຌາເຈຕສິກກໍຍ່ອມບໍ່ເຂົ້າປຣະກອບຢູ່ເອງ ແລະ ຈິຕດວງໃດທີ່ເກີດພ້ອມດ້ວຍໂທມນັສເວທນາ ຄວາມເສັຽໃຈກໍດີເກີດພ້ອມດ້ວຍອຸເບກຂາເວທນາ ລ້າໆ ກໍດີ ປີຕິ ຄືຄວາມອິ່ມໃຈ ຍ່ອມເຂົ້າປຣະກອບດ້ວຍບໍ່ໄດ້ເລີຍ ເພາະຄວາມເສັຽໃຈ ຫຼືຄວາມເສີຍໆ ຈະບໍ່ມີຄວາມອິ່ມໃຈ

ອກຸສົລສັງຄຫນັຍ

໒໑. ເອກູນວີສຕ຺ຖາຣສ ວີເສກວີສ ວີສຕິ

ທ຺ວາວີສ ປນ຺ນຣເສຕິ ສຕ຺ຕລາກຸສເລ ກິຕາ ໆ

ແປລຄວາມວ່າ ອກຸສົລຈິຕມີສັງຄຫະ ໗ ນັຍ ຕາມລຳດັບ ຄື ໑໙ ນັຍນຶ່ງ, ໑໘ ນັຍນຶ່ງ, ໒໑ ນັຍນຶ່ງ, ໑໐ ນັຍນຶ່ງ, ໑໒ ນັຍນຶ່ງ ແລະ ໑໕ ນັຍນຶ່ງ

ອະທິບາຍ

ອກຸສົລຈິຕ ໑໒ ດວງ ມີເຈຕສິກເຂົ້າປຣະກອບໄດ້ ຣວມທັ້ງຫມົດ ໒໗ ດວງ ຄື ອັລຌສມານາເຈຕສິກ ໑໓ ອກຸສົລເຈຕສິກ ໑໔

ແຕ່ວ່າ ອກຸສົລຈິຕແຕ່ລະດວງນັ້ນມີເຈຕສິກປຣະກອບໄດ້ບໍ່ເທົ່າກັນ ດັ່ງນັ້ນອກຸສົລ ຈິຕ ໑໒ ດວງ ຈຶ່ງຈັດສັງຄຫະໄດ້ເປັນ ໗ ນັຍ ຄື:

ນັຍທີ່ ໑ ໂລພມູລຈິຕດວງທີ່ ໑ ກັບດວງທີ່ ໓ ອັນເປັນອສັງຂາຣິກຄືກັນ ມີເຈຕສິກປຣະກອບ ໑໙ ດວງ ໄດ້ແກ່ ອັລຌສມານາເຈຕສິກ ໑໓ ສັພພາກຸສົລສາລາຣຕເຈຕສິກ ຫຼືໂມຈຕຸກະ ໔ ໂລພເຈຕສິກ ໑ ທິຏຖິເຈຕສິກ ໑ (ເຂົ້າປຣະກອບຈະເພາະ ດວງທີ່ ໑໗ ມານເຈຕສິກ ໑ (ເຂົ້າປຣະກອບຈະເພາະດວງທີ່ ໓)

ນັຍທີ່ ໒ ໂລພມູລຈິຕດວງທີ່ ໕ ກັບດວງທີ່ ໗ ອັນເປັນອສັງຂາຣິກຄືກັນ ມີເຈຕສິກປຣະກອບ ໑໘ ດວງໄດ້ແກ່ ອັລຌສມານາເຈຕສິກ ໑໒ (ເວັ້ນປີຕິ) ໂມຈຕຸກະ ໔ ໂລພເຈຕສິກ ໑ ທິຏຖິເຈຕສິກ ໑ (ປຣະກອບຈະເພາະດວງທີ່ ໕) ມານເຈຕສິກ (ປຣະກອບ ຈະເພາະດວງທີ່ ໗)

ນັຍທີ່ ໓ ໂລພມູລຈິຕດວງທີ່ ໒ ກັບດວງທີ່ ໔ ອັນເປັນສສັງຂາຣິກຄືກັນ ມີເຈຕສິກປຣະກອບ ໒໑ ດວງ ໄດ້ແກ່ ອັລຌສມານາເຈຕສິກ ໑໓ ໂມຈຕຸກະ ໔ ໂລພເຈຕສິກ ໑ ທິຏຖິເຈຕສິກ ໑ (ປຣະກອບຈະເພາະດວງທີ່ ໓) ມານເຈຕສິກ ໑ (ປຣະກອບຈະເພາະດວງທີ່ ໔) ຖີນເຈຕສິກ ໑ ມິທຘເຈຕສິກ ໑

ນັຍທີ່ ໔ ໂລພມູລຈິດດວງທີ່ ໕ ກັບດວງທີ່ ໗ ອັນເປັນສສັງຂາຣິກ ຄືກັນ ມີເຈຕສິກປຣະກອບ ໑໐ ດວງໄດ້ແກ່ ອັຍຍສມານາເຈຕສິກ ໑໔ (ເວັ້ນປີຕິ໗ໂມຈຕຸກະ ໔ ໂລພເຈຕສິກ ໑ ທິຕຖິເຈຕສິກ ໑ (ປຣະກອບຈະເພາະດວງທີ່ ໕) ມານເຈຕສິກ ໑ (ປຣະກອບຈະເພາະດວງທີ່ ໗) ຖີນເຈຕສິກ ໑ ມິທຣເຈຕສິກ ໑

ນັຍທີ່ ໕ ໂທສມູລຈິດດວງທີ່ ໑ ອັນເປັນອສັງຂາຣິກ ມີເຈຕສິກເຂົ້າປຣະກອບ ໑໐ ດວງ ໄດ້ແກ່ ອັຍຍສມານາເຈຕສິກ ໑໔ (ເວັ້ນປີຕິ) ໂມຈຕຸກະ ໔ ໂທຈຕຸກະ ໔

ນັຍທີ່ ໕ ໂທສມູລຈິດດວງທີ່ ໒ ອັນເປັນສສັງຂາຣິກ ມີເຈຕສິກເຂົ້າປຣະກອບ ໑໔ ດວງໄດ້ແກ່ ອັຍຍສມານາເຈຕສິກ ໑໔ (ເວັ້ນປີຕິ) ໂມຈຕຸກະ ໔ ໂທຈຕຸກະ ໔ ຖີນເຈຕສິກ ໑ ມິທຣເຈຕສິກ ໑

ນັຍທີ່ ໗ໂມຫມູລຈິດ ໒ ດວງ ມີເຈຕສິກເຂົ້າປຣະກອບເປັນຈຳນວນເທົ່າກັນ ຄື ໑໕ ດວງ ແຕ່ມີທີ່ຕ່າງກັນ ຄື

ກ. ໂມຫມູລຈິດ ດວງທີ່ ໑໐ດ້ແກ່ ວິຈິກິຈຈາສັມປຢຸຕຕຈິດຫຼືວິຈິກິຈຈາສຫຄຕຈິດ ເຈຕສິກທີ່ປຣະກອບຄື ອັຍຍສມານາເຈຕສິກ ໑໐ (ເວັ້ນອະທິໂມກຂ໌ ປີຕິ ຈັນທະ) ໂມຈຕຸກະ ໔ ວິຈິກິຈຈາເຈຕສິກ ໑ ຣວມ ໑໕ ດວງ

ຂ. ໂມຫມູລຈິດ ດວງທີ່ ໒ ໄດ້ແກ່ ອຸທັຈຈສັມປຢຸຕຕຈິດ ມີເຈຕສິກທີ່ປຣະກອບ ຄື ອັຍຍສມານາເຈຕສິກ ໑໑ (ເວັ້ນປີຕິ ຈັນທະ) ໂມຈຕຸກະ ໔ ຣວມ ໑໕ ດວງ ເທົ່າກັນກັບ ກ.

ສັພພາກຸສົລໂຢຄີເຈຕສິກ

໑໔. ສາຣາຣຕາ ຈ ຈຕຸຕາໂຣ ສມານາ ຈ ທສາປເຣ
ຈຸທ຺ທເສເຕ ປວຸຈຸຈຕຸຕິ ສພ຺ພາກຸລສໂຢຄີໂນ ໆ

ແປລຄວາມວ່າ ສັພພາກຸສົລສາຣາຣຕເຈຕສິກ ໔ ດວງ ອັຍຍສມານາເຈຕສິກ ໑໐ ດວງ ຣວມເຈຕສິກ ໑໔ ດວງນີ້ ເອີ້ນວ່າ **ສັພພາກຸສົລໂຢຄີເຈຕສິກ**

ອະທິບາຍ

ສັພພາກຸສົລໂຢຄີເຈຕສິກ ຄືເຈຕສິກທີ່ປຣະກອບກັບອກຸສົລຈິດໄດ້ທັ້ງຫມົດ (ທັ້ງ ໑໔ ດວງ)

ສັພພາກຸສົລສາຣາຣຕເຈຕສິກ ຫຼືໂມຈຕຸກະ ໔ ດວງຄື ໂມຫ ອຫິຣິກ ອໂນຕັປປ ອຸທັຈຈ

ກັບອັຍຍສມານາເຈຕສິກ ໑໐ ດວງ ຄື ຜັສສ ເວທນາ ສັຍຍາ ເຈຕນາ ເອັກຄຕາ ຊີວິຕິນທຣິຍ ມນສິກາຣ ວິຕັກວິຈາຣ ແລະ ວິຣິຍະ (ເວັ້ນອະທິໂມກະ ປີຕິ ຈັນທະ)

ຣວມເຈຕສິກ ໑໔ ດວງນີ້ ເອີ້ນວ່າ **ສັພພາກຸສົລໂຢຄີເຈຕສິກ** ຄືເປັນເຈຕສິກທີ່ປຣະກອບກັບອກຸສົລຈິດໄດ້ທັ້ງຫມົດ

ຫມາຍຄວາມວ່າ ອະກຸສົລຈິດທັ້ງ ໑໒ ດວງນັ້ນ ບໍ່ວ່າດວງນຶ່ງດວງໃດເກີດຂຶ້ນເປັນຕ້ອງມີເຈຕະສິກທັ້ງ ໑໔ ດວງນີ້ ປະກອບສເມີໄປຢ່າງແນ່ນອນ

ອະເຫຕຸກະສັງຄະຫະນັຍ

໔໑. ທຸວາທເສກາທສ ທສ ສຕ຺ຕ ຈາຕິ ຈຕຸພ຺ພິໂທ

ອຍດາຣສາເຫຕຸເກສຸ ຈິຕ຺ຕຸປ຺ປາເທສຸ ສງ຺ຄໂຫ ໆ

ແປລຄວາມວ່າ ອະເຫຕຸກະຈິຕ ໑໘ ດວງ ມີສັງຄະຫະ ໔ ນັຍ ຕາມລຳດັບ ຄື ໑໒ ນຶ່ງນັຍ, ໑໑ ນຶ່ງນັຍ, ໑໐ ນຶ່ງນັຍ, ໗ ນຶ່ງນັຍ

ອະທິບາຍ

ອະເຫຕຸກະຈິຕ ໑໘ ດວງ ມີເຈຕະສິກປະກອບໄດ້ປະເພທດຽວເທົ່ານັ້ນ ຄື ອັລຍະສມານາເຈຕະສິກ ແລະອັລຍະສມານາເຈຕະສິກ ກໍເຂົ້າປະກອບກັບອະເຫຕຸກະຈິຕໄດ້ເປັນຢ່າງຫລາຍພຽງ ໑໒ ດວງເທົ່ານັ້ນ ສ່ວນອີກດວງ ຄື ສັນທະເຈຕະສິກເຂົ້າປະກອບກັບ ອະເຫຕຸກະຈິຕ ດ້ວຍບໍ່ໄດ້ເລີຍເປັນເດັດຂາດແນ່ນອນ

ເຫຕຸທີ່ສັນທະເຈຕະສິກບໍ່ປະກອບກັບອະເຫຕຸກະຈິຕເລີຍນັ້ນ ເພາະວ່າສັນທະເຈຕະສິກນີ້ມີລັກສະນະ ຄື ຄວາມພໍໃຈໃນອາຣົມ ມີຄວາມປັຕຖນາຈະກະທຳ ມີຄວາມປລົງໃຈກະທຳ ສ່ວນອະເຫຕຸກະຈິຕນັ້ນເປັນຈິຕທີ່ແມ້ວ່າຈະປລົງໃຈກະທຳຫຼືບໍ່? ກໍຕ້ອງເກີດ ເຊັ່ນ ຈັກຂຸວິນຍານະຈິຕ ມີຫນ້າທີ່ເຫັນຮູປ ບໍ່ວ່າຮູປນັ້ນຈະສວຍງາມຢາກເຫັນຫຼືເປັນຮູປທີ່ເປັນຕາຊັງເປັນຕາຢ້ານ ບໍ່ຢາກເຫັນ ເມື່ອຮູປນັ້ນ ມາປາກົຍຈະເພາະຫນ້າ ກໍຈະຕ້ອງເຫັນ ຈະເລືອກເຫັນຈະເພາະຮູປທີ່ສວຍງາມບໍ່ໄດ້ ທາງໂສຕະວິນຍານະຈິຕ ມີຫນ້າທີ່ໄດ້ຍິນສຽງກໍ ເຊັ່ນກັນ ຈະເລືອກໄດ້ຍິນແຕ່ສຽງທີ່ມ່ວນ ໆ ມ່ວນຫູ ກໍບໍ່ໄດ້ ຊຶ່ງຜິດກັບຈິຕອື່ນທີ່ມີສັນທະເຈຕະສິກປະກອບ ເຊັ່ນໂທສະຈິຕ ເປັນຕົ້ນ ເມື່ອໄດ້ເຫັນສິ່ງທີ່ບໍ່ດີ ເຊັ່ນເຫັນສຸນັຂຂີ້ເຮື້ອນ ຜູ້ເຫັນພໍໃຈປລົງໃຈຈະໃຫ້ເກີດຄວາມຊັງກໍໄດ້ ຫຼືຈະເລືອກໃນທາງບໍ່ຊັງກໍໄດ້ ຖ້າເລືອກໃນທາງຊັງ ໂທສະຈິຕກໍເກີດ ຖ້າເລືອກໃນທາງສັງສາຣວ່າເປັນກັມມ໌ຂອງສັຕວ໌ນັ້ນ ໂທສະຈິຕກໍບໍ່ເກີດ ແຕ່ກັບເປັນໂສກະຈິຕ ດັ່ງນັ້ນສັນທະເຈຕະສິກຈຶ່ງບໍ່ເກີດຮ່ວມກັບອະເຫຕຸກະຈິຕເລີຍ ເພາະເປັນຈິຕທີ່ເລືອກບໍ່ໄດ້ຕາມໃຈມັກ

ອະເຫຕຸກະຈິຕ ໑໘ ດວງ ມີສັງຄະຫະ ໔ ນັຍ ຄື

ນັຍທີ່ ໑ ຫະສິຕຸປປາທະຈິຕ ໑ ດວງ ອັນເປັນຈິຕຍິ້ມແຍ້ມຂອງພຣະອະຣະຫັນຕ໌ໂດຍຈະເພາະ ບຸຄຄົລອື່ນໃດບໍ່ມີຈິຕດວງນີ້ ຫະສິຕຸປປາທະມີເຈຕະສິກປະກອບ ໑໒ ດວງ ໄດ້ແກ່ ອັລຍະສມານາເຈຕະສິກ ໑໒ (ເວັ້ນສັນທະ)

ນັຍທີ່ ໒ ມະໂນທະວາຣາວັຊຊະນະຈິຕ ໑ ດວງ (ເອີ້ນອີກຊື່ນຶ່ງຕາມກິຈ ຫຼືຫນ້າທີ່ການງານວ່າ ໂວຍັພພະນະຈິຕກໍໄດ້) ແລະ ໂສມນັສສັນຕີຣະຈິຕ ໑ ດວງ ຈິຕ ໒ ດວງນີ້ ມີເຈຕະສິກປະກອບ ໑໑ ດວງ ເທົ່າກັນ ແຕ່ມີທີ່ຕ່າງກັນ ຄື

ເຈຕະສິກທີ່ປະກອບກັບມະໂນທະວາຣາວັຊຊະນະຈິຕ ໄດ້ແກ່ ອັລຍະສມານາເຈຕະສິກ ໑໑ (ເວັ້ນປີຕິເຈຕະສິກ ແລະສັນທະເຈຕະສິກ)

ສ່ວນເຈຕສິກທີ່ປຣະກອບກັບໂສມນັສສັນຕີຣິຈິຕ ໄດ້ແກ່ ອັຜຜສມານາເຈຕສິກ ໑໑ ແຕ່ເວັ້ນວີຣິຍເຈຕສິກ ກັບຈັນທເຈຕສິກ

ນັຍທີ່ ໓ ມໂນທາຕຸ ໓ ດວງ (ປັຜຈທວາຣາວັຊຊນຈິຕ ໑ ສັມປຕິຈຈັນນຈິຕ ໒ ດວງ) ກັບອເຫຕຸກປຕິສົນຈິຕ ໒ ດວງ (ຄືອຸເປກຂາສັນຕີຈິຕ ໓) ຣວມຈິຕ ໕ ດວງນີ້ ມີເຈຕສິກປຣະກອບໄດ້ ໑໐ ດວງ ຄື ອັຜຜສມານາເຈຕສິກ ໑໐ (ເວັ້ນວີຣິຍ ປີຕິ ຈັນທ)

ນັຍທີ່ ໔ ທວິປັຜຈວິຜຜານ ໑໐ ດວງ ມີເຈຕສິກປຣະກອບໄດ້ຈຳພວກດຽວ ຄື ສັພພຈິຕຕສາທາຣນເຈຕສິກທັ້ງ ໗ ດວງ ເທົ່ານັ້ນເອງ

໒໔. ອເຫຕຸເກສຸ ສພ຺ພຕ຺ຖ ສຕ຺ຕ ເສສາ ຢຖາຣຫໍ
ອີຕິ ວິຕ຺ຖາຣໂຕ ວຸຕ຺ໂຕ ເຕຕ຺ຕິສວິຣ ສງ຺ຄໂຫ ໆ

ແປລຄວາມວ່າ ອເຫຕຸກຈິຕ ໑໘ ດວງນີ້ ຍ່ອມປຣະກອບດ້ວຍ ສັພພຈິຕຕສາທາຣນເຈຕສິກທັ້ງ ໗ ດວງສເມີ ສ່ວນປກິຣຜກເຈຕສິກ ໖ ດວງນັ້ນ ຍ່ອມປຣະກອບກັບຈິຕຕາມທີ່ຈະປຣະກອບໄດ້ ເມື່ອນັບໂດຍພິສດາຣຍ່ອມໄດ້ສັງຄຫນັຍ ໓໓ ນັຍ ດັ່ງໄດ້ກ່າວມາແລ້ວ

໒໕. ອິຕ຺ຖໍ ຈິຕ຺ຕາວິປຸຕ຺ຕານໍ ສມ຺ປໂຢຄຍ຺ຸຈ ສງ຺ຄຫໍ
ຜຕ຺ວາ ເພທໍ ຢຖາໂຢຄໍ ຈິຕ຺ເຕນ ສມມຸທ຺ທິເສ ໆ

ແປລຄວາມວ່າ ຕາມທີ່ໄດ້ກ່າວມາ ຫາກໍ່ຮູ້ສັມປໂຢຄນັຍແລະສັງຄຫນັຍຂອງເຈຕສິກເສັຽກ່ອນ ແລ້ວຈຶ່ງຈຳແນກປຣະເພທ ຂອງຈິຕແລະ ເຈຕສິກທີ່ປຣະກອບກັນ ຕາມທີ່ຈະເຂົ້າກັນໄດ້ເຖີດ

ອະທິບາຍ

ສັມປໂຢຄນັຍ ຫມາຍເຖິງນັຍທີ່ສແດງວ່າ ເຈຕສິກແຕ່ລະດວງເຂົ້າປຣະກອບກັບຈິຕໃດແດ່ສັງຄຫນັຍ ຫມາຍເຖິງນັຍທີ່ສແດງວ່າຈິຕແຕ່ລະດວງມີເຈຕສິກໃດມາຮ່ວມສົງເຄາະຫ໌ບ້າງ

ສັມປໂຢຄນັຍ ມີ ໑໖ ນັຍ ຄື

ສັພພຈິຕຕສາທາຣນເຈຕສິກ	໗ ດວງ	ໄດ້ສັມປໂຢຄ ໑ ນັຍ
ປກິຣຜກເຈຕສິກ	໖ ດວງ	ໄດ້ສັມປໂຢຄ ໖ ນັຍ
ອກຸສົລເຈຕສິກ	໑໔ ດວງ	ໄດ້ສັມປໂຢຄ ໕ ນັຍ
ໂສພຜເຈຕສິກ	໒໕ ດວງ	ໄດ້ສັມປໂຢຄ ໔ ນັຍ
ຣວມ	໕໒ ດວງ	ໄດ້ສັມປໂຢຄ ໑໖ ນັຍ

ສັງຄະຫະນັຍ ມີ ໓໓ ນັຍ ຄື

ໂລກຸຕຕະຈິຕ	໔໐ ດວງ ມີສັງຄະຫະ ໕ ນັຍ
ມະຫັຄຄະຕະຈິຕ	໒໗ ດວງ ມີສັງຄະຫະ ໕ ນັຍ
ກາມາວະຈະໂສພະນະຈິຕ	໒໔ ດວງ ມີສັງຄະຫະ ໑໒ ນັຍ
ອະກຸສົລຈິຕ	໑໒ ດວງ ມີສັງຄະຫະ ໗ ນັຍ
ອະເຫຕຸກະຈິຕ	໑໘ ດວງ ມີສັງຄະຫະ ໔ ນັຍ
ຣວມຈິຕ	໑໒໑ ດວງ ມີສັງຄະຫະ ໓໓ ນັຍ

ອວສານຄາຖາ ປຣິຈເສທທີ່ ໒

ອິຈ຺ຈານຸຣຸທ຺ທຣຈິເຕ ອະພິທມ຺ມຕ຺ຖສງ຺ຄເຫ

ທຸຕິເຍ ປຣິຈ຺ເຊໂທຍ໌ ສມາເສເນວ ນິຕ຺ຖິໂຕ ໆ



ໃນປຣິຈເສທທີ່ ໒ (ຊື່ ເຈຕະສິກສັງຄະຫະວິພາຄ) ໃນປກຣຕ໌ ອັນຣວມຣວບ ຊຶ່ງອັຖແຫ່ງອະພິທັມມ໌ ທີ່ພຣະອະນຸຣຸທຣາຈາຕຍ໌ ຣຈນາໄວ້ ຈົບແລ້ວໂດຍຫຍໍ້ແຕ່ພຽງເທົ່ານັ້ນ...

ຂໍອະນຸໂມທະນາ....ຂໍໃຫ້ຈເຣີນໃນທັມມ໌ຍິ່ງໆ ຂຶ້ນໄປ ....